# ພຣະທັມ 2 ຊາມູເອນ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |


## ຊາມູເອນ ສະບັບທີສອງ

2 SAMUEL

### 1 ດາວິດຮູ້ຂ່າວການຕາຍຂອງຊາອູນ

David Mourns for Saul and Jonathan

1 ໃນເວລາທີ່ຊາອູນເສັຽຊີວິດນັ້ນ ພໍດີດາວິດຜູ້ຮົບຊະນະພວກອາມາເລກໄດ້ກັບມາເມືອງຊິກລາກ ແລະພັກຢູ່ທີ່ນັ້ນສອງ
ວັນ
2 ເຂົາໄດ້ຈີກເສື້ອຜ້າຂອງຕົນ ແລະເອົາດິນໃສ່ຫົວ ເພາະຄວາມເສັຽໃຈ ເມື່ອມາຮອດເຂົາຈຶ່ງພົບດາວິດ ແລະກົ້ມຂາບ
ລົງດ້ວຍຄວາມນັບຖື
3 ດາວິດຈຶ່ງຖາມເຂົາວ່າ, “ເຈົ້າມາແຕ່ໃສ” ເຂົາຕອບວ່າ, “ຂ້າພະເຈົ້າຫນີມາຈາກຄ້າຍທະຫານອິສຣາເອນ”
4 ດາວິດຈຶ່ງເວົ້າວ່າ, “ບອກຂ້ອຍເບິ່ງດູວ່າມີຫຍັງເກີດຂຶ້ນ?” ເຂົາເວົ້າຂຶ້ນວ່າ, “ທະຫານຂອງພວກເຮົາໄດ້ປົບຫນີຈາກສະ
ຫນາມຮົບ ເພາະເຫັນວ່າຫລາຍຄົນໄດ້ຖືກຂ້າ ຮວມທັງຊາອູນແລະໂຢນາທານລູກຊາຍຂອງພຣະອົງດ້ວຍ”
5 ດາວິດຖາມເຂົາອີກວ່າ, “ເຫດໃດເຈົ້າຈຶ່ງຮູ້ວ່າກະສັດຊາອູນ ແລະໂຢນາທານຕາຍແລ້ວ?”
6 ຊາຍຫນຸ່ມຄົນນັ້ນກໍຕອບວ່າ, “ພໍດີໃນເວລານັ້ນ ຂ້າພະເຈົ້າໄດ້ຢູ່ເທິງພູກິນໂບອາ ຂ້າພະເຈົ້າໄດ້ເຫັນກະສັດຊາອູນກຳ
ລັງຢືນຄ້ຳຫອກຂອງພຣະອົງຢູ່ ໃນເວລານັ້ນທະຫານຣົດຮົບ ແລະທະຫານມ້າຂອງສັດຕຣູກຳລັງແລ່ນເຂົ້າມາໃກ້ພຣະ
ອົງ
7 ແລ້ວພຣະອົງໄດ້ຫັນມາເຫັນຂ້າພະເຈົ້າຈຶ່ງຮ້ອງໃສ່ຂ້າພະເຈົ້າ ຂ້າພະເຈົ້າກໍທູນຕອບວ່າ “ໂດຍ ຂ້ານ້ອຍ”
8 ພຣະອົງຖາມວ່າ, “ເຈົ້າແມ່ນໃຜ?”  ຂ້າພະເຈົ້າບອກພຣະອົງຂ້າພະເຈົ້າເປັນຄົນອາມາເລກ
9 ພຣະອົງກໍກ່າວຕໍ່ໄປວ່າ ເຮົາໄດ້ຮັບບາດເຈັບຢ່າງສາຫັດ ເຮົາໃກ້ຈະຕາຍແລ້ວ ເຈົ້າມາພີ້ແດ່ ແລະຂ້າເຮົາຖິ້ມເສັຽ
10 ດັ່ງນັ້ນ ຂ້າພະເຈົ້າຈຶ່ງຂຶ້ນໄປຫາພຣະອົງ ແລະຂ້າພຣະອົງ ເພາະຂ້າພະເຈົ້າຮູ້ວ່າ ໃນຂນະທີ່ພຣະອົງລົ້ມລົງນັ້ນ ພຣະ
ອົງກໍຈະຕ້ອງຕາຍ ແລ້ວຂ້າພະເຈົ້າໄດ້ປົດເອົາກະໂຈມອອກຈາກຫົວຂອງພຣະອົງ ແລະຖອດເອົາສາຍແຂນຂອງພຣະ
ອົງ ນຳມາມອບໃຫ້ທ່ານນີ້ແຫລະ”
11 ເມື່ອໄດ້ຍິນດັ່ງນັ້ນ ດາວິດຈຶ່ງຈີກເສື້ອຜ້າຂອງຕົນດ້ວຍຄວາມເສັຽໃຈ ແລະທະຫານຂອງທ່ານທຸກຄົນກໍກະທຳ
ເຊັ່ນດຽວກັນ
12 ພວກເຂົາໄດ້ອົດອາຫານເພື່ອໄວ້ທຸກໃຫ້ແກ່ຊາອູນ ແລະໂຢນາທານຈົນເຖິງຄ່ຳ ແລະເພື່ອຊາວອິສຣາເອນຊຶ່ງເປັນໄພ່
ພົນຂອງພຣະຜູ້ເປັນເຈົ້າ ເພາະວ່າມີຫລາຍຄົນໄດ້ຖືກຂ້າຢູ່ໃນສະຫນາມຮົບ
13 ດາວິດໄດ້ຖາມຊາຍຫນຸ່ມທີ່ນຳຂ່າວມາບອກທ່ານນັ້ນວ່າ, “ເຈົ້າເປັນຄົນຊາດໃດ” ເຂົາຈຶ່ງຕອບວ່າ, “ຂ້າພະເຈົ້າເປັນ
ຄົນອາມາເລກ ແຕ່ຂ້າພະເຈົ້າຢູ່ໃນປະເທດຂອງທ່ານ”
14 ດາວິດໄດ້ຖາມອີກວ່າ, “ເປັນຫຍັງເຈົ້າຈຶ່ງກ້າຂ້າກະສັດທີ່ພຣະຜູ້ເປັນເຈົ້າຊົງເລືອກໄວ້?”

15 ແລ້ວດາວິດກໍເອີ້ນເອົາທະຫານຂອງທ່ານຜູ້ນຶ່ງອອກມາ ແລະບອກວ່າ, "ຈົ່ງຂ້າມັນຖິ້ມເສັຽ" ທະຫານຄົນນັ້ນກໍໃຊ້ດາບ
ຟັນຊາຍຫນຸ່ມອາມາເລກຄົນນັ້ນໃຫ້ຕາຍ
16 ແລ້ວດາວິດໄດ້ເວົ້າວ່າ, "ຊາຍຫນຸ່ມເອີຍ ໂທດນີ້ເຈົ້າໄດ້ນຳມາສູ່ໂຕເຈົ້າເອງ ເມື່ອເຈົ້າຍອມວ່າເຈົ້າໄດ້ຂ້າຜູ້ທີ່ພຣະຜູ້
ເປັນເຈົ້າຊົງເລືອກໄວ້ເປັນກະສັດນັ້ນ ເຈົ້າກໍຈະມີໂທດແລ້ວ"

**ດາວິດໂສກເສົ້າເສັຽໃຈ ຍ້ອນຊາອູນແລະໂຢນາທານ**

17 ດາວິດໄດ້ຮ້ອງເພງໂສກເສົ້ານີ້ເພື່ອໄວ້ອາລັຍ ຊາອູນແລະໂຢນາທານ
18 (ທ່ານໄດ້ສັ່ງໃຫ້ສອນເພງນີ້ແກ່ຊາວຢູດາ ເພາະນີ້ໄດ້ບັນທຶກໄວ້ໃນປື້ມຂອງ ຢາຊາ) ວ່າ,
19 "ຜູ້ນຳທີ່ຍອດຢ້ຽມຂອງພວກເຮົາໄດ້ຕາຍຢູ່ເທິງພູນ້ອຍ ອິສຣາເອນ ທະຫານຜູ້ເກັ່ງກ້າຂອງພວກເຮົາໄດ້ລົ້ມລົງ
20 ຢ່າບອກເຣື່ອງນີ້ແກ່ຊາວເມືອງກາດ ຫລືຕາມຖນົນຫົນທາງໃນເມືອງອັສເກໂລນ ຢ່າທຳໃຫ້ຜູ້ຍິງເມືອງຟີລິສຕິນດີໃຈ
ຢ່າໃຫ້ພວກລູກສາວຂອງຄົນຊົ່ວຮ້າຍຊົມຊື່ນຍິນດີ
21 ຂໍຢ່າໃຫ້ຝົນ ຫລືນ້ຳຫມອກຕົກລົງໃສ່ພູນ້ອຍກິນໂບອາ ຂໍໃຫ້ທົ່ງນາທີ່ນັ້ນແຫ້ງແລ້ງຢູ່ເລື້ອຍໆ ຜູ້ກ້າຫານໄດ້ປະຖິ້ມ
ແຜ່ນເຫລັກຕ້ານທານຂອງຕົນໄວ້ ໃນບ່ອນນັ້ນຢ່າງຫນ້າລະອາຍ ແຜ່ນເຫລັກຕ້ານທານຂອງຊາອູນກໍເຂົ້າຂີ້ຫມ້ຽງ
22 ຄັນທະນູຂອງໂຢນາທານເປັນຫນ້າຢ້ານຫລາຍ ດາບຂອງຊາອູນບໍ່ມີຄວາມເມດຕາປານີ ໄດ້ຂ້າສັດຕຣູຜູ້ເກັ່ງກ້າ
23 ຊາອູນ ແລະໂຢນາທານເປັນຄົນປະເສີດ ແລະຫນ້າຮັກຫລາຍ ພຣະອົງຊົງຢູ່ດ້ວຍກັນແລະຕາຍດ້ວຍກັນ ເປັນຄົນ
ວ່ອງໄວເຫມືອນນົກອິນຊີ ແລະແຂງແຮງເຫມືອນສິງ
24 ຍິງຊາວອິສຣາເອນເອີຍ ຈົ່ງພາກັນໄວ້ທຸກໃຫ້ຊາອູນ ພຣະອົງໄດ້ໃຫ້ພວກເຈົ້ານຸ່ງຫົ່ມເສື້ອຍາວສີແດງເຂັ້ມ ທັງໃຫ້ປະ
ດັບເພັດພອຍແລະຄຳໃສ່ຕົວຂອງເຈົ້າ
25 ທະຫານຜູ້ເກັ່ງກ້າກໍເສັຽໄຊ ພວກເຂົາໄດ້ຖືກຂ້າໃນສະຫນາມຮົບ ສ່ວນໂຢນາທານກໍນອນຕາຍຢູ່ເທິງພູນ້ອຍ
26 ໂຢນາທານອ້າຍຂອງເຮົາເອີຍ ຂ້າພະເຈົ້າໄວ້ທຸກແກ່ທ່ານ ຄວາມຮັກທີ່ຂ້າພະເຈົ້າມີຕໍ່ທ່ານນັ້ນຫລວງຫລາຍ ຄວາມ
ຮັກທີ່ທ່ານມີຕໍ່ຂ້າພະເຈົ້າກໍປະເສີດຫລາຍເຫນືອກວ່າຄວາມຮັກຂອງພວກຜູ້ຍິງ
27 ທະຫານຜູ້ເກັ່ງກ້າໄດ້ເສັຽໄຊ ອາວຸດຂອງພວກເຂົາໃຊ້ການຫຍັງບໍ່ໄດ້

## 2 ຕັ້ງດາວິດເປັນກະສັດເຫນືອຢູດາ

David Anointed King of Judah

1 ຄັນເຣື່ອງນີ້ສິ້ນສຸດລົງໄປແລ້ວ ດາວິດຈຶ່ງທູນຖາມພຣະເຈົ້າວ່າ, "ສົມຄວນທີ່ຂ້າພຣະອົງຈະຂຶ້ນໄປຍັງຫົວເມືອງນຶ່ງ
ເມືອງໃດໃນຢູດາຫລືບໍ?" ແລະພຣະຜູ້ເປັນເຈົ້າຊົງຕອບທ່ານວ່າ, "ຈົ່ງຂຶ້ນໄປເຖີດ" ດາວິດທູນຖາມວ່າ, "ຄວນທີ່ຂ້າພ
ຣະອົງຈະຂຶ້ນໄປທີ່ໃດ?" ພຣະອົງຊົງກ່າວວ່າ, "ເມືອງເຮໂບຣນ"
2 ດາວິດຈຶ່ງຂຶ້ນໄປທີ່ນັ້ນພ້ອມກັບພັຣຍາທັງສອງຂອງທ່ານດ້ວຍຄື ອາຮີໂນອາມ ຊາວຢິສເຣເອນ ແລະອາບີກາອີນແມ່
ຫມ້າຍຂອງນາບານ ຊາວກາຣ໌ເມ
3 ດາວິດກໍນຳຄົນທີ່ຢູ່ກັບທ່ານຂຶ້ນໄປທຸກຄົນພາຄອບຄົວໄປນຳ ແລະເຂົາທັງຫລາຍກໍຢູ່ໃນຫົວເມືອງຂອງເຮໂບຣນ
4 ຄົນຢູດາກໍພາກັນມາເຈີມຕັ້ງດາວິດໄວ້ເປັນພຣະຣາຊາເຫນືອເຊື້ອສາຍຢູດາ ເມື່ອມີຄົນມາທູນດາວິດວ່າ, "ຊາວຢາເບ
ສກີເລອາດເປັນຜູ້ທີ່ຝັງພຣະສົບຊາອູນໄວ້"
5 ດາວິດກໍມີຮັບສັ່ງໃຫ້ຜູ້ນຳຂ່າວໄປຫາຊາວຢາເບສກີເລອາດນັ້ນ ເວົ້າກັບເຂົາວ່າ, "ຂໍພຣະຜູ້ເປັນເຈົ້າຊົງອວຍພຣະ
ພອນແກ່ທ່ານທັງຫລາຍໃນການທີ່ທ່ານທັງຫລາຍໄດ້ສຳແດງຄວາມຈົ່ງຮັກພັກດີຢ່າງນີ້ຕໍ່ຊາອູນເຈົ້ານາຍຂອງທ່ານ
ແລະໄດ້ຝັງສົບພຣະອົງໄວ້
6 ບັດນີ້ຂໍພຣະຜູ້ເປັນເຈົ້າຊົງສຳແດງຄວາມຮັກຫມັ້ນຄົງ ແລະຄວາມທ່ຽງທັມແກ່ທ່ານ ແລະຂ້າພະເຈົ້າຈະກະທຳຄວາມ
ດີຕໍ່ທ່ານທັງຫລາຍເພາະທ່ານໄດ້ກະທຳການນີ້

7 ເພາະສະນັ້ນ ຂໍໃຫ້ມືຂອງທ່ານທັງຫລາຍເຂັ້ມແຂງ ແລະຂໍໃຫ້ທ່ານກ້າຫານເຖີດ ເພາະວ່າຊາອູນເຈົ້ານາຍຂອງທ່ານ
ສິ້ນພຣະຊົນເສັຽແລ້ວ ແລະເຊື້ອສາຍຢູດາໄດ້ເຈີມຕັ້ງຂ້າພະເຈົ້າໄວ້ເປັນກະສັດເຫນືອເຂົາທັງຫລາຍ

**ອິສໂບເຊທຂຶ້ນເປັນກະສັດແຫ່ງອິສຣາເອນ**

Ishbosheth King of Israel

8 ຝ່າຍອັບເນີບຸດເນີແມ່ທັບຂອງກອງທັບຊາອູນໄດ້ພາອິສໂບເຊທ ບຸດຊາຍຂອງຊາອູນຂ້າມໄປທີ່ເມືອງມາຮານາອິມ
9 ແລະໄດ້ສະຖາປະນາທ່ານໃຫ້ເປັນກະສັດເຫນືອເມືອງກິເລອາດ ແລະຄົນອາຊູຣ໌ ແລະຄົນຢີສເຣເອນ ແລະຄົນເອຟ
ຣາອິມ ແລະຄົນເບັນຢາມິນ ແລະຄົນອິສຣາເອນທັງຫມົດ
10 ເມື່ອອິສໂບເຊທບຸດຊາຍຂອງຊາອູນເລີ້ມປົກຄອງເຫນືອອິສຣາເອນນັ້ນມີພຣະຊົນຢູ່ສີ່ສິບປີ ຊົງປົກຄອງຢູ່ສອງປີ ແຕ່
ເຊື້ອສາຍຂອງຢູດາກໍຕິດຕາມດາວິດ
11 ເວລາທີ່ດາວິດຊົງເປັນກະສັດເຫນືອເຊື້ອສາຍຢູດາໃນເຮໂບຣນນັ້ນເປັນຈຳນວນເຈັດປີກັບຫົກເດືອນ

**ເສິກລະຫວ່າງອິສຣາເອນແລະຢູດາ**

The Battle of Gibeon

12 ອັບເນີ ບຸດເນີ ແລະພວກຂ້າຣາຊການທະຫານຂອງອິສໂບເຊທ ບຸດຊາຍຂອງຊາອູນໄດ້ອອກຈາກມາຮານາອິມໄປຍັງ
ເມືອງກິເບໂອນ
13 ແລະໂຢອາບ ບຸດນາງເຊຣູຢາກັບພວກຂ້າຣາຊການທະຫານຂອງດາວິດກໍອອກໄປພົບກັບເຂົາທີ່ສະນ້ຳເມືອງກິເບ
ໂອນ ແລະເຂົາ ທັງຫລາຍກໍນັ່ງຢູ່ທີ່ຂອບສະ ພວກນຶ່ງຢູ່ທີ່ຂອບສະຂ້າງນີ້ ອີກພວກນຶ່ງຢູ່ຂອບສະຂ້າງນັ້ນ
14 ອັບເນີ ຈຶ່ງເວົ້າກັບໂຢອາບວ່າ, “ຂໍໃຫ້ພວກຄົນຫນຸ່ມລຸກຂຶ້ນຮົບຫລິ້ນກັນໃຫ້ເຮົາເບິ່ງເຖີດ” ແລະໂຢອາບຕອບວ່າ, “ໃຫ້
ເຂົາລຸກຂຶ້ນຫລິ້ນໂລດ”
15 ເຂົາກໍລຸກຂຶ້ນໄປຕາມທີ່ນັບໄວ້ ຝ່າຍເບັນຢາມິນ ແລະຝ່າຍອິສໂບເຊທ ບຸດຊາຍຂອງຊາອູນມີສິບສອງຄົນ ແລະຂ້າຣາ
ຊການທະຫານຂອງດາວິດກໍມີສິບສອງຄົນ
16 ຕ່າງກໍຈັບຫົວຄູ່ຕໍ່ສູ້ ແລະປັກດາບເຂົ້າທີ່ສີ່ຂ້າງຂອງຄູ່ຕໍ່ສູ້ ລົ້ມຕາຍດ້ວຍກັນຫມົດ ເຂົາຈຶ່ງເອີ້ນທີ່ນັ້ນວ່າ “ເຮນກາດຮັສ
ຊູຣິມ” ຊຶ່ງຢູ່ໃນກິເບໂອນ
17 ການສູ້ຮົບໃນວັນນັ້ນດຸເດືອດ ອັບເນີແລະພວກຄົນອິສຣາເອນກໍພ່າຍແພ້ຕໍ່ຂ້າຣາຊການທະຫານຂອງດາວິດ
18 ບຸດທັງສາມຂອງນາງເຊຣູຢາກໍຢູ່ທີ່ນັ້ນຄື ໂຢອາບ ອາບີຊັຍ ແລະອາຊາເຮນ ຝ່າຍອາຊາເຮນນັ້ນມີຕີນໄວຢ່າງກັບ
ເຍືອງ
19 ແລະອາຊາເຮນກໍໄລ່ຕິດຕາມອັບເນີໄປ ເມື່ອຕາມໄປນັ້ນກໍບໍ່ໄດ້ລ້ຽວທາງຂວາມື ຫລືທາງຊ້າຍມືຈາກການໄລ່ຕາມ
ອັບເນີ
20 ອັບເນີຫລຽວມາເບິ່ງຈຶ່ງເວົ້າວ່າ, “ນັ້ນອາຊາເຮນແມ່ນບໍ?” ເຂົາຕອບວ່າ, “ຂ້າເອງ”
21 ອັບເນີຈຶ່ງບອກເຂົາວ່າ, “ຈົ່ງລ້ຽວໄປທາງຂວາ ຫລືທາງຊ້າຍ ແລະຈັບເອົາຄົນຫນຸ່ມຄົນໃດຄົນນຶ່ງ ແລ້ວກໍຍຶດເອົາສິ່ງ
ຂອງຂອງເຂົາໄປ” ແຕ່ອາຊາເຮນບໍ່ລ້ຽວຈາກໄລ່ຕາມອັບເນີ
22 ອັບເນີຈຶ່ງບອກອາຊາເຮນອີກຄັ້ງນຶ່ງວ່າ, “ຈົ່ງຫັນກັບຈາກການຕາມຂ້າເສັຽເຖີດ ເປັນຫຍັງຈຶ່ງຢາກໃຫ້ຂ້າຟາດເຈົ້າລົງ
ດິນ ແລ້ວຂ້າຈະເງີຍຫນ້າຂຶ້ນເບິ່ງໂຢອາບອ້າຍຂອງເຈົ້າໄດ້ຢ່າງໃດ?”
23 ແຕ່ເຂົາກໍປະຕິເສດບໍ່ຍອມຫັນກັບ ເພາະສະນັ້ນ ອັບເນີກໍເອົາໂຄນຫອກແທງທ້ອງອາຊາເຮນ ຫອກກໍຊອດອອກຂ້າງ
ຫລັງຂອງເຂົາ ເຂົາກໍລົ້ມລົງຕາຍຢູ່ທີ່ນັ້ນ ແລະທຸກຄົນຊຶ່ງມາເຫັນບ່ອນທີ່ອາຊາເຮນລົ້ມຕາຍກໍຢືນນິ້ງຢູ່
24 ແຕ່ໂຢອາບກັບອາບີຊັຍໄລ່ຕາມອັບເນີໄປ ຕາເວັນກໍຕົກເມື່ອເຂົາມາເຖິງຈ້າຍພູອັມມາ ຊຶ່ງຢູ່ຊື່ກີຢາ ຕາມທາງທີ່ຈະ
ໄປຖິ່ນກັນດານເມືອງກິເບໂອນ
25 ແລະຄົນເບັນຢາມິນກໍຮວມກັນຕາມອັບເນີໄປເປັນກຸ່ມດຽວກັນຕັ້ງຢູ່ທີ່ຍອດພູແຫ່ງນຶ່ງ

26 ແລ້ວອັບເນີຮ້ອງຖາມໂຢອາບວ່າ, “ຈະໃຫ້ດາບກິນເລື້ອຍໄປຫລື ທ່ານບໍ່ຮູ້ຫລືວ່າຕອນປາຍມີກໍຂົມ ອີກເທິງປານໃດທ່ານຈຶ່ງຈະສັ່ງຄົນຂອງທ່ານໃຫ້ຢຸດໄລ່ຕາມພີ່ນ້ອງຂອງເຂົາແລະໂຢອາບຈຶ່ງກ່າວວ່າ, “ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ສັນໃດ ຖ້າທ່ານບໍ່ເວົ້າຂຶ້ນພວກທະຫານກໍຈະເລີກໄລ່ຕາມພວກພີ່ນ້ອງຂອງເຂົາມື້ອື່ນເຊົ້າ“

27 ໂຢອາບຈຶ່ງເປົ່າເຂົາສັດຂຶ້ນ ຄົນທັງປວງກໍຢຸດ ບໍ່ໄລ່ຕາມອິສຣາເອນອີກ ແລະບໍ່ສູ້ຮົບກັນອີກ

28 ອັບເນີກັບຄົນຂອງທ່ານກໍເດີນທາງຕລອດຄືນນັ້ນໃນອາຣາບາ ເຂົາຂ້າມແມ່ນ້ຳຈໍແດນ ແລະເດີນໄປຕາມຮ່ອມພູກໍມາເຖິງມາຮານາອິມ

29 ໂຢອາບກໍກັບຈາກໄລ່ຕາມອັບເນີ ແລະເມື່ອທ່ານຮວບຮວມພົນເຂົ້າດ້ວຍກັນແລ້ວ ຂ້າຣາຊການທະຫານຂອງດາວິດກໍຂາດໄປສິບເກົ້າຄົນບໍ່ນັບອາຊາເຮນ

30 ແຕ່ຂ້າຣາຊການທະຫານຂອງດາວິດໄດ້ຂ້າຄົນເບັນຢາມິນ ແລະຄົນຂອງອັບເນີຕາຍໄປສາມຮ້ອຍຫົກສິບຄົນ

31 ເຂົາກໍຍົກສົບອາຊາເຮນໄປຝັງໄວ້ໃນອຸບໂມງບິດາຂອງເຂົາຊຶ່ງຢູ່ທີ່ເມືອງເບັດເລເຮັມ ໂຢອາບແລະຄົນຂອງທ່ານກໍເດີນທາງຕລອດຄືນໄປຮຸ່ງແຈ້ງທີ່ເມືອງເຮໂບຣນ

## 3

Abner Defects to David

1 ມີສົງຄາມລະຫວ່າງເຊື້ອສາຍຂອງຊາອູນກັບເຊື້ອສາຍຂອງດາວິດຢູ່ນານ ແລະດາວິດກໍເຂັ້ມແຂງຍິ່ງຂຶ້ນ ຝ່າຍເຊື້ອສາຍຂອງຊາອູນກໍເສື່ອມກຳລັງລົງທຸກຂນະ

**ບຸດຊາຍຂອງດາວິດຜູ້ເກີດທີ່ເມືອງເຮໂບຣນ**

(1 ຂຄວ 3:1-4)

2 ດາວິດຊົງມີບຸດຊາຍເກີດຫລາຍຄົນທີ່ເມືອງເຮໂບຣນ ບຸດຫົວປີຊື່ ອັມໂນນ ບຸດອາຮີໂນອາມ ຊາວຢິສເຣເອນ

3 ຄົນທີສອງຊື່ ຄີເລອາບ ບຸດນາງອາບີກາອີນແມ່ຫມ້າຍຂອງນາບານຊາວກາຣ໌ເມນ ແລະຄົນທີສາມຊື່ ອັບຊາໂລມ ບຸດນາງມາອາກາ ຣາຊທິດາຂອງຕັນມັຍກະສັດເມືອງເກຊູຣ໌

4 ຄົນທີສີ່ຊື່ ອາໂດນີຢາ ບຸດຂອງຮັກກິດ ຄົນທີຫ້າຊື່ ເຊຟາຕີຢາບຸດນາງອາບີຕັນ

5 ຄົນທີຫົກຊື່ ອິທເຣອາມ ບຸດນາງເອກລາ ເມັຽຂອງດາວິດ ບຸດຊາຍເຫລົ່ານີ້ເກີດແກ່ດາວິດທີ່ເມືອງເຮໂບຣນ

**ອັບເນີປອງທຳຄຳສັນຍາກັບດາວິດ**

6 ຢູ່ມາເມື່ອມີການຕໍ່ສູ້ລະຫວ່າງເຊື້ອສາຍຂອງຊາອູນກັບເຊື້ອສາຍຂອງດາວິດນັ້ນ ອັບເນີໄດ້ກະທຳຕົວໃຫ້ເຂັ້ມແຂງຍິ່ງຂຶ້ນ ໃນເຊື້ອສາຍຂອງຊາອູນ

7 ຝ່າຍຊາອູນນັ້ນມີນາງສນົມຄົນນຶ່ງຊື່ ຣິສປາ ບຸດຕຣີຂອງອັຍຢາ ແລະອິສໂບເຊທຈຶ່ງກ່າວກັບອັບເນີວ່າ, “ເຫດໃດທ່ານຈຶ່ງເຂົ້າຫານາງສນົມຂອງສະເດັດພໍ່ຂອງເຮົາ”

8 ຝ່າຍອັບເນີກໍຄຽດອິສໂບເຊທເພາະຖ້ອຍຄຳນີ້ຫລາຍ ຈຶ່ງທູນວ່າ, “ຂ້າພຣະອົງເປັນຫົວຫມາຂອງຢູດາຫລື ທຸກມື້ນີ້ຂ້າພຣະອົງໄດ້ສຳແດງຄວາມຈົ່ງຮັກພັກດີຕໍ່ເຊື້ອສາຍຂອງຊາອູນສະເດັດພໍ່ຂອງພຣະອົງ ແລະຕໍ່ພີ່ນ້ອງແລະຕໍ່ມິດສະຫາຍຂອງສະເດັດພໍ່ທ່ານ ບໍ່ໄດ້ມອບຂ້າພຣະອົງໄວ້ໃນມືຂອງດາວິດ ວັນນີ້ພຣະອົງຍັງຫາຄວາມຕໍ່ຂ້າພຣະອົງດ້ວຍເຣື່ອງຜູ້ຍິງຄົນນີ້

9 ຖ້າຂ້າພຣະອົງຈະບໍ່ໄດ້ກະທຳເພື່ອດາວິດໃຫ້ສຳເຣັດດັ່ງທີ່ພຣະຜູ້ເປັນເຈົ້າຊົງປະຕິຍານໄວ້ຕໍ່ທ່ານແລ້ວ ກໍຂໍພຣະຜູ້ເປັນເຈົ້າຊົງລົງໂທດອັບເນີແລະຍິ່ງຫນັກກວ່າ

10 ຄືຂ້າພຣະອົງຈະຍ້າຍຣາຊອານາຈັກຈາກເຊື້ອສາຍຂອງຊາອູນ ແລະສະຖາປະນາບັນລັງຂອງດາວິດເຫນືອອິສຣາເອນ ແລະເຫນືອຢູດາ ຕັ້ງແຕ່ດານເຖິງເບເອີເຊບາ”

11 ແລະອິສໂບເຊທກໍບໍ່ຊົງສາມາດຕອບອັບເນີຈັກຄຳດຽວ ເພາະພຣະອົງຊົງຢ້ານກົວອັບເນີ

12 ອັບເນີກໍສົ່ງຜູ້ນຳຂ່າວແທນຕົນໄປຍັງດາວິດທີ່ເຮໂບຣນທູນວ່າ, “ແຜ່ນດິນນີ້ເປັນຂອງຜູ້ໃດ?” ແລະທູນອີກວ່າ, “ຂໍຊົງ
ທຳຄຳສັນຍາກັບຂ້າພຣະອົງ ແລະເບິ່ງແມ່, ມືຂອງຂ້າພຣະອົງຈະຢູ່ຝ່າຍພຣະອົງ ແລະນຳອິສຣາເອນທັງສິ້ນມາມອບ
ແດ່ພຣະອົງ”
13 ດາວິດກ່າວວ່າ, “ດີແລ້ວ ເຮົາຈະກະທຳຄຳສັນຍາກັບທ່ານ ແຕ່ເຮົາຂໍຈາກທ່ານຈັກຢ່າງນຶ່ງຄືວ່າ ເມື່ອທ່ານຈະມາເຫັນ
ຫນ້າເຮົາອີກຂໍທ່ານນຳມີຄານ ບຸດຕຣີຂອງຊາອູນມາໃຫ້ເຮົາກ່ອນ ບໍ່ດັ່ງນັ້ນທ່ານຈະບໍ່ໄດ້ເຫັນຫນ້າເຮົາ”
14 ແລ້ວດາວິດກໍສົ່ງຜູ້ນຳຂ່າວໄປຍັງອິສໂບເຊທບຸດຊາຍຂອງຊາອູນວ່າ, “ຂໍມອບມີຄານເມັຽຂອງຂ້າພະເຈົ້າແກ່ຂ້າພະ
ເຈົ້າຜູ້ຊຶ່ງຂ້າພະເຈົ້າໄດ້ຫມັ້ນໄວ້ດ້ວຍຫນັງປາຍອະວັຍວະຂອງຄົນຟີລິສຕິນນຶ່ງຮ້ອຍອັນ”
15 ອິສໂບເຊທຈຶ່ງຊົງໃຫ້ຄົນໄປພາມີຄານມາຈາກຜົວຂອງນາງ ຄືປັນຕີເອນບຸດຊາຍຂອງລາອິສ
16 ແຕ່ຜົວຂອງນາງກໍຍ່າງທັງຮ້ອງໄຫ້ໄປກັບນາງຈົນເຖິງບາຮູຣິມ ແລ້ວອັບເນີຈຶ່ງບອກເຂົາວ່າ, “ກັບໄປເສັຽເຖີດ” ແລະ
ເຂົາກໍກັບໄປ
17 ອັບເນີຈຶ່ງປຶກສາກັບພວກຜູ້ໃຫຍ່ຂອງອິສຣາເອນວ່າ, “ເມື່ອກ່ອນນີ້ທ່ານທັງຫລາຍຢາກໃຫ້ດາວິດເປັນກະສັດເຫນືອ
ທ່ານ
18 ບັດນີ້ຈຶ່ງໃຫ້ເປັນຈິງເຖີດ ເພາະພຣະຜູ້ເປັນເຈົ້າຊົງສັນຍາໄວ້ກັບດາວິດວ່າ “ເຮົາຈະຊ່ອຍອິສຣາເອນໄພ່ພົນຂອງເຮົາ
ດ້ວຍມືຂອງດາວິດຜູ້ຮັບໃຊ້ຂອງເຮົາ ໃຫ້ພົ້ນຈາກມືຂອງຄົນຟີລິສຕິນ ແລະໃຫ້ພົ້ນຈາກມືສັດຕຣູທັງສິ້ນຂອງເຂົາ”
19 ອັບເນີກໍເວົ້າກັບຄົນເບັນຢາມິນນຳ ແລະອັບເນີກໍໄປທູນດາວິດທີ່ເມືອງເຮໂບຣນເຖິງບັນດາສິ່ງຕ່າງໆ ທີ່ອິສຣາເອນ
ແລະເຊື້ອສາຍທັງສິ້ນຂອງເບັນຢາມິນເຫັນສົມຄວນທີ່ຈະກະທຳ
20 ອັບເນີຈຶ່ງມາເຝົ້າດາວິດທີ່ເມືອງເຮໂບຣນພ້ອມກັບຄົນອີກຊາວຄົນ ດາວິດຊົງຈັດການລ້ຽງອັບເນີກັບຄົນທີ່ຢູ່ກັບທ່ານ
21 ແລະອັບເນີທູນດາວິດວ່າ, “ຂ້າພຣະອົງຈະລຸກຂຶ້ນກັບໄປ ແລະຈະຮວບຮວມຄົນອິສຣເອນທັງສິ້ນມາຍັງພຣະຣາຊາ
ເຈົ້ານາຍຂອງຂ້າພຣະອົງ ເພື່ອເຂົາທັງຫລາຍຈະກະທຳຄຳສັນຍາກັບພຣະອົງ ເພື່ອພຣະອົງຈະຊົງປົກຄອງໃຫ້ກວ້າງ
ຂວາງຕາມຊອບພຣະທັຍຂອງພຣະອົງ” ດາວິດກໍຊົງສົ່ງອັບເນີກັບໄປ ແລະເຂົາກໍໄປໂດຍສວັດດີພາບ

**ໂຢອາບຂ້າອັບເນີ**

Abner Is Killed by Joab

22 ຂນະນັ້ນຂ້າຣາຊການທະຫານຂອງດາວິດກັບໂຢອາບກັບມາຈາກການໄປປຸ້ນແລະນຳສິ່ງຂອງທີ່ຍຶດໄດ້ຫລວງຫລາຍ
ນັ້ນມາດ້ວຍ ແຕ່ອັບເນີບໍ່ໄດ້ຢູ່ກັບດາວິດທີ່ເຮໂບຣນແລ້ວ ເພາະພຣະອົງຊົງສົ່ງທ່ານກັບໄປ ແລະທ່ານກໍໄປໂດຍສວັດ
ດີພາບ
23 ເມື່ອໂຢອາບກັບກອງທັບທັງສິ້ນທີ່ຢູ່ກັບທ່ານມາເຖິງ ກໍມີຄົນບອກໂຢອາບວ່າ, “ອັບເນີບຸດເນີມາເຝົ້າພຣະຣາຊາ ແລະ
ພຣະອົງຊົງໃຫ້ເຂົາກັບໄປ ເຂົາກໍກັບໄປໂດຍສວັດດີພາບ”
24 ແລ້ວໂຢອາບເຂົ້າໄປເຝົ້າກະສັດທູນວ່າ, “ເປັນຫຍັງພຣະອົງຊົງກະທຳເຊັ່ນນີ້ ເບິ່ງແມ່, ອັບເນີມາເຝົ້າພຣະອົງ ເຫດໃດ
ພຣະອົງຈຶ່ງປ່ອຍເຂົາໄປ ເຂົາກໍຫລຸດມືໄປແລ້ວ
25 ພຣະອົງຊົງຊາບແລ້ວວ່າອັບເນີ ບຸດເນີມາເພື່ອລໍ້ລວງພຣະອົງ ແລະເພື່ອຊາບເຖິງການສະເດັດເຂົ້າອອກຂອງພຣະອົງ
ແລະເພື່ອຊາບທຸກສິ່ງທຸກຢ່າງທີ່ພຣະອົງຊົງກະທຳ
26 ເມື່ອໂຢອາບອອກມາຈາກການເຂົ້າເຝົ້າດາວິດ ຈຶ່ງສົ່ງຜູ້ນຳຂ່າວໄປຕາມອັບເນີ ເຂົາທັງຫລາຍກໍນຳທ່ານກັບມາຈາກທີ່
ຂັງນໍ້າຊີຣາ ແຕ່ດາວິດບໍ່ໄດ້ຊົງຊາບໃນເຣື່ອງນີ້
27 ເມື່ອອັບເນີກັບມາເຖິງເຮໂບຣນແລ້ວ ໂຢອາບກໍພາທ່ານຫລີບເຂົ້າໄປທີ່ກາງປະຕູເມືອງເພື່ອຈະເວົ້າກັບທ່ານເປັນການ
ລັບ ແລະໂຢອາບແທງທ້ອງຂອງທ່ານເສັຽທີ່ນັ້ນ ທ່ານກໍສິ້ນຊີວິດ ໂຢອາບແກ້ແຄ້ນໂລຫິດຂອງອາຊາເຮນນ້ອງຊາຍ
ຂອງຕົນ

28 ພາຍຫລັງເມື່ອດາວິດຊົງຊາບເລື່ອງນີ້ ພຣະອົງຊົງກ່າວວ່າ, “ຕົວເຮົາແລະຣາຊອານາຈັກຂອງເຮົາປາສຈາກຄວາມຜິດ ສືບໄປເປັນນິດຕໍ່ເບື້ອງພຣະພັກພຣະຜູ້ເປັນເຈົ້າດ້ວຍເລື່ອງໂລຫິດຂອງອັບເນີບຸດເນີ

29 ຂໍໃຫ້ໂທດນັ້ນຕົກເຫນືອຫົວຂອງໂຢອາບ ແລະເຫນືອເຊື້ອສາຍບິດາຂອງເຂົາທັງສິ້ນ ຂໍຢ່າໃຫ້ຄົນທີ່ມີສິ່ງໄຫລອອກ ຄົນທີ່ເປັນໂຣກເຮື້ອນ ຄົນທີ່ຖືໄມ້ເທົ້າ ຄົນທີ່ຖືກປະຫານດ້ວຍດາບ ຫລືຄົນຂາດເຂົ້າຈີ່ ຂາດຈາກເຊື້ອສາຍຂອງໂຢອາບ”

30 ນີ້ແຫລະ ໂຢອາບແລະອາບີຊັຍນ້ອງຊາຍຂອງເຂົາໄດ້ຂ້າອັບເນີ ເພາະອັບເນີໄດ້ຂ້າອາຊາເຮນນ້ອງຊາຍເຂົາເມື່ອຮົບກັນທີ່ກິເບໂອນ

31 ແລ້ວດາວິດກໍກ່າວກັບໂຢອາບ ແລະປະຊາຊົນທຸກຄົນທີ່ຢູ່ກັບພຣະອົງວ່າ, “ຈົ່ງຈີກເສື້ອຜ້າຂອງທ່ານທັງຫລາຍ ແລະເອົາຜ້າກະສອບຄາດແອວໄວ້ ແລະຈົ່ງໄວ້ທຸກໃຫ້ອັບເນີ” ແລະກະສັດດາວິດສະເດັດຕາມສົບອັບເນີໄປ

32 ເຂົາກໍຝັງສົບອັບເນີໄວ້ທີ່ເຮໂບຣນ ແລະກະສັດກໍສົ່ງພຣະສຸຣະສຽງກັນແສງໃນທີ່ຝັງສົບຂອງອັບເນີ ແລະປະຊາຊົນທັງປວງກໍຮ້ອງໄຫ້

33 ແລະກະສັດຊົງຄໍ່າຄວນດ້ວຍເລື່ອງອັບເນີວ່າ, “ຄວນຫລືທີ່ອັບເນີຈະຕາຍ ຢ່າງຄົນໂງ່ຕາຍ”

34 ມືຂອງທ່ານກໍບໍ່ໄດ້ຖືກມັດ ຕີນຂອງທ່ານກໍບໍ່ໄດ້ຕິດໂສ້ ທ່ານໄດ້ລົ້ມລົງເຫມືອນຢ່າງຄົນລົ້ມລົງຕໍ່ຫນ້າຄົນຊົ່ວຮ້າຍ ແລະປະຊາຊົນທັງປວງກໍຮ້ອງໄຫ້ເຖິງອັບເນີອີກ

35 ແລ້ວປະຊາຊົນທັງປວງກໍມາທູນຊວນເຊີນໃຫ້ດາວິດສເວີຍພຣະກະຍາຫານເມື່ອເວລາຍັງເວັນຢູ່ ແຕ່ດາວິດຊົງປະຕິຍານວ່າ, “ຖ້າເຮົາຊີມຣົດເຂົ້າຈີ່ ຫລືສິ່ງໃດໆກ່ອນຕາເວັນຕົກ ຂໍໃຫ້ພຣະຜູ້ເປັນເຈົ້າລົງໂທດເຮົາແລະຍິ່ງຫນັກກວ່າ”

36 ປະຊາຊົນທັງປວງສັງເກດເຫັນເຊັ່ນນັ້ນກໍພໍໃຈ ດັ່ງທີ່ປະຊາຊົນພໍໃຈທຸກສິ່ງທີ່ກະສັດຊົງກະທໍາ

37 ປະຊາຊົນທັງສິ້ນແລະຊົນອິສຣາເອນທັງປວງຈຶ່ງເຂົ້າໃຈໃນວັນນັ້ນວ່າ ບໍ່ແມ່ນພຣະປະສົງຂອງກະສັດທີ່ຈະໃຫ້ຂ້າອັບເນີບຸດເນີເສັຽ

38 ກະສັດກ່າວກັບຂ້າຣາຊການຂອງພຣະອົງວ່າ, “ທ່ານບໍ່ຊາບຫລືວ່າ ວັນນີ້ເຈົ້ານາຍແລະຄົນສໍາຄັນຍິ່ງຄົນນຶ່ງສິ້ນຊີວິດໃນອິສຣາເອນ

39 ເຖິງແມ່ນເຮົາໄດ້ຮັບການເຈີມເປັນກະສັດ ແລ້ວເຮົາກໍອ່ອນກໍາລັງໃນວັນນີ້ ຊາຍເຫລົ່ານີ້ຊຶ່ງເປັນບຸດຂອງນາງເຊຣູຢາຫນັກແກ່ເຮົາເກີນໄປ ຂໍພຣະຜູ້ເປັນເຈົ້າຊົງສນອງຜູ້ກະທໍາຜິດຕາມຄວາມຜິດຂອງເຂົາເຖີດ”

## 4 ການຄາຕະກັມອິສໂບເຊທ

Ishbosheth Assassinated

1 ເມື່ອອິສໂບເຊທບຸດຊາຍຂອງຊາອູນໄດ້ຊົງຊາບຂ່າວວ່າອັບເນີສິ້ນຊີວິດເສັຽທີ່ເຮໂບຣນແລ້ວ ພຣະຫັດຂອງພຣະອົງກໍອ່ອນລົງ ແລະອິສຣາເອນທັງປວງກໍທໍ້ໃຈ

2 ຝ່າຍບຸດຊາຍຂອງຊາອູນຍັງມີອີກສອງຄົນເປັນຫົວຫນ້າຂອງກອງປຸ້ນ ຄົນນຶ່ງຊື່ບາອານາ ອີກຄົນນຶ່ງຊື່ເຣຄັບບຸດຂອງຣິມໂມນ ຄົນເບັນຍາມິນ ຊາວເມືອງເບເອີໂຢດ (ເພາະວ່າເບເອີໂຢດກໍນັບເຂົ້າເປັນຂອງເບັນຍາມິນດ້ວຍ

3 ຊາວເບເອີໂຢດຫນີໄປຍັງເມືອງກິດຕາອິມ ແລະອາໄສຢູ່ທີ່ນັ້ນຈົນເຖິງທຸກວັນນີ້)

4 ໂຢນາທານບຸດຊາຍຂອງຊາອູນ ມີບຸດຊາຍຄົນນຶ່ງເປັນງ່ອຍ ເມື່ອມີຂ່າວເລື່ອງຊາອູນກັບໂຢນາທານມາຈາກຢິສເຣເອນນັ້ນ ເດັກຄົນນີ້ມີອາຍຸຫ້າປີ ເອື້ອຍລ້ຽງກໍອຸ້ມລຸກຫນີໄປ ເມື່ອນາງຟ້າວຫນີນັ້ນ ເດັກນັ້ນກໍຫລົ່ນລົງ ແລະເປັນງ່ອຍທ່ານຊື່ເມຟີໂບເຊທ

5 ຝ່າຍບຸດທັງສອງຂອງຣິມໂມນ ຊາວເບເອີໂຢດ ທີ່ຊື່ເຣຄັບ ແລະບາອານານັ້ນ ໄດ້ອອກເດີນທາງ ພໍແດດອອກຮ້ອນກໍມາເຖິງຕໍານັກຂອງອິສໂບເຊທ ຂນະເມື່ອພຣະອົງກໍາລັງບັນທົມພັກທ່ຽງ

6 ແລະເຂົາເຂົ້າໄປກາງຕຳນັກ ເຮັດເຫມືອນຈະຂົນເຂົ້າສາລີແລະເຂົາກໍແທງພຣະອົງ ເຣຄັບແລະບາອານາອ້າຍແຫ່ງຕົນກໍຫນີໄປ

7 ເມື່ອເຂົາທັງສອງເຂົ້າໄປໃນຕຳນັກນັ້ນ ພຣະອົງບັນທົມຫລັບຢູ່ເທິງບ່ອນ ເຂົາກໍທຸບຕີພຣະອົງແລະປະຫານພຣະອົງເສັຽ ນຳພຣະສຽນນັ້ນເດີນທາງໄປທາງອາຣາບາທັງກາງຄືນ

8 ເຂົານຳພຣະສຽນຂອງອິສໂບເຊທໄປຖວາຍດາວິດທີ່ເມືອງເຮໂບຣນ ເຂົາທັງສອງກາບທູນພຣະຣາຊາວ່າ, “ນີ້ຫົວຂອງອິສໂບເຊທບຸດຂອງຊາອູນສັດຕຣູຂອງພຣະອົງ ຜູ້ສແວງຫາຊີວິດຂອງພຣະອົງ ພຣະຜູ້ເປັນເຈົ້າຊົງແກ້ແຄ້ນແທນພຣະຣາຊາເຈົ້ານາຍຂອງຂ້າພຣະອົງໃນວັນນີ້ເຫນືອຊາອູນ ແລະເຜົ່າພັນຂອງຊາອູນ”

9 ແຕ່ດາວິດກ່າວຕອບເຣຄັບແລະບາອານາອ້າຍແຫ່ງຕົນ ບຸດຂອງຣິມໂມນຊາວເບເອໂຢດວ່າ, “ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ສັນໃດ ຄືພຣະອົງຜູ້ຊົງໄຖ່ຊີວິດຂອງເຮົາຈາກບັນດາຄວາມທຸກຍາກ

10 ເມື່ອຜູ້ນຶ່ງຜູ້ໃດບອກເຮົາວ່າ, “ເບິ່ງແມ່, ຊາອູນສິ້ນຊີວິດແລ້ວ” ແລະຄິດວ່າຕົນນຳຂ່າວດີມາ ເຮົາກໍຈັບຄົນນັ້ນຂ້າເສັຽທີ່ຊິກລາກ ຊຶ່ງເປັນຣາງວັນທີ່ເຮົາໃຫ້ແກ່ເຂົາສຳລັບຂ່າວນັ້ນ

11 ນອກຈາກນີ້ເທົ່າໃດເມື່ອຄົນອະທັມໄດ້ຂ້າຄົນຊອບທັມທີ່ໃນບ້ານ ແລະເທິງບ່ອນນອນຂອງຄົນຊອບທັມນັ້ນ ເຮົາຈະບໍ່ລົງໂທດເຈົ້າທັງສອງເພາະຄວາມຕາຍຂອງເຂົາຫລື ແລະທຳລາຍເຈົ້າເສັຽຈາກພິພົບ”

12 ດາວິດກໍຊົງສັ່ງຄົນຫນຸ່ມຂອງພຣະອົງ ແລະເຂົາທັງຫລາຍກໍພາກເຂົາທັງສອງໄປຂ້າເສັຽ ຕັດມືຕັດຕີນອອກ ແຂວນສົບນັ້ນໄວ້ທີ່ຂ້າງສະທີ່ເມືອງເຮໂບຣນ ແຕ່ເຂົານຳພຣະສຽນຂອງອິສໂບເຊທໄປຝັງໄວ້ໃນທີ່ຝັງສົບຂອງອັບເນີໃນເມືອງເຮໂບຣນ

## 5 ດາວິດເປັນເຈົ້າຊີວິດແຫ່ງອິສຣາເອນ

David Anointed King of All Israel

(1 ຂຄວ 11:1-3)

1 ຕໍ່ມາອີກ ພວກຕະກູນອິສຣາເອນ ໄດ້ມາຫາດາວິດທີ່ເມືອງເຮໂບຣນ ແລະທູນຕໍ່ພຣະອົງວ່າ, “ພວກຂ້າພຣະອົງເປັນເພື່ອນຮ່ວມຊາດດຽວກັນກັບພຣະອົງ

2 ໃນຄາວກ່ອນເມື່ອຊາອູນເປັນເຈົ້າຊີວິດ ແມ່ນພຣະອົງນີ້ແຫລະໄດ້ນຳຫນ້າປະຊາຊົນອິສຣາເອນຢູ່ໃນສະຫນາມຮົບ ຕັ້ງແຕ່ເວລານັ້ນມາ ພຣະຜູ້ເປັນເຈົ້າກໍຊົງບອກໃຫ້ພຣະອົງເປັນຜູ້ນຳຫນ້າ ແລະປົກຄອງໄພ່ພົນຂອງພຣະອົງ

3 ດ້ວຍເຫດນີ້ ພວກຂ້າພຣະອົງຜູ້ນຳຊາວອິສຣາເອນທຸກຄົນ ຈຶ່ງເຂົ້າເຝົ້າພຣະອົງທີ່ເມືອງເຮໂບຣນນີ້” ຝ່າຍດາວິດກໍໃຫ້ຄຳຫມັ້ນສັນຍາກັບພວກເຂົາ ແລະພວກເຂົາກໍເອົານ້ຳມັນຊະໂລມຫົດສົງພຣະອົງໃຫ້ເປັນເຈົ້າຊີວິດຂອງຣາຊອານາຈັກອິສຣາເອນ

4 ເວລາທີ່ດາວິດໄດ້ຂຶ້ນສເວີຍຣາຊນັ້ນ ພຣະອົງມີອາຍຸສາມສິບປີ ແລະພຣະອົງປົກຄອງເປັນເວລາສີ່ສິບປີ

5 ຄືປົກຄອງຊາວຢູດາທີ່ເຮໂບຣນເປັນເວລາເຈັດປີກັບຫົກເດືອນ ແລະໄດ້ປົກຄອງທີ່ກຸງເຢຣູຊາເລັມທົ່ວທັງອິສຣາເອນແລະຢູດາ ເປັນເວລາສາມສິບປີ

Jerusalem Made Capital of the United Kingdom

(1 ຂຄວ 11:4-9; 14:1-7)

6 ຕໍ່ມາກະສັດດາວິດ ແລະທະຫານຂອງພຣະອົງ ໄດ້ໄປສູ້ຮົບທີ່ນະຄອນເຢຣູຊາເລັມ ຊາວເຢບຸສທີ່ຢູ່ໃນທີ່ນັ້ນ ຄິດວ່າດາວິດບໍ່ສາມາດຈະຕີເອົາເມືອງນີ້ໄດ້ ພວກເຂົາຈຶ່ງເວົ້າຕໍ່ພຣະອົງວ່າ, “ພຣະອົງຈະເຂົ້າມາໃນບ່ອນນີ້ບໍ່ໄດ້ດອກ ແມ່ນແຕ່ຄົນຕາບອດ ແລະຄົນເສັຽອົງຄະກໍຈະສາມາດປ້ອງກັນເມືອງນີ້ໄວ້ໄດ້”

7 ແຕ່ດາວິດກໍໄດ້ຍຶດເອົາປ້ອມຍາມເມືອງຊີໂອນ ແລະບ່ອນນີ້ກໍກາຍເປັນເມືອງຂອງດາວິດ

8 ໃນວັນນັ້ນ ດາວິດເວົ້າກັບທະຫານຂອງພຣະອົງວ່າ, “ຜູ້ໃດຈະໂຈມຕີຄົນເຢບຸສ ກໍໃຫ້ຜູ້ນັ້ນຂຶ້ນໄປຕາມທາງນໍ້າໄຫລ
ໄປສູ່ຄົນຫງ່ອຍ ແລະຄົນຕາບອດຜູ້ຊຶ່ງຈິດໃຈຂອງດາວິດກຽດຊັງ” ດ້ວຍເຫດນີ້ ເຂົາຈຶ່ງວ່າກັນວ່າ, “ຢ່າໃຫ້ຄົນຕາບອດ
ແລະຄົນຫງ່ອຍເຂົ້າມາໃນພຣະວິຫານ”
9 ສ່ວນດາວິດກໍຢູ່ໃນເມືອງທີ່ມີປ້ອມຍາມນັ້ນ ທີ່ພຣະອົງໄດ້ໃສ່ຊື່ວ່າ “ເມືອງຂອງດາວິດ” ພຣະອົງໄດ້ສ້າງກຳແພງປ້ອງ
ກັນອ້ອມໄວ້ ຕັ້ງແຕ່ມິນໂລຈົນເຖິງພຣະຣາຊວັງ
10 ດາວິດເຂັ້ມແຂງ ແລະຈະເຣີນຂຶ້ນຕລອດມາ ເພາະວ່າພຣະຜູ້ເປັນເຈົ້າແຫ່ງຈັກກະວານ ໄດ້ຊົງສະຖິດຢູ່ກັບພຣະອົງ

**ຮີຣາມຮັບຮອງຖານະດາວິດ**

11 ຢູ່ມາ ກະສັດຮີຣາມທີ່ເມືອງຕີເຣ ໄດ້ສົ່ງພວກຣາຊທູດມາຫາດາວິດ ພ້ອມທັງໄມ້ສົນຊ່າງໄມ້ຊ່າງກໍ່ມາສ້າງພຣະຣາ
ຊວັງຂອງດາວິດ
12 ດາວິດຈຶ່ງພິຈາຣະນາວ່າ ພຣະຜູ້ເປັນເຈົ້າຊົງສະຖາປະນາຕົນໃຫ້ເປັນເຈົ້າຊີວິດຂອງຊາວອິສຣາເອນ ແລະຊົງແຕ່ງຕັ້ງ
ຣາຊອານາຈັກຂອງຕົນໃຫ້ນັ່ງຄັ່ງຮຸ່ງເຮືອງ ເພື່ອເຫັນແກ່ໄພ່ພົນຂອງພຣະອົງ

**ບຸດຊາຍຂອງດາວິດຊຶ່ງເກີດທີ່ເຢຣູຊາເລັມ**

13 ຫລັງຈາກຍ້າຍໜີຈາກເມືອງເຮໂບຣນແລ້ວ ດາວິດກໍເອົາເມັຽນ້ອຍຫລາຍຄົນໃນນະຄອນເຢຣູຊາເລັມ ພຣະອົງຈຶ່ງມີ
ບຸດຊາຍ ບຸດສາວຕື່ມອີກຫລາຍຂຶ້ນ
14 ບຸດທີ່ເກີດຢູ່ນະຄອນເຢຣູຊາເລັມມີຄື ຊັມມູອາ ໂຊບັບ ນາທານ ໂຊໂລໂມນ
15 ອິບຮາຣ໌ ເອລີຊູອາ ເນເຟກ ຢາຟີອາ
16 ເອລີຊາມາ ເອລີອາດາ ແລະເອລີເຟເລທ

**ດາວິດຊົງຮົບຊະນະຄົນຟີລິສຕິນ**

Philistine Attack Repulsed

(1 ຂຄວ 14:8-17)

17 ເມື່ອພວກຟີລິສຕິນໄດ້ຍິນຂ່າວ ດາວິດໄດ້ຮັບການສະຖາປະນາໃຫ້ເປັນເຈົ້າຊີວິດຂອງຊາວອິສຣາເອນ ພວກເຂົາກໍ
ແຫ່ກັນມາເພື່ອຈັບເອົາຕົວດາວິດ ເມື່ອດາວິດໄດ້ຍິນຂ່າວນັ້ນ ພຣະອົງໄດ້ລົງໄປຢູ່ໃນປ້ອມ
18 ເມື່ອພວກຟີລິສຕິນເຄື່ອນກຳລັງມາເຖິງຮ່ອມພູເຣຟາອີມ ກໍໄດ້ຍຶດເອົາບ່ອນນັ້ນໄວ້
19 ດາວິດໄດ້ທູນຖາມພຣະຜູ້ເປັນເຈົ້າວ່າ, “ຂ້າພຣະອົງຈະຕ້ອງໄປສູ້ຮົບກັບພວກຟີລິສຕິນຫລືບໍ່ ພຣະອົງຈະຊົງປະທານ
ໄຊຊະນະໃຫ້ຂ້າພຣະອົງບໍ່” ພຣະຜູ້ເປັນເຈົ້າຊົງຕອບວ່າ, “ຈົ່ງໄປເທີນ ເຮົາຈະໃຫ້ເຈົ້າຊະນະ”
20 ດັ່ງນັ້ນ ດາວິດຈຶ່ງມຸ່ງໜ້າໄປເມືອງບາອານເປຣາຊິມ ແລະກໍຊະນະພວກຟີລິສຕິນຢູ່ທີ່ນັ້ນ ພຣະອົງໄດ້ເວົ້າວ່າ, “ພຣະ
ຜູ້ເປັນເຈົ້າຊົງໃຫ້ສັດຕຣູຂອງຂ້າພະເຈົ້າແຕກແຍກກັນ ເໝືອນດັ່ງນໍ້າໄຫລເຊາະຄູກັ້ນນັ້ນ” ແລະບ່ອນນັ້ນກໍເອີ້ນວ່າ
ບາອານເປຣາຊິມ
21 ພວກຟີລິສຕິນໄດ້ປະຮູບພຣະຂອງພວກເຂົາໄວ້ໃນບ່ອນນັ້ນ ດາວິດ ແລະທະຫານຂອງພຣະອົງກໍເອົາຮູບພຣະນັ້ນ
ອອກໜີໄປ
22 ແລ້ວພວກຟີລິສຕິນໄດ້ກັບຄືນສູ່ຮ່ອມພູເຣຟາອີມ ແລະຍຶດເອົາບ່ອນນັ້ນໄວ້ອີກ
23 ດາວິດກໍກາບທູນພຣະຜູ້ເປັນເຈົ້າອີກເທື່ອນຶ່ງ ຈຶ່ງໄດ້ຮັບຄຳຕອບວ່າ ,”ຢ່າຕໍ່ສູ້ພວກເຂົາຢູ່ບ່ອນນີ້ ແຕ່ໃຫ້ອ້ອມໄປຕໍ່ສູ້
ທາງດ້ານຫລັງ ຊຶ່ງຢູ່ໃກ້ໆກັບຕົ້ນມອນນັ້ນ
24 ເມື່ອພວກເຈົ້າໄດ້ຍິນສຽງຄືຄົນຍ່າງຢູ່ເທິງປາຍໄມ້ ຈົ່ງຟ້າວອອກໄປຕໍ່ສູ້ໂລດ ເພາະການນັ້ນໝາຍເຖິງວ່າ ເຮົາໄດ້
ອອກໄປກ່ອນໜ້າພວກເຈົ້າແລ້ວ ເພື່ອທຳໃຫ້ກອງທັບພວກຟີລິສຕິນເສັຽໄຊ”
25 ດາວິດກໍໄດ້ປະຕິບັດຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງໄວ້ ພຣະອົງໄດ້ໄລ່ພວກຟີລິສຕິນໄປຕລອດທາງ ແຕ່ເມືອງເກລາ
ຈົນເຖິງເມືອງເກເຊີ

## 6 ຫີບຄຳສັນຍາຖືກນຳໄປນະຄອນເຢຣູຊາເລັມ

David Brings the Ark to Jerusalem

(1 ຂຄວ 13:1-14; 15:25-16:3)

1 ດາວິດໄດ້ເອີ້ນເອົາທະຫານຜູ້ເກັ່ງກ້າທີ່ສຸດໃນອິສຣາເອນມາໂຮມກັນອີກເທື່ອນຶ່ງ ຊຶ່ງມີຈຳນວນຢູ່ສາມສິບພັນຄົນ
2 ພຣະອົງໄດ້ພາພວກເຂົາໄປເມືອງບາອາເລຢູດາ ເພື່ອໄປນຳເອົາຫີບຄຳສັນຍາຊຶ່ງມີຊື່ຕາມພຣະນາມຂອງພຣະຜູ້ເປັນ
ເຈົ້າຈອມໂຍທາ ຜູ້ຊົງນັ່ງຢູ່ເທິງພຣະທີ່ນັ່ງລະຫວ່າງກາງເຊຣູບິມ
3 ພວກເຂົາໄດ້ເອົາຫີບຄຳສັນຍານັ້ນໃສ່ຣົດລໍ້ໃຫມ່ໄປຈາກເຮືອນຂອງອາບີນາດາບຢູ່ເທິງພູນ້ອຍ ສ່ວນອູສຊາ ແລະອາ
ຮີໂອ ບຸດຊາຍຂອງອາບີນາດາບເປັນຄົນຈູງຣົດລໍ້
4 ເວລາທີ່ແກ່ຫີບຄຳສັນຍານັ້ນ ອາຮີໂອເປັນຜູ້ຍ່າງອອກຫນ້າ
5 ດາວິດແລະຊາວອິສຣາເອນທຸກຄົນໄດ້ພາກັນຟ້ອນແລະຮ້ອງເພງຖວາຍແດ່ພຣະຜູ້ເປັນເຈົ້າຢ່າງສຸດອົກສຸດໃຈ ພວ
ກເຂົາໄດ້ດີດພິນ ຕີກອງ ຕີບແຊ່ງ ແລະຫລິ້ນເຄື່ອງດົນຕຣີອື່ນໆອີກປະກອບ
6 ເມື່ອພວກເຂົາມາຮອດລານຟາດເຂົ້າຂອງນາໂກນ ງົວກໍຕຳສະດຸດ ອູສຊາຢ້ານວ່າຫີບຄຳສັນຍານັ້ນຈະຕົກ
ຈາກກວຽນ ຈຶ່ງເດ່ມືໄປຈັບໄວ້
7 ໃນທັນໃດນັ້ນ ພຣະຜູ້ເປັນເຈົ້າກໍຊົງພຣະພິໂຣດອູສຊາ ເພາະເຂົາຂາດຄວາມເຄົາຣົບ ອູສຊາຈຶ່ງຕາຍຢູ່ຂ້າງຫີບຄຳສັນ
ຍາໃນບ່ອນນັ້ນ
8 ສ່ວນດາວິດກໍໃຈຮ້າຍທີ່ພຣະຜູ້ເປັນເຈົ້າຊົງລົງໂທດອູສຊາດ້ວຍຄວາມພິໂຣດ ດັ່ງນັ້ນ ທ່ານຈຶ່ງເອີ້ນບ່ອນນັ້ນວ່າ “ເປ
ເຣສອູສຊາ” ຈົນເຖິງທຸກວັນນີ້
9 ດາວິດຢ້ານກົວພຣະຜູ້ເປັນເຈົ້າຈຶ່ງເວົ້າວ່າ, “ບັດນີ້ ຂ້ານ້ອຍຈະຫາມຫີບຄຳສັນຍາໄປໄດ້ຢ່າງໃດ?”
10 ດັ່ງນັ້ນ ພຣະອົງຈຶ່ງບໍ່ຍອມທີ່ຈະນຳຫີບຂອງພຣະເຈົ້າເຂົ້າໄປໃນເມືອງຂອງດາວິດໃຫ້ຢູ່ກັບຕົນ ແຕ່ດາວິດໄດ້ນຳເອົາ
ໄປເຮືອນຂອງ ໂອເບດເອໂດມ ຊາວກິດຕີ
11 ຫີບຄຳສັນຍາຈຶ່ງຢູ່ທີ່ນັ້ນເປັນເວລາສາມເດືອນ ແລະພຣະຜູ້ເປັນເຈົ້າກໍຊົງອວຍພອນໂອເບດເອໂດມ ແລະຄົວເຮືອນ
ຂອງເຂົາທັງສິ້ນ

**ຊົງນຳຫີບຄຳສັນຍາມາສູ່ເຢຣູຊາເລັມ**

12 ມີຄົນໄປກາບທູນກະສັດດາວິດວ່າ, “ພຣະຜູ້ເປັນເຈົ້າຊົງອວຍພຣະພອນແກ່ຄົວເຮືອນຂອງໂອເບດເອໂດມ ແລະທຸກ
ສິ່ງທີ່ເຂົາມີຍ້ອນຫີບຄຳສັນຍາຢູ່ໃນເຮືອນຂອງເຂົາ ດາວິດຈຶ່ງເອົາຫີບນັ້ນອອກຈາກເຮືອນຂອງໂອເບດເອໂດມ ແລະ
ໄປນະຄອນເຢຣູຊາເລັມ ພ້ອມທັງທຳພິທີສລອງກັນຢ່າງໃຫຍ່ໂຕມະໂຫລານ
13 ເມື່ອພວກທີ່ມາຫາມຫີບຄຳສັນຍາຍ່າງອອກໄປໄດ້ຫົກກ້າວແລ້ວ ດາວິດກໍເອົາງົວເຖິກ ແລະແບ້ໂຕຕຸ້ຍພີ ຖວາຍເປັນ
ເຄື່ອງບູຊາແກ່ພຣະຜູ້ເປັນເຈົ້າ
14 ດາວິດນຸ່ງແຕ່ຜ້າຟ້ອນຖວາຍພຣະກຽດແດ່ພຣະຜູ້ເປັນເຈົ້າຢ່າງສຸດອົກສຸດໃຈ
15 ແລ້ວພຣະອົງກັບຊາວອິສຣາເອນທຸກຄົນ ກໍນຳຫີບຄຳສັນຍາຂຶ້ນໄປນະຄອນເຢຣູຊາເລັມດ້ວຍສຽງໂຮ່ຮ້ອງຍິນດີ ແລະ
ທັງສຽງເປົ່າແກດ້ວຍ
16 ເມື່ອຫີບຄຳສັນຍາເຂົ້າມາຮອດເມືອງ ມີຄານຣາຊທິດາຂອງຊາອູນ ຜູ້ເປັນມະເຫສີໄດ້ຫລຽວອອກໄປທາງປ່ອງຢ້ຽມ ກໍ
ເຫັນກະສັດດາວິດກຳລັງຟ້ອນ ແລະກະໂດດເຕັ້ນຊ້ອງພຣະພັກພຣະຜູ້ເປັນເຈົ້າ ນາງກໍຄິດດູຖູກດາວິດໃນໃຈ
17 ພວກເຂົາໄດ້ນຳເອົາຫີບຄຳສັນຍາມາວາງໄວ້ໃນຕູບຜ້າເຕັນບ່ອນທີ່ດາວິດປຸກຕຽມໄວ້ ແລ້ວດາວິດກໍຖວາຍເຄື່ອງເຜົາ
ບູຊາ ແລະເຄື່ອງບູຊາເພື່ອຄວາມສາມັກຄີແກ່ພຣະຜູ້ເປັນເຈົ້າ

18 ເມື່ອການຖວາຍເຄື່ອງບູຊາຜ່ານໄປແລ້ວ ພຣະອົງກໍອວຍພອນແກ່ປະຊາຊົນ ໃນພຣະນາມພຣະຜູ້ເປັນເຈົ້າແຫ່ງຈັກ
ກະວານ
19 ແລ້ວພຣະອົງກໍເອົາເຂົ້າຈີ່ ຊີ້ນປີ້ງ ແລະຫມາກອະງຸ່ນ ຢາຍໃຫ້ພວກຜູ້ຊາຍ ແລະພວກຜູ້ຍິງຊາວອິສຣາເອນກິນຫມົດ
ທຸກຄົນ ແລ້ວຈຶ່ງໄດ້ກັບເມືອເຮືອນ
20 ສ່ວນດາວິດກໍກັບເມືອເຮືອນ ເພື່ອອວຍໄຊໃຫ້ພອນແກ່ຄອບຄົວຂອງຕົນ ມີຄານບຸດສາວຂອງຊາອູນກໍອອກມາພົບພ
ຣະອົງ ນາງເວົ້າຂຶ້ນວ່າ, “ວັນນີ້ ກະສັດອິສຣາເອນໄດ້ສ້າງຊື່ສຽງອັນຍິ່ງໃຫຍ່ສໍາລັບຕົນເອງ ພຣະອົງໄດ້ທໍາດັ່ງຄົນຜີບ້າ
ຕໍ່ສາຍຕາພວກສາວໃຊ້ ຂອງບັນດາຂ້າຣາຊການຂອງຕົນ”
21 ດາວິດກໍຕອບວ່າ, “ເຮົາຟ້ອນຖວາຍກຽດແດ່ພຣະຜູ້ເປັນເຈົ້າ ຜູ້ຊົງເລືອກເອົາເຮົາໃຫ້ເປັນຜູ້ເຫນືອກວ່າພໍ່ຂອງເຈົ້າ
ແລະຄອບຄົວຂອງທ່ານ ເພື່ອແຕ່ງຕັ້ງໃຫ້ເຮົາເປັນຜູ້ນໍາອິສຣາເອນໄພ່ພົນຂອງພຣະອົງ ແລະເຮົາຈະຟ້ອນຖວາຍກຽດ
ແກ່ພຣະຜູ້ເປັນເຈົ້າ
22 ແລ້ວຈະພຍາຍາມຖ່ອມຕົວລົງຫລາຍກວ່ານີ້ອີກ ເຈົ້າອາດຄິດວ່າເຮົາບໍ່ມີຄວາມຫມາຍຫຍັງຫມົດ ແຕ່ສາວໃຊ້ເຫລົ່າ
ນັ້ນອາດຈະຄິດໃຫ້ກຽດແກ່ເຮົາກໍໄດ້”
23 ນາງມີຄານບຸດສາວຂອງຊາອູນ ກໍບໍ່ມີບຸດຈົນເຖິງວັນສິ້ນຊີວິດ

## 7 ນາທານນໍາຂ່າວມາໃຫ້ດາວິດ

God’s Covenant with David

(1 ຂຄວ 17:1-15)

1 ເມື່ອກະສັດດາວິດປະທັບຢູ່ໃນພຣະຣາຊວັງຂອງພຣະອົງ ພຣະຜູ້ເປັນເຈົ້າກໍຊົງອວຍພອນໃຫ້ດາວິດ ໄດ້ຮັບຄວາມ
ປອດພັຍຈາກສັດຕຣູທັງຫລາຍ
2 ແລ້ວກະສັດດາວິດເວົ້າຕໍ່ນາທານຜູ້ປະກາດພຣະທັມວ່າ, “ເບິ່ງແມ່, ຫີບຄໍາສັນຍາຂອງພຣະເຈົ້າໄດ້ເອົາໄວ້ໃນຕູບຜ້າ
ເຕັນ”
3 ນາທານຈຶ່ງຕອບວ່າ, “ຂໍພຣະອົງຈົ່ງທໍາຕາມສິ່ງທີ່ພຣະອົງພໍພຣະທັຍເທີນ ເພາະວ່າພຣະຜູ້ເປັນເຈົ້າຊົງສະຖິດຢູ່ນໍາພ
ຣະອົງ”
4 ແຕ່ໃນຄືນນັ້ນ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ນາທານວ່າ,
5 “ຈົ່ງໄປບອກດາວິດຜູ້ຮັບໃຊ້ຂອງເຮົາ ວ່າ “ພຣະເຈົ້າກ່າວດັ່ງນີ້ວ່າ ເຈົ້າບໍ່ແມ່ນຜູ້ທີ່ຈະສ້າງວິຫານໃຫ້ເຮົາຢູ່
6 ນັບຕັ້ງແຕ່ເຮົາໄດ້ນໍາເອົາຊາວອິສຣາເອນອອກມາຈາກເອຢິບຈົນເທົ່າເຖິງທຸກວັນນີ້ ເຮົາບໍ່ໄດ້ຢູ່ໃນວິຫານເລີຍ
7 ເຮົາໄດ້ຍົກຍ້າຍໄປມານໍາພວກເຈົ້າຕລອດທີ່ເຮົາເດີນທາງໄປມານໍາປະຊາຊົນອິສຣາເອນໄພ່ພົນຂອງເຮົາ ເຮົາບໍ່ໄດ້
ຖາມພວກຜູ້ປົກຄອງ ຜູ້ທີ່ເຮົາໄດ້ແຕ່ງຕັ້ງໃຫ້ເປັນຜູ້ດູແລໄພ່ພົນຂອງເຮົາເລີຍວ່າ ເປັນຫຍັງພວກເຂົາຈຶ່ງບໍ່ສ້າງວິຫານ
ດ້ວຍໄມ້ສົນໃຫ້ເຮົາຢູ່
8 ດັ່ງນັ້ນ ຈົ່ງບອກແກ່ດາວິດຜູ້ຮັບໃຊ້ຂອງເຮົາວ່າ ພຣະຜູ້ເປັນເຈົ້າແຫ່ງຈັກກະວານໄດ້ກ່າວດັ່ງນີ້ ເຈົ້າເປັນຄົນລ້ຽງແກະຢູ່
ຕາມທົ່ງນາ
9 ເຮົາໄດ້ນໍາເຈົ້າໃນທຸກທີ່ທຸກບ່ອນທີ່ເຈົ້າໄປ ແລະໄດ້ທໍາໃຫ້ສັດຕຣູທັງຫລາຍຂອງເຈົ້າຜ່າຍແພ້ ເຮົາໄດ້ສ້າງເຈົ້າໃຫ້ຍິ່ງ
ໃຫຍ່ເທົ່າກັບຜູ້ນໍາທີ່ຍິ່ງໃຫຍ່ໃນໂລກນີ້
10 ເຮົາຈະເລືອກບ່ອນສໍາລັບຊາວອິສຣາເອນໄພ່ພົນຂອງເຮົາ ແລະຈະໃຫ້ພວກເຂົາຢູ່ໃນບ່ອນນັ້ນ ໂດຍປາສຈາກການ
ຣົບກວນທຸກໆຢ່າງ

11 ນັບຕັ້ງແຕ່ພວກເຂົາເຂົ້າມາຢູ່ໃນແຜ່ນດິນນີ້ ພວກເຂົາຖືກພວກທະຫານຜູ້ເກັ່ງກ້າມາສູ້ຮົບ ແຕ່ວ່າດຽວນີ້ຈະບໍ່ມີເຫດ
ການຢ່າງໃດເກີດຂຶ້ນອີກ ເຮົາຂໍສັນຍາວ່າເຮົາຈະຮັກສາເຈົ້າໃຫ້ພົ້ນຈາກສັດຕຣູທັງຫລາຍຂອງເຈົ້າ ແລະຈະໃຫ້ເຈົ້າມີ
ເຊື້ອສາຍສືບຕໍ່ກັນໄປ
12 ເມື່ອເຈົ້າຕາຍໄປ ແລະຖືກຝັງໄວ້ກັບພວກບັນພະບຸຣຸດຂອງເຈົ້າ ເຮົາຈະແຕ່ງຕັ້ງຜູ້ນຶ່ງຈາກເຊື້ອສາຍຂອງເຈົ້າໃຫ້ເປັນ
ກະສັດ ແລະຈະໃຫ້ຣາຊອານາຈັກຂອງຜູ້ນັ້ນເຂັ້ມແຂງຂຶ້ນ
13 ເຮົາຂໍບອກຢ່າງແນ່ນອນວ່າ ເຊື້ອສາຍຂອງເຂົາຈະປົກຄອງຕລອດໄປ ແລະເຂົາກໍຈະສ້າງວິຫານໃຫ້ແກ່ເຮົາ
14 ເຮົາຈະເປັນພໍ່ຂອງເຂົາ ແລະເຂົາຈະເປັນລູກຊາຍຂອງເຮົາ ເມື່ອເຂົາທຳຜິດ ເຮົາຈະລົງໂທດເຫມືອນດັ່ງພໍ່ລົງໂທດລູກ
15 ແຕ່ວ່າ ເຮົາຈະບໍ່ເຊົາຮັກເຂົາ ເຫມືອນດັ່ງເຮົາເຊົາຮັກຊາອູນ ຜູ້ທີ່ເຮົາໄດ້ປົດຕຳແຫນ່ງນັ້ນ ເພື່ອວ່າເຈົ້າຈະເປັນກະສັດ
16 ເຈົ້າຈະມີເຊື້ອສາຍຢູ່ຕລອດໄປ ແລະເຮົາຈະໃຫ້ຣາຊອານາຈັກຂອງເຈົ້າຄົງຢູ່ຊົ່ວນິຣັນດອນ ຕຳແຫນ່ງຂອງເຈົ້າຈະບໍ່ມີ
ທີ່ສິ້ນສຸດ”
17 ນາທານໄດ້ບອກດາວິດທຸກສິ່ງ ຕາມທີ່ພຣະເຈົ້າຊົງບອກ

**ດາວິດອ້ອນວອນຂອບພຣະຄຸນ**

David’s Prayer

(1 ຂຄວ 17:16-27)

18 ຕໍ່ມາກະສັດດາວິດໄດ້ເຂົ້າໄປອ້ອນວອນຢູ່ໃນຫໍເຕັນສັກສິດວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງ ແລະຄອບຄົວບໍ່
ມີຄຸນຄ່າຢ່າງໃດຕໍ່ທຸກສິ່ງທີ່ພຣະອົງໄດ້ຊົງກະທຳຕໍ່ຂ້າພຣະອົງນັ້ນ
19 ເຖິງປານນັ້ນພຣະອົງກໍຍັງຊົງກະທຳຕໍ່ຂ້າພຣະອົງຕື່ມອີກ ຄືຊົງສັນຍາວ່າຈະໃຫ້ເຊື້ອສາຍຂອງຂ້າພຣະອົງໄດ້ສືບບັນ
ລັງຢູ່ຕໍ່ໆໄປ ໂອ ພຣະຜູ້ເປັນເຈົ້າ ພຣະອົງຊົງອະນຸຍາດໃຫ້ຂ້າພຣະອົງຜູ້ເປັນມະນຸດຮູ້ຈັກເຣື່ອງນີ້ໄດ້
20 ຂ້າພຣະອົງຈະເວົ້າຢ່າງໃດຕໍ່ພຣະອົງອີກ ເພາະພຣະອົງຊົງຮູ້ຈັກຂ້າພຣະອົງຜູ້ຮັບໃຊ້ຂອງພຣະອົງແລ້ວ
21 ມັນເປັນນ້ຳພຣະທັຍ ແລະພຣະຣາຊປະສົງຂອງພຣະອົງທີ່ເຮັດການນີ້ ພຣະອົງຊົງໃຫ້ຂ້າພຣະອົງຮູ້ຈັກສິ່ງຍິ່ງໃຫຍ່
ເຫລົ່ານີ້ທັງຫມົດ
22 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຍິ່ງໃຫຍ່ທີ່ສຸດ ຕາມທີ່ພວກຂ້າພຣະອົງເອງໄດ້ຍິນ ບໍ່ມີຜູ້ໃດເຫມືອນດັ່ງພຣະອົງ
ແລະບໍ່ມີພຣະເຈົ້າອົງອື່ນນອກຈາກພຣະອົງ
23 ໃນໂລກນີ້ ບໍ່ມີຊົນຊາດອື່ນໃດເຫມືອນດັ່ງອິສຣາເອນໄພ່ພົນຂອງພຣະອົງ ຊຶ່ງເປັນພວກທີ່ພຣະອົງຊົງຊ່ອຍຊີວິດໄວ້
ແລະຊົງໃຫ້ເປັນພວກຂອງພຣະອົງ ພຣະອົງຊົງທຳໃຫ້ຄົນທັງຫລາຍເຫັນຄວາມຍິ່ງໃຫຍ່ຂອງພຣະອົງ ແລະໃຫ້ກະທຳ
ການອັນຍິ່ງໃຫຍ່ ແລະອັສຈັນໃຫ້ແກ່ພວກເຂົາ ພຣະອົງຊົງຂັບໄລ່ຊົນຊາດຕ່າງໆ ແລະພຣະຂອງເຂົາອອກໄປຕໍ່ຫນ້າ
ໄພ່ພົນຂອງພຣະອົງ ຊຶ່ງເປັນພວກທີ່ພຣະອົງຊົງໄຖ່ເຂົາອອກຈາກປະເທດເອຢິບ ແລະຊົງໃຫ້ເປັນພວກຂອງພຣະອົງ
24 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງທຳໃຫ້ໄພ່ພົນອິສຣາເອນເປັນພວກຂອງພຣະອົງຕລອດໄປ ແລະພຣະອົງກໍຊົງເປັນ
ພຣະເຈົ້າຂອງພວກເຂົາ
25 ຂ້າແດ່ພຣະຜູ້ເປັນເຈົ້າ ດຽວນີ້ ຂໍພຣະອົງຊົງປະຕິບັດຕາມຄຳສັນຍາທີ່ພຣະອົງມີໄວ້ກັບຂ້າພຣະອົງ ພ້ອມດ້ວຍຄອບ
ຄົວຂອງຂ້າ   ພຣະອົງຕລອດໄປ ແລະຂໍຊົງກະທຳຕາມທີ່ພຣະອົງຊົງກ່າວໄວ້
26 ພຣະນາມຂອງພຣະອົງຈະຊົງຍິ່ງໃຫຍ່ຕລອດໄປ ແລະປະຊາຊົນກໍຈະເວົ້າວ່າ “ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງ
ເປັນພຣະເຈົ້າປົກຄອງພວກອິສຣາເອນ ແລະພຣະອົງຈະໃຫ້ຄຳຫມັ້ນໃຈວ່າ ເຊື້ອສາຍຂອງຂ້າພຣະອົງຈະເປັນເຈົ້າຊີ
ວິດຕລອດໄປ
27 ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ພຣະເຈົ້າຂອງພວກອິສຣາເອນ ດ້ວຍວ່າພຣະອົງຊົງໃຫ້ຂ້າພຣະອົງຜູ້ຮັບໃຊ້
ຂອງພຣະອົງຮູ້ຈັກການນີ້ ໂດຍໄດ້ບອກໃຫ້ຂ້າພຣະອົງຮູ້ຈັກກ່ອນວ່າ ພຣະອົງຈະຊົງໃຫ້ເຊື້ອສາຍຂອງຂ້າພຣະອົງ
ເປັນເຈົ້າຊີວິດ ຂ້າພຣະອົງຈຶ່ງກ້າອ້ອນວອນຕໍ່ພຣະອົງ

28 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນພຣະເຈົ້າ ຄຳເວົ້າຂອງພຣະອົງຊົງເປັນຈິງ ແລະພຣະອົງຊົງໃຫ້ຄຳສັນຍາຢ່າງອັສຈັນນີ້ແກ່ຂ້າພຣະອົງ

29 ດຽວນີ້ ຂໍພຣະອົງຊົງອວຍພອນໃຫ້ເຊື້ອສາຍຂອງຂ້າພຣະອົງເທີນ ເພື່ອວ່າພວກເຂົາຈະໄດ້ດຳຣົງຫມັ້ນຄົງຢູ່ຕໍ່ພຣະພັກຂອງພຣະອົງຢູ່ບໍ່ຂາດ ພຣະອົງຜູ້ຊົງເປັນພຣະຜູ້ເປັນເຈົ້າໄດ້ຊົງສັນຍາໄວ້ຢ່າງນີ້ ຂໍໃຫ້ພຣະພອນຂອງພຣະອົງເຫລືອຢູ່ໃນເຊື້ອສາຍຂອງຂ້າພຣະອົງຕລອດໄປເທີນ”

## 8 ດາວິດຊົງຂຍາຍຣາຊອານາຈັກຂອງພຣະອົງ

David’s Wars

(1 ຂຄວ 18:1-13)

1 ຢູ່ມາພາຍຫລັງ ດາວິດຊົງໂຈມຕີພວກຟີລິສຕິນ ແລະປາບປາມໄດ້ ແລະດາວິດຊົງຍຶດເມືອງເມເທກອາມມາ ໄດ້ຈາກມືຄົນຟີລິສຕິນ

2 ພຣະອົງຊົງຊະນະໂມອາບ ຊົງວັດເຂົາດ້ວຍເຊືອກວັດ ຄືບັງຄັບໃຫ້ຮຽງຕົວເຂົ້າແຖວນອນລົງທີ່ພື້ນດິນຊົງວັດເບິ່ງແລ້ວໃຫ້ປະຫານເສັຽສອງແຖວ ແລະໄວ້ຊີວິດເຕັມນຶ່ງແຖວ ຄົນໂມອາບກໍຕົກຢູ່ໃຕ້ອຳນາດຂອງດາວິດ ແລະໄດ້ນຳເຄື່ອງບັນນາການມາຖວາຍ

3 ດາວິດຊົງຮົບຊະນະຮາດາເດເຊີ ບຸດເຣໂຮບ ກະສັດເມືອງໂຊບາ ເມື່ອສະເດັດໄປຟື້ນອຳນາດຂອງພຣະອົງທີ່ແມ່ນ້ຳເອີຟຣາດ

4 ດາວິດຊົງຍຶດພົນມ້ານຶ່ງພັນເຈັດຮ້ອຍຄົນ ທະຫານຣາບສອງຫມື່ນຄົນ ແລະດາວິດຮັບສັ່ງໃຫ້ຕັດເອັນຂາມ້າຣົດຮົບເສັຽໃຫ້ຫມົດ ເຫລືອໄວ້ໃຫ້ພໍແກ່ຣົດຮົບນຶ່ງຮ້ອຍຄັນ

5 ແລະເມື່ອຄົນຊີເຣັຽ (ອາຣາມ) ຊາວເມືອງດາມັສກັສມາຊ່ອຍຮາດາເດເຊີກະສັດເມືອງໂຊບາດາວິດຊົງປະຫານຄົນຊີເຣັຽເສັຽສອງຫມື່ນສອງພັນຄົນ

6 ແລ້ວດາວິດຊົງຕັ້ງທະຫານປະຈຳປ້ອມໄວ້ເຫນືອຄົນຊີເຣັຽຊາວເມືອງດາມັສກັສຫລາຍກອງ ແລະຄົນຊີເຣັຽກໍຕົກຢູ່ໃຕ້ອຳນາດຂອງດາວິດ ແລະນຳເຄື່ອງບັນນາການໄປຖວາຍ ພຣະຜູ້ເປັນເຈົ້າຊົງປະທານໄຊຊະນະແກ່ດາວິດບໍ່ວ່າຈະໄປຮົບທີ່ໃດໆ

7 ແລະດາວິດຊົງນຳໂລ່ທອງຄຳທີ່ຂ້າຣາຊການຂອງຮາດາເດເຊີຖືນັ້ນໄປຍັງກຸງເຢຣູຊາເລັມ

8 ກະສັດດາວິດຊົງຍຶດທອງສຳຣິດເປັນຈຳນວນຫລາຍໄປຈາກເມືອງເບຕາ ແລະເມືອງເບໂຣທັຍທັງເມືອງຂອງຮາດາເດເຊີ

9 ເມື່ອໂຕອີກະສັດເມືອງຮາມັທຊາບວ່າດາວິດຮົບຊະນະກອງທັບທັງສິ້ນຂອງຮາດາເດເຊີ

10 ໂຕອີກໍສົ່ງໂຢຣາມບຸດຊາຍຂອງຕົນໄປເຝົ້າກະສັດດາວິດ ຖວາຍພຣະພອນແລະສະແດງຄວາມຍິນດີທີ່ດາວິດຊົງຮົບຊະນະຮາດາເດເຊີ ເພາະວ່າຮາດາເດເຊີເຄີຍທຳສົງຄາມກັບໂຕອີ ແລະໂຢຣາມໄດ້ນຳເຄື່ອງເງິນ ເຄື່ອງທອງຄຳ ແລະເຄື່ອງທອງສຳຣິດໄປຖວາຍ

11 ສິ່ງເຫລົ່ານີ້ ກະສັດດາວິດຊົງນຳມອບຖວາຍແດ່ພຣະຜູ້ເປັນເຈົ້າ ພ້ອມກັບບັນດາເງິນແລະທອງຄຳ ຊຶ່ງພຣະອົງຊົງໄດ້ມາຈາກບັນດາປະຊາຊາດທີ່ພຣະອົງຊົງຮົບຊະນະແລະຍຶດຄອງ ແລະຊົງນຳມາມອບຖວາຍ

12 ຄືໄດ້ມາຈາກເອໂດມ ໂມອາບ ຄົນອັມໂມນ ຄົນຟີລິສຕິນ ອາມາເລກ ແລະຈາກຂອງທີ່ຍຶດມາຈາກຮາດາເດເຊີບຸດຊາຍຂອງເຣໂຮບ ກະສັດເມືອງໂຊບາ

13 ເມື່ອດາວິດສະເດັດກັບຈາກການປະຫານ ຄົນເອໂດມເສັຽໃນຫ່ອມພູເກືອນຶ່ງຫມື່ນແປດພັນຄົນ

14 ພຣະອົງຊົງຕັ້ງທະຫານປະຈຳປ້ອມຂຶ້ນເຫນືອເມືອງເອໂດມ ພຣະອົງຊົງຕັ້ງທະຫານປະຈຳປ້ອມໃນເອໂດມທົ່ວໄປ
ຫມົດ ແລະຄົນເອໂດມທັງສິ້ນຈຶ່ງຕົກຢູ່ໃຕ້ອຳນາດຂອງດາວິດ ແລະພຣະຜູ້ເປັນເຈົ້າຊົງປະທານໄຊຊະນະແກ່ດາວິດ
ບໍ່ວ່າຈະສະເດັດໄປຮົບໃນທີ່ໃດ

David’s Officers

(1 ຂຄວ 18:14-17)

15 ດັ່ງນັ້ນດາວິດຈຶ່ງຊົງປົກຄອງເຫນືອອິສຣາເອນທັງສິ້ນ ແລະດາວິດຊົງໃຫ້ຄວາມຍຸດຕິທັມແລະຄວາມທ່ຽງທັມແກ່ຊົນ
ຊາດຂອງ ພຣະອົງທັງສິ້ນ

16 ໂຢອາບບຸດນາງເຊຣູຢາເປັນແມ່ທັບແລະເຢໂຮຊາຟັດ ບຸດອາຮີລຸດເປັນຜູ້ກຳກັບເອກກະສານ

17 ຊາໂດກ ບຸດອາຮີຕຸບ ແລະອາຮີເມເລກ ບຸດອາບີອາທາເປັນປະໂຣຫິດ ແລະເຊຣັຍຢາເປັນຣາຊເລຂາ

18 ເບນັຍຢາ ບຸດເຢຮົວອາດາເປັນຜູ້ບັງຄັບບັນຊາຄົນເຄເຣທີ ແລະຄົນເປເລທ ແລະບັນດາບຸດຊາຍຂອງດາວິດເປັນປະ
ໂຣຫິດ

## 9 ດາວິດ ແລະເມຟີໂບເຊທ

David’s Kindness to Mephibosheth

1 ດາວິດຖາມຂຶ້ນວ່າ, “ໃນຄອບຄົວຂອງຊາອູນຍັງມີຄົນເຫລືອຢູ່ອີກບໍ ຖ້າວ່າມີຂ້າພະເຈົ້າຢາກຊ່ອຍເຫລືອເກື້ອກູນເຂົາ
ເພື່ອເຫັນແກ່ໂຢນາທານ”

2 ແລ້ວຊີບາ ຄົນໃຊ້ໃນຄອບຄົວຂອງຊາອູນ ກໍໄດ້ຮັບຄຳສັ່ງໃຫ້ມາເຝົ້າດາວິດ ເຈົ້າຊີວິດຈຶ່ງຖາມວ່າ, “ເຈົ້າແມ່ນຊີບາບໍ?”
ເຂົາກໍທູນຕອບວ່າ, “ໂດຍ, ຂ້ານ້ອຍ”

3 ເຈົ້າຊີວິດຖາມເຂົາອີກວ່າ, “ຍັງມີບາງຄົນເຫລືອຢູ່ໃນຄອບຄົວຊາອູນບໍ? ເພາະວ່າເຮົາຢາກສະແດງຄວາມເມດຕາ
ແລະຊ່ອຍ ເຫລືອເກື້ອກູນເຂົາຕາມນໍ້າພຣະທັຍຂອງພຣະເຈົ້າ” ຊີບາທູນຕອບວ່າ, “ຍັງມີລູກຊາຍຂອງໂຢນາທານ
ຄົນນຶ່ງ ແຕ່ເຂົາເປັນຄົນເສັຽອົງຄະ”

4 ຝ່າຍເຈົ້າຊີວິດກໍຖາມວ່າ, “ດຽວນີ້ ເຂົາຢູ່ໃສ” ຊີບາຈຶ່ງທູນຕອບວ່າ, “ເຂົາຢູ່ໃນເຮືອນຂອງມາຄີ ບຸດອັມມີເອນ ຢູ່ທີ່ໂລ
ເດບາຣ໌

5 ແລ້ວເຈົ້າຊີວິດກໍສັ່ງຄົນໄປນຳເອົາເຂົາມາຈາກເຮືອນຂອງມາຄີ ບຸດອັມມີເອນທີ່ໂລເດບາຣ໌

6 ເມື່ອເມຟີໂບເຊທ ບຸດຊາຍຂອງໂຢນາທານຜູ້ເປັນຫລານຊາຍຂອງຊາອູນມາຮອດ ເຂົາກໍກົ້ມຂາບລົງສະແດງຄວາມ
ເຄົາຣົບຕໍ່ດາວິດ ດາວິດໄດ້ກ່າວວ່າ, “ເມຟີໂບເຊທ” ເມຟີໂບເຊທຈຶ່ງທູນຕອບວ່າ, “ໂດຍ, ຂ້ານ້ອຍ”

7 ດາວິດເວົ້າຕໍ່ໄປວ່າ, “ບໍ່ຕ້ອງຢ້ານ ເພື່ອເຫັນແກ່ໂຢນາທານພໍ່ຂອງເຈົ້າ ເຮົາຈະເມດຕາເຈົ້າ ເຮົາຈະເອົາທີ່ດິນທັງ
ຫມົດທີ່ເປັນຂອງຊາອູນພໍ່ປູ່ຂອງເຈົ້າມອບຄືນໃຫ້ແກ່ເຈົ້າ ແລະເຮົາຍິນດີໃຫ້ເຈົ້າມາຮ່ວມຮັບປະທານອາຫານກັບເຮົາ
ເລື້ອຍໆ”

8 ເມຟີໂບເຊທກໍກົ້ມຂາບລົງອີກເທື່ອນຶ່ງ ແລະທູນວ່າ, “ຂ້າແດ່ພຣະອົງ ຂ້າພຣະອົງບໍ່ມີຄຸນຄ່າຊໍ່າຊາກຫມາຕາຍຊໍ້າ
ເປັນຫຍັງພຣະອົງຈຶ່ງດີກັບຂ້າພຣະອົງຢ່າງນີ້”

9 ແລ້ວເຈົ້າຊີວິດກໍເອີ້ນຊີບາຄົນໃຊ້ຂອງຊາອູນມາ ແລະເວົ້າວ່າ, “ເຮົາໄດ້ມອບທຸກໆສິ່ງທີ່ເປັນຂອງຊາອູນ ແລະຂອງ
ຄອບຄົວທ່ານຄືນໃຫ້ແກ່ເມຟີໂບເຊທຫລານຊາຍນາຍຂອງເຈົ້າແລ້ວ

10 ສ່ວນເຈົ້າ ລູກຊາຍເຈົ້າພ້ອມທັງຄົນໃຊ້ເຈົ້າ ຈົ່ງເຮັດໄຮ່ໄຖນາໃສ່ພື້ນແຜ່ນດິນນີ້ ໃຫ້ຄອບຄົວຂອງຊາອູນນາຍຂອງເຈົ້າ
ແລະເກັບເອົາຜົນລະປູກມາໃຫ້ພວກເຂົາ ເພື່ອໃຫ້ມີອາຫານການກິນ ສ່ວນເມຟີໂບເຊທນັ້ນ ຈະຕ້ອງເປັນແຂກປະຈຳ
ໂຕະອາຫານຂອງເຮົາ ສເມີ” ຊີບາມີບຸດຊາຍສິບຫ້າຄົນ ແລະຄົນໃຊ້ຊາວຄົນ

11 ຊີບາທູນຕອບວ່າ, “ຂ້າພຣະອົງຈະເຮັດທຸກສິ່ງຕາມທີ່ພຣະອົງຊົງສັ່ງ” ດັ່ງນັ້ນເມຟີໂບເຊທຈຶ່ງໄດ້ຮັບປະທານອາຫານ
ຮ່ວມໂຕະກັບເຈົ້າຊີວິດເຫມືອນດັ່ງເປັນຣາຊໂອຣົດອົງນຶ່ງຂອງພຣະອົງ
12 ເມຟີໂບເຊທ ມີບຸດຊາຍຊື່ວ່າ ມີກາ ທຸກຄົນໃນຄອບຄົວຊີບາກໍມາເປັນຄົນໃຊ້ຂອງເມຟີໂບເຊທຫມົດ
13 ເມຟີໂບເຊທຜູ້ທີ່ມີຕີນລ່ອຍທັງສອງເບື້ອງກໍຢູ່ໃນນະຄອນເຢຣູຊາເລັມ ແລະກິນເຂົ້າຮ່ວມໂຕະກັບເຈົ້າຊີວິດທຸກໆຄາບ

## 10 ຄົນອັມໂມນ ແລະຊີເຣັຽຜ່າຍແພ້

The Ammonites and Arameans Are Defeated

(1 ຂຄວ 19:1-19)

1 ຢູ່ມາພາຍຫລັງກະສັດແຫ່ງຄົນອັມໂມນກໍສິ້ນພຣະຊົນ ແລະຮານູນບຸດຊາຍໄດ້ສເວີຍຣາຊສົມບັດແທນ
2 ດາວິດຈຶ່ງກ່າວວ່າ, “ເຮົາຈະຊື່ສັດຕໍ່ຮານູນບຸດຊາຍຂອງນາຮັສ ດັ່ງທີ່ບິດາຂອງເຂົາຊື່ສັດຕໍ່ເຮົາ” ດາວິດຈຶ່ງສົ່ງພວກຂ້າ
ຣາຊການຂອງພຣະອົງໄປເລົ້າໂລມທ່ານກ່ຽວດ້ວຍເຣື່ອງຣາຊບິດາຂອງທ່ານ ແລະຂ້າຣາຊການຂອງດາວິດກໍເຂົ້າມາ
ໃນແຜ່ນດິນຂອງຄົນອັມໂມນ
3 ແຕ່ບັນດາເຈົ້ານາຍຂອງຄົນອັມໂມນທູນຮານູນເຈົ້ານາຍຂອງຕົນວ່າ, “ພຣະອົງຊົງດໍາຣິວ່າ ດາວິດສົ່ງຜູ້ເລົ້າໂລມມາ
ຫາພຣະອົງ ເພາະນັບຖືພຣະຣາຊບິດາຂອງພຣະອົງເຊັ່ນນັ້ນຫລື ດາວິດບໍ່ໄດ້ສົ່ງຂ້າຣາຊການມາເພື່ອກວດເມືອງແລະ
ສອດແນມເບິ່ງ ແລະເພື່ອຈະຂວໍ້າເມືອງນີ້ເສັຽດອກຫລື”
4 ຮານູນຈຶ່ງຈັບຂ້າຣາຊການຂອງດາວິດມາໂກນຫນວດເສັຽເຄິ່ງນຶ່ງ ແລະຕັດເຄື່ອງແຕ່ງກາຍເສັຽທີ່ຊື່ຕອນກາງພຽງກະ
ໂພກ ແລ້ວປ່ອຍໃຫ້ໄປ
5 ເມື່ອມີຄົນໄປກາບທູນດາວິດໃຫ້ຊົງຊາບ ພຣະອົງກໍຮັບສັ່ງໃຫ້ຄົນໄປຮັບຂ້າຣາຊການເຫລົ່ານັ້ນ ເພາະວ່າເຂົາທັງ
ຫລາຍໄດ້ຮັບຄວາມອັບອາຍຫລາຍ ແລະພຣະຣາຊາກ່າວວ່າ, “ຈົ່ງພັກຢູ່ທີ່ເມືອງເຢຣີໂກຈົນກວ່າຫນວດຂອງທ່ານທັງ
ຫລາຍຈະຂຶ້ນແລ້ວຈຶ່ງ ຄ່ອຍກັບມາ”
6 ເມື່ອຄົນອັມໂມນເຫັນວ່າ ເຂົາທັງຫລາຍເປັນທີ່ຫນ້າກຽດຊັງແກ່ດາວິດ ຄົນອັມໂມນຈຶ່ງສົ່ງຄົນໄປຈ້າງຄົນຊີເຣັຽຊາວ
ເມືອງເບັດເຣໂຮບ ແລະຄົນຊີເຣັຽຊາວເມືອງໂຊບາເປັນທະຫານຮາບຈໍານວນສອງຫມື່ນຄົນກັບກະສັດເມືອງມາອາ
ກາພ້ອມກັບທະຫານນຶ່ງພັນຄົນ ແລະຊາວເມືອງໂຕບນຶ່ງຫມື່ນສອງພັນຄົນ
7 ເມື່ອດາວິດຊົງຊາບເຊັ່ນນັ້ນຈຶ່ງຮັບສັ່ງໂຢອາບແລະພົນໂຍທາທັງສິ້ນໃຫ້ໄປ
8 ຝ່າຍຄົນອັມໂມນກໍຍົກອອກມາ ແລະຈັດທັບໄວ້ທີ່ທາງເຂົ້າປະຕູເມືອງ ຝ່າຍຄົນຊີເຣັຽຊາວເມືອງໂຊບາ ແລະຊາວ
ເມືອງເຣໂຮບກັບຄົນເມືອງໂຕບ ແລະເມືອງມາອາກາຢູ່ທີ່ຊົນນະບົດກາງແຈ້ງຕ່າງຫາກ
9 ເມື່ອໂຢອາບເຫັນວ່າການເສິກນັ້ນຂນາບຢູ່ທັງຂ້າງຫນ້າແລະຂ້າງຫລັງທ່ານ ຈຶ່ງຄັດເອົາຄົນອິສຣາເອນທີ່ເລືອກໄວ້
ແລ້ວຈັດທັບເຂົ້າຕໍ່ສູ້ຄົນຊີເຣັຽ
10 ທ່ານມອບຄົນທີ່ເຫລືອຢູ່ໄວ້ໃນບັງຄັບບັນຊາຂອງອາບີຊັຍນ້ອງຊາຍຂອງທ່ານ ແລະເຂົາກໍຈັດຄົນເຫລົ່ານັ້ນເຂົ້າຕໍ່ສູ້
ກັບຄົນອັມໂມນ
11 ທ່ານກ່າວວ່າ, “ຖ້າກໍາລັງຄົນຊີເຣັຽແຂງເຫລືອກໍາລັງຂອງເຮົາ ເຈົ້າຈົ່ງຍົກໄປຊ່ອຍເຮົາ ແຕ່ຖ້າກໍາລັງຄົນອັມໂມນແຂງ
ເກີນກໍາລັງຂອງເຈົ້າ ເຮົາຈະຍົກມາຊ່ອຍເຈົ້າ
12 ຈົ່ງມີຄວາມກ້າຫານເຖີດ ໃຫ້ເຮົາເປັນລູກຜູ້ຊາຍເພື່ອຊົນຊາດຂອງເຮົາ ແລະເພື່ອຫົວເມືອງແຫ່ງພຣະເຈົ້າຂອງເຮົາ
ແລະຂໍພຣະຜູ້ເປັນເຈົ້າຊົງກະທໍາຕາມທີ່ພຣະອົງຊົງເຫັນຊອບເຖີດ”
13 ດັ່ງນັ້ນ ໂຢອາບກັບປະຊາຊົນທີ່ຢູ່ກັບທ່ານກໍຍົກເຂົ້າໃກ້ຕໍ່ສູ້ກັບຄົນຊີເຣັຽ ຂ້າເສິກກໍແຕກຫນີໄປຕໍ່ຫນ້າເຂົາ
14 ເມື່ອຄົນອັມໂມນເຫັນວ່າຄົນຊີເຣັຽຫນີໄປແລ້ວ ເຂົາທັງຫລາຍກໍຫນີອາບີຊັຍເຂົ້າໄປໃນເມືອງ ແລ້ວໂຢອາບກໍກັບຈາ
ກການສູ້ຮົບກັບຄົນອັມໂມນມາຍັງກຸງເຢຣູຊາເລັມ

15 ເມື່ອຄົນຊີເຣັຽເຫັນວ່າຕົນຝ່າຍແພ້ຕໍ່ອິສຣາເອນແລ້ວ ຈຶ່ງຮວບຮວມເຂົ້າດ້ວຍກັນ

16 ຝ່າຍຮາດາເດເຊີຊົງໃຊ້ຄົນໄປນຳຄົນຊີເຣັຽຢູ່ຟາກຕາເວັນອອກຂອງແມ່ນໍ້າເອີຟຣາດອອກມາ ເຂົາມາຍັງເຮລາມ ມີໂຊບາກແມ່ທັບຂອງທ່ານເປັນຜູ້ນຳໜ້າ

17 ເມື່ອມີຜູ້ກາບທູນດາວິດ ພຣະອົງຊົງຮວບຮວມອິສຣາເອນທັງໝົດຂ້າມແມ່ນໍ້າຈໍແດນມາເຖິງເຮລາມ ແລະຄົນຊີເຣັຽກໍຈັດທັບເຂົ້າຕໍ່ສູ້ດາວິດ ແລະໄດ້ຮົບກັບພຣະອົງ

18 ຄົນຊີເຣັຽກໍໜີຈາກອິສຣາເອນ ແລະດາວິດຊົງປະຫານຄົນຊີເຣັຽຊຶ່ງເປັນປະຫານຣົບເຈັດຮ້ອຍຄົນກັບທະຫານມ້າສີ່ໝື່ນຄົນ ແລະປະຫານໂຊບາກແມ່ທັບຂອງເຂົາທັງຫລາຍໃຫ້ສິ້ນຊີວິດເສັຽທີ່ນັ້ນ

19 ເມື່ອບັນດາກະສັດຊຶ່ງຂຶ້ນກັບຮາດາເດເຊີ ເຫັນວ່າຕົນຝ່າຍແພ້ຕໍ່ອິສຣາເອນແລ້ວ ເຂົາກໍຍອມສງົບສຸກກັບອິສຣາເອນ ແລະຍອມເປັນເມືອງຂຶ້ນ ດັ່ງນັ້ນ ຄົນຊີເຣັຽຈຶ່ງຢ້ານບໍ່ກ້າຊ່ອຍຄົນອັມໂມນອີກຕໍ່ໄປ

## 11 ດາວິດ ແລະນາງບັທເຊບາ

David Commits Adultery with Bathsheba

1 ໃນປີຕໍ່ມາ ພໍຕົກຣະດູແລ້ງເປັນຣະດູທີ່ບັນດາເຈົ້າຊີວິດໄດ້ເຄີຍອອກໄປຮົບເສິກ ດາວິດກໍສັ່ງໂຢອາບ ພ້ອມທັງພວກນາຍທະຫານຂອງພຣະອົງ ແລະທັງກອງທັບອິສຣາເອນອອກໄປ ພວກເຂົາໄດ້ຊະນະຊາວອັມໂມນ ແລະອ້ອມເມືອງຣັບບາໄວ້ ແຕ່ດາວິດໄດ້ຢູ່ໃນນະຄອນເຢຣູຊາເລັມ

2 ໃນຕອນແລງຂອງວັນນຶ່ງ ດາວິດໄດ້ຕື່ນແຕ່ນອນຂຶ້ນໄປເທິງຫລັງຄາພຽງຂອງພຣະຣາຊວັງ ພຣະອົງໄດ້ຍ່າງໄປມາເທິງຫລັງຄານັ້ນ ພຣະອົງຈຶ່ງເຫັນຍິງຄົນນຶ່ງກຳລັງອາບນໍ້າຢູ່ ນາງເປັນຄົນງາມຫລາຍ

3 ດັ່ງນັ້ນ ດາວິດກໍສັ່ງຄົນອອກໄປສືບຖາມເບິ່ງວ່ານາງແມ່ນໃຜ ແລ້ວໄດ້ຮູ້ວ່ານາງຊື່ ບັທເຊບາ ບຸດສາວຂອງເອລີອາມ ແລະເປັນເມັຽຂອງອູຣີຢາຊາວຮິດຕີ

4 ດາວິດໄດ້ສັ່ງຄົນໄປນຳເອົານາງມາ ພວກເຂົາກໍພານາງມາຫາພຣະອົງ ແລ້ວດາວິດກໍສົມສູ່ຢູ່ຮ່ວມກັບນາງ ຫລັງຈາກນັ້ນນາງກໍກັບເມືອເຮືອນ (ໃນລະຫວ່າງນີ້ເປັນເວລາທີ່ນາງເຊົາເປັນລະດູ ແລະທຳພິທີຊຳຮະຕົນໃຫ້ບໍຣິສຸດແລ້ວ)

5 ເມື່ອນາງຮູ້ວ່ານາງມີທ້ອງ ນາງກໍສົ່ງຂ່າວໄປບອກດາວິດ

6 ສ່ວນດາວິດກໍສົ່ງຂ່າວໄປຫາໂຢອາບວ່າ, “ໃຫ້ທ່ານສົ່ງອູຣີຢາ ຄົນຮິດຕີມາຫາເຮົາແດ່” ໂຢອາບກໍສົ່ງອູຣີຢາໄປຫາດາວິດ

7 ເມື່ອອູຣີຢາມາຮອດ ດາວິດກໍຖາມເຂົາວ່າ, “ໂຢອາບ ແລະກອງທະຫານຍັງສະບາຍດີຢູ່ບໍ ແລະການຕໍ່ສູ້ເດເປັນຢ່າງໃດ

8 ແລ້ວດາວິດກໍບອກອູຣີຢາວ່າ, “ຈົ່ງກັບຄືນເມືອພັກຜ່ອນຈັກຄາວຢູ່ເຮືອນເຈົ້າສາ” ອູຣີຢາກໍຈາກໄປ ດາວິດໄດ້ຈັດຂອງຂວັນນຳສົ່ງໃຫ້ເຂົາໄປເຖິງເຮືອນ

9 ແຕ່ວ່າແທນທີ່ອູຣີຢາຈະເມືອເຮືອນ ເຂົາກັບໄປນອນທີ່ປະຕູກຳແພງພຣະຣາຊວັງນຳທະຫານຍາມຂອງເຈົ້າຊີວິດ

10 ເມື່ອດາວິດຮູ້ວ່າ ອູຣີຢາບໍ່ໄດ້ເມືອເຮືອນ ພຣະອົງຈຶ່ງຖາມເຂົາວ່າ, “ເຈົ້າບໍ່ໄດ້ກັບຄືນເມືອເຮືອນແຕ່ດົນແລ້ວບໍ ເປັນຫຍັງຈຶ່ງບໍ່ເມືອຮອດເຮືອນປານນີ້”

11 ອູຣີຢາທູນຕອບວ່າ, “ທະຫານອິສຣາເອນ ແລະຢູດາກໍກຳລັງຢູ່ໃນສນາມຮົບ ສ່ວນຫີບຄຳສັນຍາກໍຢູ່ກັບພວກເຂົາ ແລະໂຢອາບຜູ້ບັງຄັບບັນຊາຂອງຂ້າພຣະອົງ ພ້ອມທັງພວກນາຍທະຫານຂອງທ່ານກໍຕັ້ງຄ້າຍພັກຢູ່ທາງອອກນັ້ນ ເຫດໃດຂ້າພຣະອົງຈຶ່ງຈະກັບເມືອກິນເຂົ້າ ດື່ມນໍ້າ ແລະນອນນຳເມັຽຢູ່ເຮືອນໄດ້ ຂ້າພຣະອົງຂໍສາບານຕໍ່ພຣະເຈົ້າອົງມີຊີວິດຢູ່ວ່າ ຂ້າພຣະອົງຈະບໍ່ເຮັດດັ່ງນີ້ເດັດຂາດ”

12 ດາວິດກໍເວົ້າວ່າ, “ສຳລັບມື້ນີ້ໃຫ້ເຈົ້າພັກຢູ່ນີ້ເສັຽກ່ອນ ມື້ອື່ນເຮົາຈະສົ່ງເຈົ້າກັບຄືນເມືອ” ດັ່ງນັ້ນ ໃນວັນນັ້ນ ແລະວັນຕໍ່ມາ ອູຣີຢາຈຶ່ງພັກຢູ່ນະຄອນເຢຣູຊາເລັມ

13 ດາວິດໄດ້ເຊີນໃຫ້ເຂົາມາກິນເຂົ້ານຳ ແລະເກືອເຫລົ້າເຂົາໃຫ້ເມົາ ແຕ່ວ່າໃນຄືນນັ້ນ ອູຣີຢາກໍຍັງບໍ່ກັບຄືນເມືອເຮືອນ
ເຂົານອນຮີ່ມຜ້າຢູ່ໃນຫ້ອງຍາມພຣະຣາຊວັງ

David Has Uriah Killed

14 ເຊົ້າວັນໃຫມ່ມາ ດາວິດໄດ້ຂຽນຈົດຫມາຍສົ່ງນຳອູຣີຢາໄປຫາໂຢອາບ
15 ພຣະອົງຂຽນວ່າ, "ໃຫ້ເຈົ້າສົ່ງອູຣີຢາໄປແນວຫນ້າບ່ອນທີ່ເຂົາສູ້ຮົບກັນຢ່າງຫນັກ ແລ້ວໃຫ້ພວກເຈົ້າເອງຖອຍຄືນຫລັງ
ເພື່ອປ່ອຍໃຫ້ອູຣີຢາຖືກຂ້າຕາຍຢູ່ທີ່ນັ້ນ"
16 ດັ່ງນັ້ນ ໃນຂນະທີ່ໂຢອາບກຳລັງອ້ອມເມືອງຢູ່ນັ້ນ ໂຢອາບໄດ້ສົ່ງອູຣີຢາອອກໄປໃນບ່ອນທີ່ເຂົາຮູ້ວ່າ ມີພວກສັດຕຣູ
ເຂັ້ມແຂງຫລາຍ
17 ເມື່ອກອງທັບສັດຕຣູອອກມາຈາກເມືອງກໍໄດ້ພົບກັບກຳລັງຂອງໂຢອາບ ແລະໄດ້ເກີດການສູ້ຮົບກັນຂຶ້ນທັນທີ ພວກ
ນາຍທະຫານຂອງດາວິດບາງຄົນຮວມທັງອູຣີຢາກໍຖືກສັດຕຣູສັງຫານ
18 ຕໍ່ມາ ໂຢອາບກໍສົ່ງຣາຍງານການຮົບເລວໄປບອກດາວິດ
19 ເຂົາໄດ້ແນະນຳຜູ້ນຳຂ່າວນັ້ນວ່າ "ຫລັງຈາກທີ່ເຈົ້າໄດ້ຣາຍງານທຸກສິ່ງກ່ຽວກັບການສູ້ຮົບແກ່ເຈົ້າຊີວິດແລ້ວ
20 ບາງທີພຣະອົງຈະໃຈຮ້າຍ ແລະອາດຖາມເຈົ້າວ່າ "ເປັນຫຍັງພວກເຈົ້າຈຶ່ງເຂົ້າໄປສູ້ຮົບກັບເຂົາຢູ່ໃກ້ເມືອງແທ້ ພວກ
ເຈົ້າບໍ່ຄິດບໍວ່າ ພວກເຂົາຈະຕ້ອງຍິງລູກທະນູອອກຈາກກຳແພງເມືອງໃສ່ພວກເຈົ້າ
21 ພວກເຈົ້າບໍ່ຈື່ບໍ ເວລາທີ່ອາບີເມເລກ ບຸດເຢຣຸບບາເອນຖືກຂ້ານັ້ນວ່າເປັນຢ່າງໃດ ຄືພວກຜູ້ຍິງໃນເມືອງເທເບສໄດ້
ແກ່ວງຫີນໂມ້ແປ້ງລົງຈາກກຳແພງເມືອງຖືກອາບີເມເລກຕາຍ ແລ້ວເປັນຫຍັງພວກເຈົ້າຈຶ່ງເຂົ້າໄປໃກ້ກຳແພງເມືອງ
ແທ້ ຖ້າເຈົ້າຊີວິດຖາມເຈົ້າດັ່ງນີ້ ຈົ່ງບອກທ່ານວ່າ ອູຣີຢານາຍທະຫານຂອງພຣະອົງກໍຖືກຂ້າເຫມືອນກັນ"
22 ດັ່ງນັ້ນ ຜູ້ນຳຂ່າວຈຶ່ງກາບທູນດາວິດຕາມທີ່ໂຢອາບໄດ້ສັ່ງ
23 ເຂົາເວົ້າວ່າ, "ພວກສັດຕຣູມີກຳລັງຫລາຍກວ່າພວກຂ້າພຣະອົງ ພວກເຂົາໄດ້ອອກມາຕໍ່ສູ້ກັບພວກຂ້າພຣະອົງຢູ່ນອກ
ເມືອງ ແຕ່ພວກຂ້າພຣະອົງໄລ່ພວກເຂົາກັບຄືນໄປທາງປະຕູກຳແພງເມືອງ
24 ແລ້ວພວກເຂົາໄດ້ຍິງລູກທະນູລົງຈາກກຳແພງເມືອງໃສ່ພວກຂ້າພຣະອົງ ພວກນາຍທະຫານບາງຄົນຂອງພຣະອົງຈຶ່ງ
ຕາຍ ອູຣີຢານາຍທະຫານຂອງພຣະອົງກໍຕາຍເຫມືອນກັນ"
25 ດາວິດຈຶ່ງເວົ້າຕໍ່ຜູ້ນຳຂ່າວນັ້ນວ່າ, "ຈົ່ງໃຫ້ກຳລັງໃຈແກ່ໂຢອາບ ແລະບອກທ່ານ ຢ່າໃຫ້ທ່ານເສັຽໃຈເພາະໃຜກໍບໍ່ສາ
ມາດບອກໄດ້ວ່າ ແມ່ນໃຜແດ່ຈະຖືກຂ້າໃນສະຫນາມຮົບ ຈົ່ງບອກໃຫ້ທ່ານປະກາດການສູ້ຮົບຄັ້ງຍິ່ງໃຫຍ່ກັບເມືອງ
ນັ້ນ ແລະຍຶດເອົາເມືອງນັ້ນສາ"
26 ເມື່ອບັທເຊບາໄດ້ຍິນຂ່າວວ່າຜົວຂອງຕົນຖືກຂ້າ ນາງກໍໄດ້ໄວ້ທຸກໃຫ້ເຂົາ
27 ຄັນການໄວ້ທຸກນັ້ນຜ່ານໄປແລ້ວ ດາວິດກໍເອົາບັທເຊບາມາຢູ່ໃນພຣະຣາຊວັງ ນາງກາຍເປັນເມັຽຂອງພຣະອົງ ແລະ
ໄດ້ບຸດຊາຍກັບພຣະອົງນຶ່ງຄົນ ແຕ່ວ່າພຣະຜູ້ເປັນເຈົ້າບໍ່ຊົງພໍພຣະທັຍກັບສິ່ງທີ່ດາວິດໄດ້ທຳນັ້ນ

## 12 ນາທານເຕືອນດາວິດ ແລະດາວິດໄດ້ກັບໃຈ

Nathan Condemns David

1 ຕໍ່ມາ ພຣະຜູ້ເປັນເຈົ້າຊົງສັ່ງນາທານຜູ້ປະກາດພຣະທັມໄປຫາດາວິດ ນາທານໄດ້ເລົ່າເຣື່ອງນຶ່ງສູ່ດາວິດຟັງວ່າ, "ຍັງມີ
ຊາຍສອງຄົນຢູ່ໃນເມືອງດຽວກັນ ຜູ້ນຶ່ງເປັນຄົນຮັ່ງມີ ແລະຜູ້ນຶ່ງເປັນຄົນທຸກຍາກ
2 ຊາຍຮັ່ງມີນັ້ນມີງົວ ແລະແກະຫລາຍໂຕ
3 ແຕ່ວ່າຊາຍຜູ້ທີ່ທຸກຍາກມີພຽງແຕ່ແກະນ້ອຍໂຕດຽວທີ່ເຂົາຊື້ໄວ້ ເຂົາໄດ້ລ້ຽງຮັກສາແກະນ້ອຍນັ້ນໄວ້ ໄດ້ເອົາອາຫານ
ເກືອມັນ ແລະໃຫ້ມັນກິນນ້ຳໃນຈອກຂອງເຂົາທັງໃຫ້ນອນຢູ່ເທິງຕັກ ແກະນ້ອຍນັ້ນເປັນເຫມືອນລູກສາວຂອງເຂົາ

4 ມັນໄດ້ໃຫຍ່ຂຶ້ນພ້ອມໆກັນກັບລູກຂອງເຂົາ ວັນນຶ່ງມີແຂກມາຢ້ຽມຢາມເຮືອນຂອງຄົນຮັ່ງມີ ຄົນຮັ່ງມີບໍ່ຢາກຂ້າສັດ
ຂອງຕົນໃຫ້ແຂກກິນ ເຂົາຊໍ້າໄປເອົາແກະນ້ອຍຂອງຄົນທຸກຍາກນັ້ນມາຂ້າແທນ"
5 ເມື່ອດາວິດໄດ້ຍິນດັ່ງນັ້ນ ກໍໃຈຮ້າຍຊາຍທີ່ຮັ່ງມີນັ້ນຢ່າງຮຸນແຮງ ແລະເວົ້າຂຶ້ນວ່າ, "ເຮົາຂໍສາບານຕໍ່ພຣະຜູ້ເປັນເຈົ້າ
ອົງມີພຣະຊົນວ່າ ຊາຍທີ່ກະທຳຢ່າງນັ້ນຈະຕ້ອງຕາຍ
6 ເຂົາຕ້ອງໃຊ້ຄືນສີ່ເທົ່າທີ່ເຂົາໄດ້ເອົາໄປນັ້ນ ເພາະເຂົາໄດ້ທຳໃນສິ່ງທີ່ໂຫດຮ້າຍທີ່ສຸດ"
7 ນາທານຈຶ່ງເວົ້າຕໍ່ດາວິດວ່າ, "ພຣະອົງນັ້ນແຫລະເປັນຊາຍຄົນນັ້ນ ຕໍ່ໄປນີ້ແມ່ນຄຳທີ່ພຣະຜູ້ເປັນເຈົ້າຂອງຊາວອິສຣາ
ເອນໄດ້ຊົງກ່າວໄວ້ຄື ເຮົາໄດ້ແຕ່ງຕັ້ງໃຫ້ເຈົ້າເປັນເຈົ້າຊີວິດຂອງຊາວອິສຣາເອນ ແລະຊ່ອຍຊີວິດເຈົ້າໃຫ້ພົ້ນຈາກ
ເງື້ອມມືຂອງຊາອູນ
8 ເຮົາໄດ້ມອບຣາຊອານາຈັກຂອງຊາອູນ ແລະພວກເມັຽຂອງເຂົາໃຫ້ແກ່ເຈົ້າ ເຮົາໄດ້ແຕ່ງຕັ້ງເຈົ້າເປັນເຈົ້າຊີວິດປົກຄອງ
ຣາຊອານາຈັກອິສຣາເອນແລະຢູດາ ຖ້າວ່າສິ່ງເຫລົ່ານີ້ຍັງບໍ່ທັນພຽງພໍເພື່ອເຮົາອາດຈະໃຫ້ເຈົ້າຫລາຍກວ່ານີ້ສອງເທົ່າ
9 ເປັນຫຍັງເຈົ້າຈຶ່ງປມາດຄຳສັ່ງຂອງເຮົາ ແລະເປັນຫຍັງເຈົ້າຈຶ່ງທຳສິ່ງຊົ່ວຊ້າແບບນີ້ ເຈົ້າໄດ້ທຳໃຫ້ອູຣີຢາຖືກຂ້າຢູ່ໃນ
ສນາມຮົບ ເຈົ້າປ່ອຍໃຫ້ພວກອຳໂມນຂ້າເຂົາ ແລ້ວເຈົ້າກໍເອົາເມັຽຂອງເຂົາ
10 ບັດນີ້ ໃນເຊື້ອສາຍຂອງເຈົ້າຈະມີຜູ້ຖືກຂ້າຢ່າງໂຫດຮ້າຍທາລຸນຕລອດໄປ ເພາະວ່າເຈົ້າບໍ່ຟັງຄວາມເຮົາ ແລະໄດ້ເອົາ
ເມັຽຂອງອູຣີຢາ
11 ເຮົາຂໍເວົ້າຢ່າງເດັດຂາດຕໍ່ເຈົ້າວ່າ ເຮົາຈະໃຫ້ຜູ້ນຶ່ງໃນຄອບຄົວຂອງເຈົ້າເປັນຜູ້ນຳເອົາຄວາມທຸກຍາກລຳບາກມາສູ່
ເຈົ້າ ເຈົ້າຈະໄດ້ເຫັນເຫດການດັ່ງນີ້ຄື ເມື່ອເຮົາຈະເອົາພວກເມັຽຂອງເຈົ້າຍົກໃຫ້ແກ່ຊາຍຄົນອື່ນ ແລະຊາຍຄົນນັ້ນຈະ
ສົມສູ່ຢູ່ຮ່ວມກັບພວກນາງຢ່າງເປີດເຜີຍ
12 ເຈົ້າໄດ້ທຳຜິດຢ່າງລັບລີ້ ແຕ່ເຮົາຈະສະແດງໃຫ້ພວກອິສຣາເອນເຫັນໃນສິ່ງທີ່ຊາຍຄົນນັ້ນທຳຢ່າງເປີດເຜີຍ"
13 ຝ່າຍດາວິດກໍເວົ້າຂຶ້ນວ່າ, "ຂ້າພະເຈົ້າໄດ້ທຳຜິດຕໍ່ພຣະຜູ້ເປັນເຈົ້າແລ້ວ" ນາທານຈຶ່ງເວົ້າວ່າ, "ພຣະອົງຈະບໍ່ຕາຍ
ເພາະພຣະຜູ້ເປັນເຈົ້າຈະຊົງຍົກໂທດໃຫ້ພຣະອົງ
14 ແຕ່ວ່າ ລູກຂອງພຣະອົງຈະຕາຍ ເພາະວ່າພຣະອົງທຳຢ່າງນີ້ເປັນການດູຖູກພຣະຜູ້ເປັນເຈົ້າ"
15 ແລ້ວນາທານກໍກັບຄືນເມືອເຮືອນ

**ບຸດຊາຍດາວິດຕາຍແລະໂຊໂລໂມນເກີດ**

Bathsheba's Child Dies

ຕໍ່ມາ ພຣະຜູ້ເປັນເຈົ້າຊົງທຳໃຫ້ບຸດຊາຍທີ່ດາວິດໄດ້ນຳເມັຽຂອງອູຣີຢາໄຂ້ຫນັກ
16 ດາວິດໄດ້ອ້ອນວອນຂໍໃຫ້ພຣະເຈົ້າໂຜດຊ່ອຍໃຫ້ລູກຊາຍດີ ແລະທຸກໆຄືນດາວິດໄດ້ໄປນອນຢຽດຢູ່ໃນພື້ນຫ້ອງນອນ
ຂອງພຣະອົງ ໂດຍບໍ່ຍອມກິນເຂົ້າ
17 ພວກຂ້າຣາຊການໃນພຣະຣາຊວັງຂອງພຣະອົງໄດ້ຖືກຊວນໃຫ້ພຣະອົງລຸກຂຶ້ນ ແຕ່ພຣະອົງກັບປະຕິເສດແລະບໍ່
ຍອມກິນຫຍັງຫມົດ
18 ພໍວັນທີເຈັດ ບຸດຊາຍຂອງດາວິດກໍຕາຍ ພວກຂ້າຣາຊການຂອງພຣະອົງບໍ່ກ້ານຳຂ່າວນັ້ນມາບອກພຣະອົງ ພວກເຂົາ
ໄດ້ເວົ້າກັນວ່າ, "ເມື່ອເດັກນ້ອຍຍັງມີຊີວິດຢູ່ ພວກເຮົາໄດ້ຖາມພຣະອົງ ແຕ່ພຣະອົງບໍ່ຕອບພວກເຮົາເລີຍ ເຫດໃດ
ພວກເຮົາຈຶ່ງຈະບອກພຣະອົງໄດ້ວ່າ ລູກຂອງພຣະອົງເສັຽຊີວິດແລ້ວ ພຣະອົງອາດທຳໃນສິ່ງທີ່ບໍ່ດີບໍ່ງາມກໍເປັນໄດ້"
19 ເມື່ອພວກເຂົາກຳລັງຊຶມກັນຢູ່ ດາວິດກໍເຂົ້າໃຈວ່າລູກຊາຍຂອງພຣະອົງໄດ້ຕາຍແລ້ວ ດັ່ງນັ້ນ ພຣະອົງຈຶ່ງຖາມພວກ
ເຂົາວ່າ, "ລູກເຮົາຕາຍແລ້ວແມ່ນບໍ" ພວກເຂົາກໍຕອບວ່າ, "ຕາຍແລ້ວ"
20 ດາວິດກໍລຸກຂຶ້ນໄປອາບນໍ້າຫວີຜົມ ແລະປ່ຽນເຄື່ອງນຸ່ງ ແລ້ວພຣະອົງກໍໄປນະມັສການທີ່ວິຫານຂອງພຣະຜູ້ເປັນເຈົ້າ
ເມື່ອພຣະອົງກັບຄືນມາສູ່ພຣະຣາຊວັງ ພຣະອົງກໍໄດ້ຖາມຫາອາຫານ ແລະເຂົາໄດ້ຈັດແຈ່ງອາຫານໃຫ້ພຣະອົງສເວີຍ
ໃນທັນທີທັນໃດນັ້ນເອງ

21 ພວກຂ້າຣາຊການຂອງພຣະອົງຈຶ່ງຖາມພຣະອົງວ່າ, “ເມື່ອເດັກນ້ອຍຍັງມີຊີວິດຢູ່ ພຣະອົງຊົງໂສກເສົ້າຮ້ອງໄຫ້ ແລະ
ບໍ່ຍອມສເວີຍອາຫານ ແຕ່ພໍເດັກນ້ອຍໄດ້ຕາຍໄປແລ້ວ ພຣະອົງກໍຊົງລຸກຂຶ້ນ ແລະສເວີຍອາຫານໄດ້ ພວກຂ້ານ້ອຍບໍ່
ເຂົ້າໃຈເຫດການຢ່າງນີ້ເລີຍ”
22 ດາວິດຕອບວ່າ, “ເມື່ອລູກເຮົາຍັງມີຊີວິດຢູ່ ເຮົາໄດ້ອົດອາຫານໂສກເສົ້າຮ້ອງໄຫ້ ເພາະເຮົາຄິດວ່າພຣະຜູ້ເປັນເຈົ້າ
ອາດຈະຊົງເມດຕາປະທານຊີວິດໃຫ້ແກ່ເດັກນ້ອຍນັ້ນ ແຕ່ວ່າ ດຽວນີ້ລູກໄດ້ຕາຍແລ້ວ
23 ເຮົາຈະອົດອາຫານໄປເຮັດຫຍັງ ຖ້າເຮົາອົດອາຫານຊີວິດເດັກນ້ອຍນັ້ນຈະກັບຄືນມາໄດ້ອີກບໍ ວັນນຶ່ງ ເຮົາອາດຈະໄປ
ນອນດຽວກັນກັບລູກຢູ່ ແຕ່ລູກນັ້ນຈະມາຫາເຮົາບໍ່ໄດ້”

### ໂຊໂລໂມນເກີດ

Solomon Is Born

24 ຕໍ່ມາ ດາວິດກໍອອຍໃຈບັທເຊບາຜູ້ເປັນເມັຽ ພຣະອົງໄດ້ສົມສູ່ຢູ່ຮ່ວມກັບນາງ ແລະນາງກໍອອກລູກເປັນຊາຍອີກ ດາ
ວິດໄດ້ໃສ່ຊື່ໃຫ້ວ່າ ໂຊໂລໂມນ ພຣະຜູ້ເປັນເຈົ້າຊົງຮັກເດັກນ້ອຍນີ້
25 ພຣະອົງຈຶ່ງຊົງໃຊ້ນາທານຜູ້ປະກາດພຣະທັມສັ່ງໃຫ້ດາວິດໃສ່ຊື່ເດັກນີ້ວ່າ ເຢດີດີຢາ ເພາະວ່າພຣະຜູ້ເປັນເຈົ້າຊົງຮັກ
ເຂົາ

The Ammonites Crushed

(1 ຂຄວ 20:1-3)

26 ສ່ວນໂຢອາບກໍາລັງໂຈມຕີເມືອງຣັບບາຢູ່ ຊຶ່ງເປັນເມືອງຫລວງຂອງຊາວອັມໂມນ ແລະກໍໃກ້ຈະຍຶດເອົາໄດ້ແລ້ວ
27 ເຂົາຈຶ່ງສັ່ງຜູ້ນໍາຂ່າວໄປຣາຍງານຕໍ່ດາວິດວ່າ, “ຂ້າພຣະອົງໄດ້ໂຈມຕີເມືອງຣັບບາແລະຍຶດເອົາບໍ່ນໍ້າໄດ້ແລ້ວ
28 ດຽວນີ້ໃຫ້ພຣະອົງຮວບຮວມເອົາກໍາລັງຂອງພຣະອົງທີ່ຍັງເຫລືອຢູ່ນັ້ນມາຕໍ່ສູ້ ແລະຍຶດເອົາຕົວເມືອງດ້ວຍພຣະອົງເອງ
ເທີນ ເພາະວ່າຂ້າພຣະອົງບໍ່ຢາກໄດ້ຊື່ສຽງຍ້ອນຍຶດເອົາເມືອງນີ້”
29 ດັ່ງນັ້ນ ດາວິດຈຶ່ງຮີບໂຮມເອົາກໍາລັງຂອງພຣະອົງອອກໄປເມືອງຣັບບາ ແລ້ວກໍສັ່ງບຸກຍຶດເອົາເມືອງນັ້ນ
30 ດາວິດໄດ້ເອົາກະໂຈມຮູບເຄົາຣົບຂອງພວກເຂົາມາສຸບໃສ່ຫົວພຣະອົງ ກະໂຈມນີ້ເປັນຄໍາຫນັກນຶ່ງຕະລັນ (ປະມານ
ສາມສິບຫ້າກິໂລກາມ) ແລະມີເພັດປະດັບຢູ່ເທິງກະໂຈມນີ້ ແລ້ວພຣະອົງຍັງໄດ້ເອົາຊັບສົມບັດຈາກເມືອງນີ້ໄປຢ່າງ
ຫລວງຫລາຍ
31 ສ່ວນປະຊາຊົນໃນເມືອງນັ້ນ ດາວິດໄດ້ເອົາເລື່ອຍ ຈົກ ຂວານໃຫ້ເຂົາ ແລະໃຊ້ໃຫ້ເຂົາເຮັດວຽກໃນເຕົາເຜົາດິນຈີ່ອີກ
ພຣະອົງກໍໄດ້ເຮັດຢ່າງດຽວກັນກັບປະຊາຊົນຊາວອັມໂມນໃນທຸກໆເມືອງ ແລ້ວພຣະອົງໄດ້ກັບຄືນສູ່ນະຄອນເຢຣູຊາ
ເລັມ

## 13 ອັມໂນນ ແລະຕາມາຣ໌

Amnon and Tamar

1 ຝ່າຍອັບຊາໂລມບຸດຊາຍຂອງດາວິດ ມີນ້ອງສາວຄົນນຶ່ງຮູບຮ່າງງາມຊື່ ຕາມາຣ໌ ຢູ່ຕໍ່ມາອັມໂນນບຸດຊາຍຂອງດາວິດ
ກໍຮັກນາງ
2 ດ້ວຍເຫດຕາມາຣ໌ນ້ອງສາວຄົນນີ້ ຈິດໃຈຂອງອັມໂນນກໍຖືກທໍຣະມານຈົນເຖິງກັບລົ້ມປ່ວຍ ດ້ວຍເຫດວ່ານາງເປັນ
ສາວພົມມະຈາຣີ ອັມໂນນຈຶ່ງຮູ້ສຶກວ່າຈະເຮັດຫຍັງໃຫ້ນາງບໍ່ໄດ້ເລີຍ
3 ແຕ່ອັມໂນນມີສະຫາຍຄົນນຶ່ງຊື່ໂຢນາດາບບຸດຂອງຊີເມອານ້ອງຊາຍຂອງດາວິດ ໂຢນາດາບນັ້ນເປັນຄົນເຈົ້າປັນຍາ
4 ຈຶ່ງທູນຖາມວ່າ, “ຂ້າແດ່ຣາຊໂອຣົດຂອງພຣະຣາຊາ ເປັນຫຍັງພຣະອົງຈຶ່ງຊົມເຊົາຢູ່ທຸກໆເຊົ້າ ຈະບໍ່ບອກໃຫ້ຂ້າພຣະ
ອົງຮູ້ຈັກນໍາຫລື” ອັມໂນນຕອບເຂົາວ່າ, “ເຮົາຮັກຕາມາຣ໌ນ້ອງຍິງຂອງອັບຊາໂລມ ນ້ອງຊາຍຂອງເຮົາ”

5 โยนาดาบຈຶ່ງທູນທ່ານວ່າ, “ຂໍເຊີນບັນທົມເທິງພຣະແທ່ນແກ້ງກະທຳເປັນປ່ວຍ ແລະເມື່ອສະເດັດພໍ່ມາຢ້ຽມພຣະອົງ
ຂໍກາບທູນວ່າ “ຂໍໂຜດຮັບສັ່ງຕາມາຣ໌ນ້ອງຍິງມາໃຫ້ອາຫານແກ່ຂ້າພຣະອົງ ໃຫ້ມາຕຽມອາຫານຕໍ່ໜ້າຂ້າພຣະອົງ
ເພື່ອຂ້າພຣະອົງຈະໄດ້ເຫັນ ແລະໄດ້ຮັບປະທານຈາກມືຂອງນາງ”
6 ອັມໂນນຈຶ່ງບັນທົມແກ້ງທຳເປັນປ່ວຍ ເມື່ອພຣະຣາຊາສະເດັດມາຢ້ຽມ ອັມໂນນກໍທູນພຣະຣາຊາວ່າ, “ຂໍໂຜດໃຫ້ຕາ
ມາຣ໌ນ້ອງຍິງມາທຳຂະໜົມຈັກສອງອັນຕໍ່ໜ້າຂ້າພຣະອົງ ເພື່ອຂ້າພຣະອົງຈະໄດ້ຮັບປະທານຈາກມືຂອງນາງ”
7 ດາວິດຊົງໃຊ້ຄົນໄປຫາຕາມາຣ໌ທີ່ວັງ ຮັບສັ່ງວ່າ, “ຂໍຈົ່ງໄປທີ່ບ້ານຂອງອັມໂນນອ້າຍຂອງເຈົ້າ ແລະຕຽມອາຫານໃຫ້
ເຂົາຮັບປະທານ”
8 ຕາມາຣ໌ກໍໄປຍັງວັງຂອງອັມໂນນອ້າຍຂອງນາງບ່ອນທີ່ເຂົາບັນທົມຢູ່ ນາງກໍຫຍິບແປ້ງມານວດທຳຂະໜົມຕໍ່ໜ້າ
ອ້າຍແລ້ວປີ້ງ
9 ນາງກໍຍົກກະທະມາເທອອກຕໍ່ໜ້າອ້າຍ ແຕ່ອັມໂນນກໍບໍ່ຊົງສະເຫວີຍ ກ່າວວ່າ, “ໃຫ້ທຸກຄົນອອກໄປເສັຽໃຫ້ພົ້ນເຮົາ”
ທຸກຄົນກໍອອກໄປ
10 ອັມໂນນກໍຮັບສັ່ງກັບຕາມາຣ໌ວ່າ, “ຈົ່ງເອົາອາຫານເຂົ້າມາໃນຫ້ອງໃນ ເພື່ອອ້າຍຈະໄດ້ຮັບປະທານຈາກມືຂອງເຈົ້າ”
ຕາມາຣ໌ກໍນຳຂະໜົມທີ່ນາງທຳນັ້ນເຂົ້າໄປໃນຫ້ອງເພື່ອໃຫ້ແກ່ອັມໂນນ
11 ແຕ່ເມື່ອນາງນຳຂະໜົມມາໃກ້ເພື່ອໃຫ້ທ່ານຮັບປະທານ ທ່ານກໍຈັບມືນາງໄວ້ຮັບສັ່ງວ່າ, “ນ້ອງຂອງອ້າຍເຂົ້າມານອນ
ກັບອ້າຍເຖີດ”
12 ນາງຈຶ່ງຕອບທ່ານວ່າ, “ບໍ່ໄດ້ດອກ ຂໍຢ່າບັງຄັບຂ້ອຍເລີຍ ສິ່ງຢ່າງນີ້ເຂົາບໍ່ກະທຳກັນໃນອິສຣາເອນ ຂໍຢ່າກະທຳການ
ອັບອາຍຢ່າງນີ້ເລີຍ
13 ຝ່າຍຂ້ອຍ ຂ້ອຍຈະເອົາຄວາມອັບອາຍໄປເຊື່ອງໄວ້ທີ່ໃດ ຝ່າຍທ່ານເດ່ ທ່ານຈະເປັນຄົນເສັຽໜ້າໃນອິສຣາເອນ
ເພາະສະນັ້ນຂໍທູນພຣະຣາຊາ ພຣະອົງຄົງຈະຫວງຂ້ອຍໄວ້ບໍ່ໃຫ້ທ່ານ”
14 ແຕ່ທ່ານກໍບໍ່ຟັງສຽງນາງ ດ້ວຍທ່ານມີກຳລັງຫລາຍກວ່າຈຶ່ງຂົ່ມຂືນ ແລະນອນຮ່ວມກັບນາງ
15 ຕໍ່ມາອັມໂນນກໍເບື່ອໜ່າຍ ແລະກຽດຊັງນາງ ຄວາມກຽດຊັງຄັ້ງນີ້ກໍຫລາຍຍິ່ງກວ່າຄວາມຮັກຊຶ່ງທ່ານໄດ້ຮັກນາງມາ
ກ່ອນ ແລະອັມໂນນຮັບສັ່ງກັບນາງວ່າ, “ຈົ່ງລຸກຂຶ້ນໄປ”
16 ແຕ່ນາງຕອບວ່າ, “ຢ່າເລີຍ ທີ່ຈະຂັບໄລ່ຂ້ອຍໄປຄັ້ງນີ້ນັ້ນກໍເປັນຄວາມຜິດໃຫຍ່ຍິ່ງກວ່າທີ່ທ່ານໄດ້ທຳກັບຂ້ອຍມາ
ແລ້ວ” ແຕ່ທ່ານບໍ່ໄດ້ເຊື່ອຟັງນາງ
17 ທ່ານຈຶ່ງເອີ້ນຄົນໃຊ້ທີ່ປົນນິບັດຢູ່ສັ່ງວ່າ, “ຈົ່ງໄລ່ຜູ້ຍິງຄົນນີ້ໃຫ້ອອກໄປພົ້ນໜ້າຂອງເຮົາແລ້ວປິດປະຕູໃສ່ກອນເສັຽ”
18 ນາງສວມເສື້ອຄຸມຍາວມີແຂນດັ່ງທີ່ຣາຊທິດາພົມມະຈາຣີຂອງພຣະຣາຊາສວມກັນ ຄົນໃຊ້ຂອງທ່ານຈຶ່ງໄລ່ນາງອອກ
ໄປແລະໃສ່ກອນປະຕູເສັຽ
19 ຕາມາຣ໌ກໍເອົາຂີ້ເຖົ່າໃສ່ທີ່ຫົວຂອງນາງ ແລະຈີກເສື້ອຄຸມຍາວມີແຂນທີ່ນາງສວມຢູ່ນັ້ນເສັຽ ເອົາມືກຸມຫົວເດີນໄປຮ້ອງ
ໄຫ້ໄປ
20 ອັບຊາໂລມອ້າຍຂອງນາງກໍກ່າວກັບນາງວ່າ, “ອັມໂນນໄດ້ຢູ່ກັບເຈົ້າບໍ ນ້ອງເອີຍ ຢ່າເປັນທຸກໃຈໃນເຣື່ອງນີ້ເລີຍ”
ຝ່າຍຕາມາຣ໌ກໍຢູ່ເປົ່າປ່ຽວໃນວັງຂອງອັບຊາໂລມ
21 ເມື່ອກະສັດດາວິດຊົງຊາບເຣື່ອງເຫລົ່ານີ້ທັງສິ້ນ ພຣະອົງກໍຊົງກິ້ວ
22 ແຕ່ອັບຊາໂລມບໍ່ໄດ້ກ່າວປະການໃດກັບອັມໂນນເລີຍບໍ່ວ່າດີຫລືຮ້າຍ ເພາະອັບຊາໂລມກຽດຊັງອັມໂນນຫລາຍ ເຫດ
ທີ່ທ່ານໄດ້ຂົ່ມຂືນຕາມານ້ອງສາວຂອງທ່ານ

Absalom Avenges the Violation of His Sister

23 ຕໍ່ມາອີກສອງປີເຕັມ ອັບຊາໂລມມີງານຕັດຂົນແກະທີ່ບ້ານບາອານຮາໂຊຣ໌ ຊຶ່ງຢູ່ໃກ້ເອຟຣາອິມ ແລະອັບຊາໂລມໄດ້
ເຊີນໂອຣົດທັງສິ້ນຂອງພຣະຣາຊາໄປໃນງານນັ້ນ

24 ອັບຊາໂລມໄປເຝົ້າພຣະຣາຊາທູນວ່າ, “ເບິ່ງແມ, ຂ້າພຣະອົງມີງານຕັດຂົນແກະຂໍເຊີນພຣະຣາຊາແລະຄົນໃຊ້ຂອງ
ພຣະອົງໄປໃນງານນັ້ນກັບຂ້າພຣະອົງ”

25 ແຕ່ພຣະຣາຊາກ່າວກັບອັບຊາໂລມວ່າ, “ລູກເອີຍ ຢ່າເລີຍ ຢ່າໃຫ້ພວກເຮົາໄປກັນຫມົດເລີຍ ຈະເປັນພາຣະແກ່ເຈົ້າ”
ອັບຊາໂລມຄະຍັ້ນຄະຍໍພຣະອົງ ແຕ່ປານນັ້ນພຣະອົງບໍ່ໄດ້ຍອມສະເດັດ ແຕ່ຊົງອວຍພຣະພອນໃຫ້

26 ອັບຊາໂລມຈຶ່ງກາບທູນວ່າ, “ຖ້າບໍ່ໂຜດສະເດັດກໍຂໍໃຫ້ອະນຸຍາດອຳນົນໄປດ້ວຍກັນເຖີດ” ແລະພຣະຣາຊາກ່າວ
ຖາມວ່າ, “ເປັນຫຍັງເຂົາຕ້ອງໄປກັບເຈົ້າດ້ວຍ

27 ແຕ່ອັບຊາໂລມທູນຄະຍັ້ນຄະຍໍຈົນພຣະອົງຊົງຍອມໃຫ້ອຳນົນ ແລະຣາຊໂອຣົດຂອງພຣະຣາຊາທັງສິ້ນໄປດ້ວຍ

28 ແລ້ວອັບຊາໂລມສັ່ງຄົນໃຊ້ຂອງທ່ານວ່າ, “ຈົ່ງຄອຍດູວ່າຈິດໃຈຂອງອຳນົນເພີດເພີນດ້ວຍເຫລົ້າອະງຸ່ນເມື່ອໃດ ເມື່ອ
ເຮົາສັ່ງເຈົ້າວ່າ “ຈົ່ງຕີອຳນົນ” ເຈົ້າທັງຫລາຍຈົ່ງຂ້າເຂົາເສັຽ ຢ່າຢ້ານເລີຍເຮົາສັ່ງເຈົ້າແລ້ວບໍ່ແມ່ນບໍ ຈົ່ງກ້າຫານແລະ
ເປັນຄົນເກັ່ງກ້າເຖີດ”

29 ແລະຄົນໃຊ້ຂອງອັບຊາໂລມກໍກະທຳກັບອຳນົນຕາມທີ່ອັບຊາໂລມໄດ້ສັ່ງໄວ້ ແລ້ວບັນດາຣາຊໂອຣົດຂອງພຣະຣາ
ຊາກໍພາກັນລຸກຂຶ້ນຊົງລໍ້ຂອງແຕ່ລະອົງຫນີໄປ

30 ຂນະເມື່ອຣາຊໂອຣົດໄດ້ດຳເນີນຢູ່ຕາມທາງ ມີຂ່າວໄປເຖິງດາວິດວ່າ, “ອັບຊາໂລມໄດ້ປະຫານຣາຊໂອຣົດຂອງພຣະ
ຣາຊາຫມົດແລ້ວ ບໍ່ເຫລືອຢູ່ຈັກອົງດຽວ”

31 ພຣະຣາຊາຊົງລຸກຂຶ້ນຈີກສລອງພຣະອົງ ແລະຊົງບັນທົມເທິງພື້ນດິນ ບັນດາຂ້າຣາຊການທັງສິ້ນສວມເສື້ອຜ້າຈີກຂາດ
ຢືນເຝົ້າຢູ່

32 ແຕ່ໂຢນາດາບບຸດຊີເມອານ້ອງຊາຍຂອງດາວິດກາບທູນວ່າ, “ຂໍຢ່າໃຫ້ເຈົ້ານາຍຂອງຂ້າພຣະບາດສຳຄັນຜິດໄປວ່າ
ເຂົາໄດ້ປະຫານຣາຊໂອຣົດຫນຸ່ມແຫນ້ນເຫລົ່ານັ້ນຫມົດແລ້ວ ເພາະວ່າອຳນົນສິ້ນຊີວິດແຕ່ຜູ້ດຽວ ເພາະຕາມຄຳສັ່ງ
ຂອງອັບຊາໂລມເຣື່ອງນີ້ທ່ານຕັ້ງໃຈໄວ້ແຕ່ຄັ້ງທີ່ຕາມາຣ໌ນ້ອງສາວຂອງທ່ານແລ້ວ

33 ສະນັ້ນ ຂໍພຣະຣາຊາເຈົ້ານາຍຂອງຂ້າພຣະອົງຢ່າໄດ້ຮ້ອນພຣະທັຍ ດ້ວຍສຳຄັນວ່າຣາຊໂອຣົດທັງຫມົດຂອງພຣະອົງ
ສິ້ນຊີວິດ ເພາະອຳນົນສິ້ນຊີບແຕ່ຜູ້ດຽວ”

34 ແຕ່ອັບຊາໂລມໄດ້ຫນີໄປ ຝ່າຍທະຫານຍາມຫນຸ່ມເງີຍຫນ້າຂຶ້ນເບິ່ງ ເບິ່ງແມ່, ປະຊາຊົນເປັນຈຳນວນຫລາຍກຳລັງ
ມາຈາກຖນົນໂຮໂຣນາອີມຂ້າງໆພູ

35 ໂຢນາດາບຈຶ່ງກາບທູນພຣະຣາຊາວ່າ, “ເບິ່ງແມ່, ຣາຊໂອຣົດກຳລັງດຳເນີນມາແລ້ວ ຕາມທີ່ຂ້າພຣະອົງກາບທູນກໍ
ເປັນຈິງດັ່ງນັ້ນ”

36 ຢູ່ມາເມື່ອເຂົາເວົ້າຈົບລົງ ເບິ່ງແມ່, ຣາຊໂອຣົດຂອງພຣະຣາຊາກໍມາເຖິງແລະໄດ້ຮ້ອງໄຫ້ ຝ່າຍພຣະຣາຊາກໍຮ້ອງໄຫ້
ແລະບັນດາຂ້າຣາຊການກໍຮ້ອງໄຫ້ສະອຶກສະອື້ນເຫມືອນກັນ

37 ອັບຊາໂລມໄດ້ຫນີໄປເຂົ້າເຝົ້າຕັນມັຍ ໂອຣົດຂອງອຳມີຮູດ ພຣະຣາຊາເມືອງເກຊູຣ໌ ແຕ່ດາວິດຊົງໄວ້ທຸກໃຫ້ຣາຊໂອ
ຣົດຂອງພຣະອົງເປັນເວລາດົນນານ

38 ດາວິດພຣະຣາຊາກໍຊົງຕອມພຣະທັຍອາລັຍເຖິງອັບຊາໂລມ ເພາະການທີ່ຊົງຄິດເຖິງອຳນົນນັ້ນຄ່ອຍຄາຍລົງ ດ້ວຍ
ເຂົາສິ້ນຊີວິດແລ້ວ

## 14 ໂຢອາບມີແຜນການໃຫ້ອັບຊາໂລມກັບຄືນ

Absalom Returns to Jerusalem

1 ຝ່າຍໂຢອາບບຸດນາງເຊຣູຢາຊາບວ່າ ພຣະຣາຊາອາລັຍເຖິງອັບຊາໂລມ

2 ໂຢອາບຈຶ່ງໃຊ້ຄົນໄປຍັງເມືອງເຕໂກອາພາຍິງທີ່ສລາດມາຈາກທີ່ນັ້ນຄົນນຶ່ງ ບອກນາງວ່າ, “ຂໍຈົ່ງແກ້ງທຳເປັນຄົນໄວ້
ທຸກ ສວມເສື້ອຂອງຄົນໄວ້ທຸກຢ່າຊະໂລມນ້ຳມັນ ແຕ່ແກ້ງເຮັດເຫມືອນຜູ້ຍິງທີ່ໄວ້ທຸກໃຫ້ຜູ້ຕາຍມາຫລາຍວັນແລ້ວ

3 ຈົ່ງເຂົ້າເຝົ້າພຣະຣາຊາ ກາບທູນຂໍ້ຄວາມນີ້ແກ່ພຣະອົງ" ແລະໂຢອາບກໍສອນຄຳກາບທູນໃຫ້ຍິງນັ້ນ
4 ເມື່ອຍິງຊາວເຕໂກອາມາເຝົ້າພຣະຣາຊາ ນາງກໍຊົບຫນ້າລົງເຖິງດິນຖວາຍບັງຄົມແລ້ວກາບທູນວ່າ, "ຂ້າແດ່ພຣະຣາ
ຊາ ຂໍພຣະກະຣຸນາຄຸນເປັນທີ່ເພິ່ງ"
5 ພຣະຣາຊາກ່າວຖາມຍິງນັ້ນວ່າ, "ເຈົ້າມີເຣື່ອງຫຍັງ" ນາງກາບທູນວ່າ, "ອະນິຈາ ຂ້ານ້ອຍເປັນຍິງຫມ້າຍຜົວຕາຍເສັຽ
ແລ້ວ
6 ສາວໃຊ້ຂອງພຣະອົງມີບຸດສອງຄົນ ວິວາດກັນຢູ່ໃນທົ່ງນາ ບໍ່ມີໃຜຊ່ອຍຫ້າມປາມບຸດຄົນນຶ່ງຈຶ່ງຕີອີກຄົນນຶ່ງຕາຍ
7 ເບິ່ງແມ່, ຫມູ່ຍາດພາກັນມາຫາສາວໃຊ້ຂອງຂ້ານ້ອຍບອກວ່າ "ຈົ່ງມອບຜູ້ທີ່ຂ້າອ້າຍຂອງຕົນມາໃຫ້ເຮົາ ເພື່ອເຮົາຈະ
ຂ້າເຂົາເສັຽ ເພື່ອແກ້ແຄ້ນແທນອ້າຍທີ່ເຂົາໄດ້ຂ້າເສັຽນັ້ນ ຈະໄດ້ຂ້າຜູ້ທີ່ຮັບມໍຣະດົກເສັຽດ້ວຍ" ດັ່ງວ່າຈະດັບຖ່ານໄຟ
ຂອງຂ້ານ້ອຍທີ່ຍັງເຫລືອຢູ່ນັ້ນເສັຽ ບໍ່ໃຫ້ຜົວຂອງຂ້ານ້ອຍມີຊື່ຫລືມີເຊື້ອສາຍຫລືອຢູ່ເທິງພື້ນໂລກເລີຍ"
8 ພຣະຣາຊາຈຶ່ງຮັບສັ່ງແກ່ຍິງຄົນນັ້ນວ່າ, "ໄປບ້ານຂອງເຈົ້າເຖີດ ເຮົາຈະສັ່ງການເຣື່ອງເຈົ້າ"
9 ຍິງຊາວເຕໂກອາໄດ້ກາບທູນພຣະຣາຊາວ່າ, "ຂ້າແດ່ພຣະຣາຊາ ເຈົ້ານາຍຂອງຂ້ານ້ອຍ ຂໍໃຫ້ໂທດຕົກຢູ່ກັບຂ້ານ້ອຍ
ແລະກັບເຊື້ອສາຍບິດາຂອງຂ້ານ້ອຍ ແຕ່ພຣະຣາຊາແລະຣາຊບັນລັງຂອງພຣະອົງຢ່າໃຫ້ມີໂທດເລີຍ"
10 ພຣະຣາຊາກ່າວວ່າ, "ຖ້າມີຜູ້ໃດກ່າວສິ່ງໃດແກ່ເຈົ້າ ຈົ່ງພາເຂົາມາຫາເຮົາ ຄົນນັ້ນຈະບໍ່ແຕະຕ້ອງເຈົ້າອີກເລີຍ"
11 ນາງກໍກາບທູນວ່າ, "ຂ້າແດ່ພຣະອົງ ຂໍພຣະຣາຊາຊົງກະທຳສາບານໃນພຣະນາມພຣະຜູ້ເປັນເຈົ້າພຣະເຈົ້າຂອງພຣະ
ອົງເພື່ອຜູ້ອາຄາດຈະບໍ່ກະທຳການຂ້າອີກຕໍ່ໄປ ແລະບຸດຂອງຂ້ານ້ອຍຈະບໍ່ຕ້ອງຖືກທຳລາຍ" ພຣະອົງກ່າວວ່າ, "ພຣະ
ເຈົ້າຊົງພຣະຊົນຢູ່ ເສັ້ນຜົມຂອງບຸດຂອງເຈົ້າຈັກເສັ້ນດຽວຈະບໍ່ຕົກລົງເຖິງດິນ"
12 ແລ້ວຍິງນັ້ນກາບທູນວ່າ, "ຂ້າແດ່ພຣະອົງ ຂໍສາວໃຊ້ຂອງພຣະອົງກາບທູນອີກຈັກຄຳນຶ່ງແກ່ພຣະຣາຊາເຈົ້ານາຍຂອງ
ຂ້ານ້ອຍ" ພຣະອົງກ່າວວ່າ, "ເວົ້າໄປ"
13 ຍິງນັ້ນຈຶ່ງກາບທູນວ່າ, "ເຫດໃດພຣະອົງຊົງດຳຣິຈະກະທຳຢ່າງແກ່ປະຊາກອນຂອງພຣະເຈົ້າ ໃນການທີ່ກ່າວເຊັ່ນນີ້ພ
ຣະຣາຊາຊົງກ່າວໂທດພຣະອົງເອງ ໃນປະການທີ່ພຣະຣາຊາບໍ່ໄດ້ຊົງນຳຜູ້ຖືກເນຣະເທດກັບສູ່ພຣະຣາຊວັງ
14 ຄົນເຮົາຈະຕ້ອງຕາຍຫມົດດ້ວຍກັນທຸກຄົນ ເປັນເຫມືອນນ້ຳທີ່ຫົດເທິງແຜ່ນດິນ ຈະເກັບຮວມກັບຄືນມາອີກບໍ່ໄດ້ ພ
ຣະເຈົ້າບໍ່ຊົງທຳລາຍຊີວິດ ແຕ່ຊົງດຳຣິຫາຫົນທາງບໍ່ໃຫ້ຜູ້ທີ່ຖືກເນຣະເທດຕ້ອງຖືກຊົງປະຖິ້ມ
15 ທີ່ຂ້ານ້ອຍມາກາບທູນເຣື່ອງນີ້ຕໍ່ພຣະຣາຊາເຈົ້ານາຍຂອງຂ້ານ້ອຍ ເພາະປະຊາຊົນຂູ່ຂ້ານ້ອຍໃຫ້ຢ້ານ ແລະສາວໃຊ້
ຂອງພຣະອົງຄິດວ່າ "ເຮົາຈະກາບທູນພຣະຣາຊາ ຫວັງວ່າພຣະຣາຊາຈະໂຜດຕາມຄຳຂໍຂອງຜູ້ຮັບໃຊ້ຂອງພຣະອົງ
16 ດ້ວຍພຣະຣາຊາຈະຊົງສະດັບຟັງ ແລະຊົງຊ່ອຍກູ້ຜູ້ຮັບໃຊ້ຂອງພຣະອົງໃຫ້ພົ້ນຈາກມືຂອງຜູ້ທີ່ຕັ້ງໃຈທຳລາຍເຮົາ
ແລະລູກຂອງເຮົາເສັຽຈາກມໍຣະດົກຂອງພຣະເຈົ້າ"
17 ແລະສາວໃຊ້ຂອງພຣະອົງຄິດວ່າ "ຂໍໃຫ້ພຣະດຳຣັດຂອງພຣະຣາຊາເຈົ້ານາຍຂອງເຮົາເປັນທີ່ເພິ່ງ" ເພາະພຣະຣາຊາ
ເຈົ້າຂອງເຮົາປຽບເຫມືອນທູດຂອງພຣະເຈົ້າໃນການທີ່ຈະປະຈັກຄວາມດີແລະຄວາມຊົ່ວ ຂໍພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງພຣະອົງຊົງສະຖິດຢູ່ກັບພຣະອົງເຖີດ"
18 ແລ້ວພຣະຣາຊາຊົງຕອບຍິງນັ້ນວ່າ, "ສິ່ງໃດທີ່ເຮົາຈະຖາມເຈົ້າ ເຈົ້າຢ່າປິດບັງ" ຜູ້ຍິງນັ້ນກາບທູນວ່າ, "ຂໍພຣະຣາຊາ
ເຈົ້ານາຍຂອງຂ້ານ້ອຍຈົ່ງກ່າວເຖີດ"
19 ພຣະຣາຊາຈຶ່ງກ່າວຖາມວ່າ, "ໃນເຣື່ອງທັງສິ້ນນີ້ມືຂອງໂຢອາບກ່ຽວຂ້ອງກັບເຈົ້ານຳຫລືບໍ" ຍິງນັ້ນທູນຕອບວ່າ, "ຂ້າ
ແດ່ພຣະຣາຊາເຈົ້ານາຍຂອງຂ້ານ້ອຍ ພຣະອົງຊົງພຣະຊົນຢູ່ ບໍ່ມີໃຜຫລົບຫລີກພຣະດຳຣັດຂອງພຣະຣາຊາເຈົ້ານາຍ
ຂອງຂ້ານ້ອຍໄປທາງຂວາຫລືທາງຊ້າຍໄດ້ ໂຢອາບຜູ້ຮັບໃຊ້ຂອງພຣະອົງນັ້ນແຫລະ ໃຫ້ຂ້ານ້ອຍກາບທູນ ເຂົາເປັນຜູ້
ສອນຄຳກາບທູນແກ່ຂ້ານ້ອຍສາວໃຊ້ຂອງພຣະອົງ
20 ໂຢອາບໄດ້ກະທຳເຊັ່ນນີ້ກໍເພື່ອຈະປ່ຽນໂສມຫນ້າຂອງເຫດການ ແຕ່ເຈົ້ານາຍຂອງຂ້ານ້ອຍຊົງມີພຣະສະຕິປັນຍາ ດັ່ງ
ສະຕິປັນຍາແຫ່ງທູດຂອງພຣະເຈົ້າ ຊົງຊາບທຸກສິ່ງທຸກຢ່າງທີ່ຢູ່ເທິງພິພົບ"

21 ເຈົ້າຊີວິດຊົງສັ່ງໂຢອາບວ່າ, “ເບິ່ງແມ໋, ເຮົາອະນຸມັດຕາມຄຳຂໍນີ້ແລ້ວ ຈົ່ງໄປພາອັບຊາໂລມຊາຍໜຸ່ມຄົນນັ້ນກັບມາ”
22 ໂຢອາບກໍຊົບໜ້າລົງເຖິງດິນຖວາຍບັງຄົມ ແລ້ວໂມທະນາຂອບພຣະຄຸນພຣະຣາຊາ ໂຢອາບກາບທູນວ່າ, “ຂ້າແດ່ພ
ຣະຣາຊາເຈົ້ານາຍຂອງຂ້ານ້ອຍ ວັນນີ້ຂ້ານ້ອຍຊາບວ່າ ຂ້ານ້ອຍໄດ້ຮັບພຣະກະຣຸນາໃນປະການທີ່ພຣະຣາຊາຊົງອະ
ນຸມັດຕາມຄຳທູນຂໍຂອງຂ້ານ້ອຍ”
23 ໂຢອາບຈຶ່ງລຸກຂຶ້ນໄປຍັງເກຊູຣ໌ ແລະພາອັບຊາໂລມມາຍັງກຸງເຢຣູຊາເລັມ
24 ພຣະຣາຊາຮັບສັ່ງວ່າ, “ໃຫ້ເຂົາໄປຢູ່ວັງຂອງເຂົາເຖີດ ຢ່າໃຫ້ເຂົ້າເຝົ້າເຮົາ” ອັບຊາໂລມກໍໄປຢູ່ວັງຂອງທ່ານບໍ່ໄດ້ເຂົ້າ
ເຝົ້າຕໍ່ພຣະພັກພຣະຣາຊາ

**ດາວິດໃຫ້ອະພັຍອັບຊາໂລມ**

David Forgives Absalom

25 ໃນບັນດາອິສຣາເອນບໍ່ມີຜູ້ໃດຮູບຮ່າງງາມເໝືອນອັບຊາໂລມ ໃນຕົວທ່ານຕັ້ງແຕ່ຝ່າຕີນຈົນເຖິງກະໝ່ອມບໍ່ມີບ່ອນ
ຕຳໜິເລີຍ
26 ເມື່ອທ່ານຕັດຜົມ (ທ່ານເຄີຍຕັດຜົມປີລະເທື່ອເພາະຜົມໜັກແລ້ວທ່ານກໍຕັດເສັຽ) ທ່ານກໍຊັ່ງຜົມຂອງທ່ານໄດ້ໜັກ
ສອງຮ້ອຍເຊ ເກລຕາມການຊັ່ງຕວງເບິ່ງທາງຣາຊການ ມີບຸດຊາຍສາມຄົນເກີດແກ່ອັບຊາໂລມແລະບຸດຕຣີຄົນນຶ່ງຊື່
ຕາມາຣ໌ ນາງເປັນຍິງທີ່ສວຍງາມ
27 ອັບຊາໂລມປະທັບຢູ່ໃນກຸງເຢຣູຊາເລັມໄດ້ສອງປີເຕັມ ໂດຍບໍ່ໄດ້ເຂົ້າເຝົ້າຕໍ່ພຣະພັກພຣະຣາຊາ
28 ແລ້ວອັບຊາໂລມກໍໃຫ້ໄປຕາມໂຢອາບ ຈະໃຊ້ໃຫ້ເຂົ້າໄປເຝົ້າພຣະຣາຊາແຕ່ໂຢອາບບໍ່ຍອມມາຫາທ່ານ ທ່ານກໍໃຊ້
ຄົນໄປຄັ້ງທີ່ສອງແຕ່ໂຢອາບກໍບໍ່ຍອມມາເໝືອນກັນ
29 ທ່ານຈຶ່ງສັ່ງຄົນໃຊ້ຂອງທ່ານວ່າ, “ເບິ່ງແມ໋, ນາຂອງໂຢອາບຢູ່ຖັດນາຂອງເຮົາ ເຂົາມີເຂົ້າບເລທີ່ນັ້ນ ຈົ່ງເອົາໄຟເຜົາ
ເສັຽ” ຄົນໃຊ້ຂອງອັບຊາໂລມກໍໄປເອົາໄຟເຜົານາ
30 ໂຢອາບກໍລຸກຂຶ້ນໄປຫາອັບຊາໂລມທີ່ວັງຂອງທ່ານຖາມທ່ານວ່າ, “ເປັນຫຍັງຄົນໃຊ້ຂອງທ່ານຈຶ່ງເອົາໄຟເຜົານາຂອງ
ຂ້ານ້ອຍ”
31 ອັບຊາໂລມຕອບໂຢອາບວ່າ, “ເບິ່ງແມ໋, ເຮົາສົ່ງຄົນໄປບອກທ່ານທ່ານວ່າ “ມານີ້ເຖີດ ເຮົາຈະສົ່ງທ່ານໄປຫາເຈົ້າຊີວິດ
ທູນວ່າ “ເປັນຫຍັງຈຶ່ງໃຫ້ຂ້າພຣະອົງມາຈາກກຸງເກຊູຣ໌ ຂ້າພຣະອົງຢູ່ທີ່ນັ້ນກໍດີກວ່າ” ບັດນີ້ຂໍໃຫ້ເຮົາໄດ້ເຂົ້າເຝົ້າຕໍ່ພຣະ
ພັກເຈົ້າຊີວິດ ຖ້າເຮົາມີຄວາມຜິດກໍຂໍພຣະອົງຊົງປະຫານເຮົາເສັຽ”
32 ໂຢອາບຈຶ່ງເຂົ້າໄປເຝົ້າເຈົ້າຊີວິດກາບທູນພຣະອົງ ພຣະອົງກໍຊົງເອີ້ນອັບຊາໂລມທ່ານຈຶ່ງເຂົ້າໄປເຝົ້າເຈົ້າຊີວິດໂນ້ມ
ກາຍລົງຊົບໜ້າລົງດິນຕໍ່ພຣະພັກເຈົ້າຊີວິດ ເຈົ້າຊີວິດກໍຊົງຈູບອັບຊາໂລມ

## 15 ການກະບົດຂອງອັບຊາໂລມ

Absalom Usurps the Throne

1 ຕໍ່ມາ ອັບຊາໂລມໄດ້ຈ້າງເອົາຣົດຮົບ ແລະຝູງມ້າພ້ອມທັງທະຫານຫ້າສິບຄົນແຫ່ຕີນອອກໄປ
2 ອັບຊາໂລມເຄີຍລຸກແຕ່ເດິກ ແລະອອກໄປຢືນຢູ່ປະຕູກຳແພງເມືອງໃກ້ທົນທາງ ເວລາໃດ ເຫັນຄົນມີເຣື່ອງຜິດຖຽງກັນ
ຜ່ານມາທາງນັ້ນເພື່ອຈະໄປຫາເຈົ້າຊີວິດຕັດສິນຄວາມໃຫ້ ອັບຊາໂລມກໍເອີ້ນມາ ແລະຖາມວ່າ, “ເຈົ້າມາແຕ່ໃສ” ຖ້າ
ຜູ້ນັ້ນຕອບວ່າ ມາຈາກຕະກູນນີ້ ຫລືຕະກູນນັ້ນໃນອິສຣາເອນ
3 ອັບຊາໂລມກໍເວົ້າໂລດວ່າ, “ເຈົ້າເປັນຝ່າຍຖືກຕ້ອງຕາມກົດໝາຍແລ້ວ ແຕ່ວ່າບໍ່ມີໃຜຈະເປັນຜູ້ຕາງໜ້າເຈົ້າຊີວິດ
ຟັງເຣື່ອງຄະດີຂອງເຈົ້ານີ້ດອກ”
4 ອັບຊາໂລມເວົ້າຕໍ່ໄປວ່າ, “ຖ້າວ່າ ເຮົາໄດ້ເປັນຜູ້ຕັດສິນຄວາມ ຄັນມີຜູ້ໃດຜູ້ນຶ່ງມີເຣື່ອງຜິດຖຽງກັນ ຫລືມີຄຳຮ້ອງທຸກ
ມາຫາເຮົາ ເຮົາກໍຈະໃຫ້ຄວາມຍຸດຕິທັມແກ່ເຂົາ”

5 ພໍເມື່ອມີຄົນເຂົ້າມາຫາກົ້ມຂາບໃສ່ອັບຊາໂລມ ອັບຊາໂລມກໍອອກໄປຈັບມື ແລະກອດດ້ວຍຄວາມດີໃຈ

6 ທ່ານເຮັດດັ່ງນີ້ກັບຊາວອິສຣາເອນທຸກຄົນ ທີ່ມາຫາເຈົ້າຊີວິດຕັດສິນຄວາມໃຫ້ ແລະທ່ານກໍເອົາອົກເອົາໃຈຂອງພວກເຂົາ

7 ຈາກນັ້ນມາໄດ້ສີ່ປີ ອັບຊາໂລມໄດ້ກາບທູນເຈົ້າວິດວ່າ, "ຂ້າແດ່ສະເດັດພໍ່ ຂໍຊົງອະນຸຍາດໃຫ້ຂ້ານ້ອຍໄປເມືອງເຮໂບຣນແດ່ທ້ອນ ເພາະຂ້ານ້ອຍຢາກໄປແກ້ບະທີ່ໄດ້ສັນຍາໄວ້ກັບພຣະຜູ້ເປັນເຈົ້າ

8 ຄືຕອນທີ່ຂ້ານ້ອຍຢູ່ໃນເມືອງກູເຊຣ໌ທີ່ເຂດອາຣາມ ຂ້ານ້ອຍໄດ້ສັນຍາຕໍ່ພຣະຜູ້ເປັນເຈົ້າວ່າ ຄັນຖ້າພຣະອົງຊົງໃຫ້ຂ້ານ້ອຍກັບຄືນເມືອນະຄອນເຢຣູຊາເລັມ ຂ້ານ້ອຍຈະນະມັສການພຣະອົງທີ່ເມືອງເຮໂບຣນ

9 ແລ້ວເຈົ້າຊີວິດກໍບອກວ່າ, "ຈົ່ງໄປດີເຖີດ" ດັ່ງນັ້ນ ອັບຊາໂລມກໍມຸ່ງຫນ້າໄປເມືອງເຮໂບຣນ

10 ແຕ່ທ່ານໄດ້ໃຊ້ຜູ້ສື່ງຂ່າວໄປບອກທຸກໆຕະກູນອິສຣາເອນວ່າ ຄັນຖ້າພວກເຂົາໄດ້ຍິນສຽງແກໃຫ້ພາກັນເວົ້າວ່າ, "ອັບຊາໂລມໄດ້ເປັນເຈົ້າຊີວິດທີ່ເມືອງເຮໂບຣນແລ້ວ"

11 ອັບຊາໂລມໄດ້ເຊີນເອົາຊາຍສອງຮ້ອຍຄົນຈາກນະຄອນເຢຣູຊາເລັມເດີນທາງຮ່ວມໄປນຳ ພວກເຫລົ່ານີ້ໄປດ້ວຍຄວາມຊື່ສັດ ໂດຍທີ່ບໍ່ຮູ້ຈັກກົນອຸບາຍແຕ່ຢ່າງໃດຫມົດ

12 ໃນເວລາທີ່ອັບຊາໂລມກຳລັງຖວາຍເຄື່ອງບູຊາຢູ່ນັ້ນ ເຂົາໄດ້ສົ່ງຄົນໄປນຳເອົາອາຮີທໂອເຟນຊາວກີໂລ ທີ່ປຶກສາຂອງກະສັດດາວິດທີ່ເມືອງກີໂລ ແຜນການກະບົດຕໍ່ຕ້ານເຈົ້າຊີວິດກໍເພີ່ມທະວີຂຶ້ນ ພວກທີ່ຕິດຕາມອັບຊາໂລມກໍເພີ່ມຈຳນວນຂຶ້ນເລື້ອຍໆ

**ກະສັດດາວິດປົບຫນີຈາກນະຄອນເຢຣູຊາເລັມ**

David Flees from Jerusalem

13 ຜູ້ນຳຂ່າວໄດ້ມາຣາຍງານຕໍ່ດາວິດວ່າ, "ພວກອິສຣາເອນໄດ້ຕິດຕາມອັບຊາໂລມ ແລະໄດ້ສະແດງຄວາມຈົ່ງຮັກພັກດີຕໍ່ເຂົາແລ້ວ"

14 ດາວິດຈຶ່ງເຕົ້າໂຮມພວກຂ້າຣາຊການທີ່ຢູ່ໃນນະຄອນເຢຣູຊາເລັມ ແລະຮັບສັ່ງວ່າ, "ຖ້າພວກເຮົາຢາກລອດພົ້ນຈາກເງື້ອມມືຂອງອັບຊາໂລມ ພວກເຮົາຕ້ອງພາກັນຫນີໄປດຽວນີ້ ອີກບໍ່ດົນເຂົາກໍຈະມາບ່ອນນີ້ ພວກເຮົາຈະເສັຽໄຊໃຫ້ເຂົາ ແລະເຂົາຈະຂ້າທຸກໆຄົນໃນເມືອງນີ້"

15 ພວກເຂົາຕອບວ່າ, "ຂ້າແດ່ພຣະອົງ ພວກຂ້ານ້ອຍພ້ອມທີ່ຈະທຳທຸກຢ່າງຕາມທີ່ພຣະອົງຊົງຮັບສັ່ງ"

16 ແລ້ວກະສັດພ້ອມທັງທຸກຄົນໃນຄອບຄົວ ແລະພວກຂ້າຣາຊການກໍພາກັນຫນີໄປ ເວັ້ນໄວ້ແຕ່ພວກເມັຽນ້ອຍສິບຄົນທີ່ພຣະອົງໄດ້ປະໄວ້ໃຫ້ເປັນຜູ້ເຝົ້າພຣະຣາຊວັງ

17 ໃນເວລາຫນີອອກຈາກເມືອງນັ້ນ ເຈົ້າຊີວິດແລະພວກຂ້າຣາຊການຢຸດຢູ່ທີ່ເຮືອນຫລັງສຸດທ້າຍ

18 ບັນດາຂ້າຣາຊການທັງຫມົດເດີນຜ່ານພຣະອົງໄປ ບັນດາຄົນເຄເຣທ ພວກເປເຣທ ແລະຄົນກາດຫົກຮ້ອຍຄົນທີ່ຕິດຕາມພຣະອົງມາຈາກເມືອງກາດ ໄດ້ເດີນຜ່ານພຣະອົງໄປ

19 ເຈົ້າຊີວິດຈຶ່ງເວົ້າຕໍ່ອິທຕັຍ ຜູ້ນຳຫນ້າທະຫານນັ້ນວ່າ, "ເປັນຫຍັງເຈົ້າຈຶ່ງມາກັບພວກເຮົາ ເຈົ້າກັບເມືອຢູ່ກັບກະສັດອົງໃຫມ່ສາ ເຈົ້າເປັນຄົນຕ່າງປະເທດ ແລະເປັນຄົນອົບພະຍົບຈາກບ້ານເກີດເມືອງນອນມາ

20 ເຈົ້າໄດ້ອາໄສຢູ່ນີ້ພຽງຊົ່ວຄາວເທົ່ານັ້ນ ເປັນການສົມຄວນບໍ ທີ່ເຮົາຈະໃຫ້ເຈົ້າໄປມາກັບເຮົາ ເຮົາເອງກໍບໍ່ຮູ້ຈັກວ່າຈະໄປທາງໃດ ຈົ່ງກັບຄືນເມືອສາ ແລະພາເພື່ອນຮ່ວມຊາດຂອງເຈົ້າໄປນຳດ້ວຍ ຂໍໃຫ້ພຣະຜູ້ເປັນເຈົ້າຊົງກະຣຸນາ ແລະເປັນທີ່ເພິ່ງຂອງພວກເຈົ້າເທີນ"

21 ແຕ່ອິທຕັຍຕອບວ່າ, "ຂ້າແດ່ພຣະອົງ ຂ້ານ້ອຍຂໍສາບານໃນພຣະນາມພຣະຜູ້ເປັນເຈົ້າວ່າ ຂ້ານ້ອຍຈະໄປກັບພຣະອົງຕລອດທຸກທີ່ທຸກບ່ອນເຖິງແມ່ນວ່າຈະຕາຍກໍຕາມ"

22 ດາວິດຈຶ່ງຕອບວ່າ, "ດີແລ້ວ ຈົ່ງເດີນທາງຕໍ່ໄປ" ແລ້ວອິທຕັຍພ້ອມທັງທະຫານແລະລູກເມັຽຂອງພວກເຂົາກໍພາກັນອອກເດີນທາງ

23 ໃນຂະນະທີ່ພວກຕິດຕາມດາວິດກຳລັງຍ່າງອອກນັ້ນ ພວກປະຊາຊົນໄດ້ຮ້ອງໄຫ້ດ້ວຍສຽງດັງ ດາວິດພ້ອມທັງທະຫານ
ກໍຂ້າມຫ້ວຍກິດໂຣນໄປ ພວກເຂົາໄດ້ມຸ່ງໜ້າໄປສູ່ຖິ່ນກັນດານ
24 ສ່ວນປະໂຣຫິດຊາໂດກ ພ້ອມທັງຄົນເລວີທີ່ຫາມຫີບຄຳສັນຍາອັນສັກສິດກໍຢູ່ນຳເຈົ້າຊີວິດ ພວກເຂົາປົງຫີບນັ້ນໄວ້
ຝ່າຍອາບີອາທາກໍຂຶ້ນມາຈົນເທົ່າປະຊາຊົນໄດ້ໜີຈາກເມືອງໄປໝົດ
25 ແລ້ວເຈົ້າຊີວິດໄດ້ເວົ້າກັບຊາໂດກວ່າ, “ຈົ່ງຫາມຫີບຄຳສັນຍາກັບຄືນເມືອເມືອງ ຖ້າວ່າພຣະຜູ້ເປັນເຈົ້າຊົງພໍພຣະທັຍ
ກັບຂ້າພະເຈົ້າ ວັນນຶ່ງຂ້າງໜ້າ ພຣະອົງຈະຊົງໃຫ້ຂ້າພະເຈົ້າກັບຄືນມາຫາບ່ອນຫີບນີ້ຢູ່ອີກ
26 ແຕ່ຖ້າວ່າພຣະອົງບໍ່ຊົງພໍພຣະທັຍກັບຂ້າພະເຈົ້າ ຂໍໃຫ້ພຣະອົງກະທຳຕໍ່ຂ້າພະເຈົ້າຕາມພຣະຣາຊປະສົງ”
27 ແລ້ວດາວິດກໍເວົ້າກັບຊາໂດກຕໍ່ໄປວ່າ, “ຈົ່ງພາອາຮີມາອັສບຸດຊາຍຂອງທ່ານ ແລະໂຢນາທານບຸດຊາຍຂອງອາບີອາ
ທາກັບຄືນເມືອເມືອງດ້ວຍຄວາມເປັນສຸກເຫີນ”
28 ໃນລະຫວ່າງນີ້ ຂ້າພະເຈົ້າຈະຄອຍຖ້າຢູ່ຖິ່ນກັນດານໃກ້ບ່ອນຂ້າມແມ່ນ້ຳ ຈົນກວ່າຂ້າພະເຈົ້າຈະໄດ້ຮັບຂ່າວຈາກ
ທ່ານ”
29 ຊາໂດກ ແລະອາບີອາທາກໍນຳຫີບຄຳສັນຍາກັບຄືນເມືອນະຄອນເຢຣູຊາເລັມ ແລະພັກຢູ່ທີ່ນັ້ນ
30 ແລ້ວດາວິດກໍຂຶ້ນໄປຮ້ອງໄຫ້ຢູ່ເທິງພູກົກໝາກ
ກອກ ພຣະອົງເອົາຜ້າຄຸມຫົວ ແລະປະຕີນເປົ່າ ທຸກຄົນທີ່ຕິດຕາມພຣະອົງໄປກໍເອົາຜ້າຄຸມຫົວ ແລະຮ້ອງໄຫ້ຄືກັນ
31 ຕໍ່ມາ ມີຄົນມາບອກດາວິດວ່າ, “ອາຮີໂທເຟນໄດ້ເຂົ້າຮ່ວມເປັນກະບົດກັບອັບຊາໂລມແລ້ວ ດາວິດຈຶ່ງອ້ອນວອນຕໍ່ພ
ຣະຜູ້ເປັນເຈົ້າວ່າ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງເຮັດໃຫ້ຄຳປຶກສາຂອງອາຮີໂທເຟນເປັນໂມຄະ

**ຮູຊັຍກາຍເປັນນັກສືບຂອງດາວິດ**

Hushai Becomes David’s Spy

32 ແລ້ວດາວິດໄດ້ຂຶ້ນໄປເທິງຍອດພູນ້ອຍ ຢູ່ທີ່ນັ້ນມີບ່ອນນະມັສການ ພຣະອົງໄດ້ພົບກັບຮູຊັຍຊາວເມືອງອາຣ໌ຄີ ຊຶ່ງ
ເປັນເພື່ອນທີ່ຊື່ສັດຂອງພຣະອົງ ເຂົາໄດ້ຈີກເສື້ອຜ້າແລະເອົາຂີ້ດິນໃສ່ຫົວ
33 ດາວິດຈຶ່ງເວົ້າກັບເຂົາວ່າ, “ຖ້າວ່າເຈົ້າມາກັບເຮົາ ເຈົ້າກໍຈະຊ່ອຍຫຍັງເຮົາບໍ່ໄດ້ດອກ
34 ແຕ່ວ່າເຈົ້າຈະຊ່ອຍເຮົາໄດ້ແຕ່ຢ່າງດຽວ ໂດຍເຮັດໃຫ້ຄຳສເນີຂອງອາຮີໂທເຟນຫລົ້ມເຫລວໄປ ຄືໃຫ້ເຈົ້າກັບຄືນເມືອ
ເມືອງແລະເວົ້າກັບອັບຊາໂລມດັ່ງນີ້ວ່າ “ຂ້າແດ່ພຣະອົງ ບັດນີ້ຂ້ານ້ອຍຈະຮັບໃຊ້ພຣະອົງດັ່ງທີ່ໄດ້ຮັບໃຊ້ສະເດັດ
ພໍ່ຂອງພຣະອົງມາແລ້ວ”
35 ດາວິດໄດ້ບອກອີກວ່າ ປະໂຣຫິດຊາໂດກແລະອາບີອາທາກໍຢູ່ບ່ອນນັ້ນ ຖ້າວ່າເຈົ້າໄດ້ຍິນເຣື່ອງພາຍໃນພຣະຣາຊວັງ
ຂອງເຈົ້າຊີວິດຈົ່ງບອກພວກເຂົາໂລດ
36 ພວກເຂົາມີລູກຊາຍຢູ່ນຳ ຄືອາຮີມາອັສ ແລະໂຢນາທານ ໃຫ້ເຈົ້າບອກເຂົາທັງສອງນຳຂ່າວທັງໝົດທີ່ເຈົ້າຮັບໂຮມ
ໄດ້ມາໃຫ້ເຮົາ”
37 ດັ່ງນັ້ນ ຮູຊັຍເພື່ອນຂອງດາວິດກໍກັບຄືນເມືອເມືອງ ພໍດີກັບເວລາທີ່ອັບຊາໂລມມາຮອດ

## 16 ດາວິດ ແລະຊີບາ

David’s Adversaries

1 ເມື່ອດາວິດຍ່າງກາຍຍອດພູໄປໜ້ອຍນຶ່ງ ໃນທັນໃດນັ້ນ ພຣະອົງກໍພົບກັບຊີບາຄົນໃຊ້ຂອງເມຟີໂບເຊທ ຊີບາມີລໍຄູ່
ນຶ່ງທີ່ບັນທຸກເຂົ້າຈີ່ສອງຮ້ອຍກ້ອນ ໝາກອະງຸ່ນແຫ້ງຮ້ອຍມັດ ໝາກໄມ້ສົດຮ້ອຍມັດ ແລະຖົງນ້ຳອະງຸ່ນ
2 ກະສັດດາວິດຈຶ່ງຖາມເຂົາວ່າ, “ເຈົ້າຈະເອົາຂອງເຫລົ່ານີ້ໄປເຮັດຫຍັງ” ຊີບາກໍຕອບວ່າ, “ລໍຄູ່ນີ້ສຳລັບໃຫ້ຄົນໃນຄອບ
ຄົວຂອງພຣະອົງຂີ່ ສ່ວນເຂົ້າຈີ່ແລະໝາກໄມ້ເອົາໃຫ້ທະຫານຂອງພຣະອົງກິນ ແລະນ້ຳອະງຸ່ນນີ້ກໍໃຫ້ພວກທະຫານ
ເຫມືອນກັນ ເວລາທີ່ພວກເຂົາອິດເມື່ອຍຢູ່ໃນຖິ່ນກັນດານ”

3 ເຈົ້າຊີວິດໄດ້ຖາມອີກວ່າ, “ເມຟີໂບເຊທຫລານຊາຍຂອງ ຊາອູນນາຍຂອງເຈົ້າຢູ່ໃສ” ຊີບາທູນຕອບວ່າ, “ເມຟີໂບເຊທ
ຍັງຢູ່ໃນນະຄອນເຢຣູຊາເລັມ ເພາະທ່ານເຊື່ອວ່າ ດຽວນີ້ພວກອິສຣາເອນຈະມອບຣາຊອານາຈັກຂອງຊາອູນໃຫ້ທ່ານ
ເພາະທ່ານເປັນຫລານຊາຍຂອງຊາອູນ”
4 ເຈົ້າຊີວິດຈຶ່ງເວົ້າຕໍ່ຊີບາວ່າ, “ທຸກໆສິ່ງທີ່ໄດ້ເປັນຂອງເມຟີໂບເຊທນັ້ນກໍເປັນຂອງເຈົ້າ” ຊີບາທູນຕອບວ່າ, “ຂ້າແດ່ພ
ຣະອົງ ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ ຂໍພຣະອົງຈົ່ງປານີຂ້ານ້ອຍຕລອດໄປເທີນ”

**ດາວິດ ແລະຊີເມອີ**

David and Shimei

5 ເມື່ອກະສັດໄປຮອດເມືອງບາຮູຣິມ ຊີເມອີບຸດຊາຍຂອງເກຣາຫລານຊາຍຂອງຊາອູນໄດ້ມາດ່າດາວິດ
6 ໃນຂນະທີ່ດາວິດຢູ່ຖ້າມກາງພວກທະຫານແລະພວກອົງຄະຣັກຂອງພຣະອົງ ຊີເມອີໄດ້ແກວ່ງກ້ອນຫີນໄປໃສ່ພຣະອົງ
ແລະໃສ່ບັນດາຂ້າຣາຊການຂອງພຣະອົງ
7 ຊີເມອີໄດ້ດ່າພຣະອົງວ່າ, “ຜູ້ຮ້າຍຂ້າຄົນ ອາຊຍາກອນຮ້າຍ ຈົ່ງຫນີອອກໄປ
8 ເຈົ້າໄດ້ຍຶດເອົາຣາຊອານາຈັກຂອງຊາອູນ ເຈົ້າໄດ້ຂ້າຫລາຍຄົນໃນຄອບຄົວຊາອູນ ພຣະຜູ້ເປັນເຈົ້າຊົງໃສ່ໂທດເຈົ້າ
ດຽວນີ້ພຣະຜູ້ເປັນເຈົ້າໄດ້ຍົກຣາຊອານາຈັກໃຫ້ແກ່ອັບຊາໂລມລູກຊາຍຂອງເຈົ້າແລ້ວ ສ່ວນເຈົ້າເອງກໍຈະໄດ້ຮັບແຕ່
ຄວາມຈິບຫາຍ ເພາະວ່າເຈົ້າເປັນຜູ້ຂ້າຄົນ”
9 ແລ້ວອາບີຊັຍ ບຸດຂອງເຊຣູຢາກໍທູນຕໍ່ດາວິດວ່າ, “ຂ້າແດ່ພຣະອົງ ເປັນຫຍັງພຣະອົງຈຶ່ງປ່ອຍໃຫ້ຫມາຕົວນີ້ດ່າພຣະ
ອົງ? ຂໍໂຜດອະນຸຍາດໃຫ້ຂ້ານ້ອຍອອກໄປຕັດຫົວຂອງມັນຢູ່ບ່ອນນັ້ນເທີນ”
10 ເຈົ້າຊີວິດເວົ້າຕໍ່ອາບີຊັຍ ແລະໂຢອາບອ້າຍຂອງເຂົາວ່າ, “ເຣື່ອງນີ້ບໍ່ແມ່ນເຣື່ອງຂອງເຈົ້າ ຖ້າວ່າພຣະຜູ້ເປັນເຈົ້າຊົງອະ
ນຸຍາດໃຫ້ເຂົາດ່າເຮົາ ໃຜຈະກ້າໄປຖາມເຂົາວ່າ “ເປັນຫຍັງເຈົ້າຈຶ່ງດ່າ”
11 ແລ້ວດາວິດກໍເວົ້າຕໍ່ອາບີຊັຍແລະພວກຂ້າຣາຊການທຸກຄົນວ່າ ລູກຊາຍຂອງເຮົາເອງພຍາຍາມຈະຂ້າເຮົາຢູ່ ສະນັ້ນ
ຈະປລາດໃຈຫຍັງກັບຄົນເບັນຢາມິນຜູ້ນີ້ປ່ອຍໃຫ້ເຂົາດ່າເຮົາຢູ່ຢ່າງນີ້ແຫລະ ຢ່າໄປຫຍຸ້ງກ່ຽວກັບເຂົາ ເພາະພຣະຜູ້
ເປັນເຈົ້າຊົງໃຫ້ເຂົາທຳດັ່ງນັ້ນ
12 ບາງທີ່ພຣະຜູ້ເປັນເຈົ້າຈະຊົງທອດພຣະເນດເຫັນຄວາມທຸກໃຈຂອງເຮົາ ແລະຈະຊົງປະທານພອນແກ່ເຮົາແທນ
ຄວາມດ່າຂອງເຂົາ”
13 ແລ້ວດາວິດແລະທະຫານຂອງພຣະອົງກໍອອກເດີນທາງຕໍ່ໄປ ສ່ວນຊີເມອີກໍຍ່າງຕິດຕາມໄປທາງເບື້ອງຂ້າງພູນ້ອຍ
ເຂົາຍ່າງທັງດ່າ ທັງແກວ່ງກ້ອນຫີນແລະຫວ່ານດິນໃສ່
14 ເມື່ອມາເຖິງແມ່ນ້ຳຈໍແດນ ເຈົ້າຊີວິດແລະພວກທະຫານຂອງພຣະອົງກໍອ່ອນເພັຽຫລາຍ ຈຶ່ງໄດ້ພາກັນຢຸດພັກຢູ່ບ່ອນ
ນັ້ນ

**ອັບຊາໂລມຢູ່ທີ່ນະຄອນເຢຣູຊາເລັມ**

The counsel of Ahithophel

15 ຕໍ່ມາ ອັບຊາໂລມກັບຊາວອິສຣາເອນພັກພວກຂອງເຂົາກໍເຂົ້າມານະຄອນເຢຣູຊາເລັມ ສ່ວນອາຮີໂທເຟນກໍຢູ່ກັບ
ພວກເຂົາ
16 ເມື່ອຮູຊັຍເພື່ອນທີ່ຊື່ສັດຂອງດາວິດພົບອັບຊາໂລມ ເຂົາກໍເວົ້າຂຶ້ນວ່າ, “ຂໍໃຫ້ພຣະຣາຊາຈົ່ງຊົງພຣະຈະເຣີນ ຂໍໃຫ້ພ
ຣະຣາຊາຈົ່ງຊົງພຣະຈະເຣີນ”
17 ອັບຊາໂລມກໍຖາມເຂົາວ່າ, “ເປັນຫຍັງທ່ານຈຶ່ງບໍ່ໄປກັບເພື່ອນຂອງທ່ານ ທ່ານສະແດງຄວາມຈົງຮັກພັກດີຕໍ່ສະຫາຍ
ຂອງທ່ານດ້ວຍຢ່າງນີ້ບໍ”
18 ຮູຊັຍໄດ້ຕອບວ່າ, “ຂ້ານ້ອຍຈະໄປໄດ້ຢ່າງໃດ ຂ້ານ້ອຍເປັນຝ່າຍຂອງຜູ້ທີ່ພຣະຜູ້ເປັນເຈົ້າຊົງເລືອກໄວ້ ເປັນຝ່າຍຂອງ
ຜູ້ທີ່ປະຊາຊົນພວກອິສຣເອນທຸກຄົນໄດ້ເລືອກໄວ້ ຂ້ານ້ອຍຈະຢູ່ກັບພຣະອົງ

19 ອີກຢ່າງນຶ່ງ ຖ້າຂ້ານ້ອຍບໍ່ຮັບໃຊ້ລູກຊາຍນາຍຂອງຕົນແລ້ວ ຂ້ານ້ອຍຈະໄປຮັບໃຊ້ຜູ້ໃດ ຂ້ານ້ອຍໄດ້ຮັບໃຊ້ສະເດັດພໍ່
ຂອງພຣະອົງຢ່າງໃດ ຂ້ານ້ອຍກໍຈະຮັບໃຊ້ພຣະອົງຢ່າງນັ້ນ"
20 ແລ້ວອັບຊາໂລມກໍຫັນໜ້າໄປເວົ້າກັບອາຮີໂທເຟນວ່າ, "ຈົ່ງໃຫ້ຄຳແນະນຳແກ່ພວກເຮົາແດ່ວ່າ ພວກເຮົາຄວນຈະ
ເຮັດຢ່າງໃດ"
21 ອາຮີໂທເຟນຈຶ່ງຕອບວ່າ, "ໃຫ້ພຣະອົງໄປສົມສູ່ຢູ່ກັບພວກເມັຽນ້ອຍສະເດັດພໍ່ຂອງພຣະອົງ ຊຶ່ງທ່ານໄດ້ປະໄວ້ໃຫ້
ເປັນຜູ້ເຝົ້າພຣະຣາຊວັງນັ້ນແລ້ວທຸກຄົນໃນອິສຣາເອນກໍຈະຮູ້ວ່າ ພຣະອົງກັບສະເດັດພໍ່ຂອງພຣະອົງເປັນສັດຕຣູກັນ
ແລະພວກທີ່ຕິດຕາມພຣະອົງກໍຈະມີກຳລັງໃຈຫລາຍຂຶ້ນ"
22 ດັ່ງພວກເຂົາຈຶ່ງກາງຜ້າເຕັນຢູ່ເທິງຫລັງຄາພຽງພຣະຣາຊວັງ ໃຫ້ອັບຊາໂລມເຂົ້າໄປສົມສູ່ຢູ່ຮ່ວມກັບເມັຽນ້ອຍຂອງບິ
ດາ
23 ໃນເວລານັ້ນ ທຸກໆຄົນທຳຕາມຄຳແນະນຳຂອງອາຮີໂທເຟນເຫມືອນເປັນຄຳເວົ້າຂອງພຣະເຈົ້າ ດາວິດແລະອັບຊາ
ໂລມກໍທຳຕາມຄຳແນະນຳນີ້ເຫມືອນກັນ

## 17 ຄຳປຶກສາຂອງອາຮີໂທເຟນແພ້ຂອງຮູຊັຍ

Hushai Misleads Absalom

1 ຕໍ່ມາ ອາຮີໂທເຟນໄດ້ເວົ້າກັບອັບຊາໂລມວ່າ, "ຂໍໂຜດໃຫ້ຂ້ານ້ອຍເລືອກເອົາທະຫານສິບສອງພັນຄົນ ແລ້ວໃນແລງມື້
ນີ້ຂ້ານ້ອຍຈະອອກໄປຕິດຕາມຫາກະສັດດາວິດ
2 ຂ້ານ້ອຍຈະໄປຕໍ່ສູ້ໃນຂນະທີ່ດາວິດກຳລັງເມື່ອຍ ແລະທໍ້ຖອຍກຳລັງໃຈ ພຣະອົງຈະຕື່ນຕົກໃຈ ແລະພວກທະຫານ
ຂອງພຣະອົງກໍຈະພາກັນປົບຫນີໄປ ແລ້ວຂ້ານ້ອຍກໍຈະຂ້າແຕ່ດາວິດເທົ່ານັ້ນ
3 ຂ້ານ້ອຍຈະນຳເອົາປະຊາຊົນທັງຫມົດຂອງກະສັດດາວິດມາຫາພຣະອົງເຫມືອນດັ່ງເມັຽກັບຄືນມາຫາຜົວຂອງຕົນ
ເພາະວ່າພຣະອົງຕ້ອງການຂ້າພຽງແຕ່ຄົນດຽວເທົ່ານັ້ນ ແຕ່ປະຊາຊົນທີ່ຍັງເຫລືອຈະໄດ້ປອດພັຍ"
4 ຄຳສເນີນີ້ເປັນທີ່ພໍໃຈແກ່ອັບຊາໂລມ ແລະພວກເຈົ້ານາຍອິສຣາເອນທຸກຄົນ

The Counsel of Hushai

5 ອັບຊາໂລມຈຶ່ງເວົ້າວ່າ, "ບັດນີ້ຈົ່ງໄປເອີ້ນຮູຊັຍມາ ເພື່ອພວກເຮົາຈະໄດ້ຮູ້ວ່າເຂົາມີຄວາມເຫັນຢ່າງໃດ"
6 ເມື່ອຮູຊັຍມາຮອດ ອັບຊາໂລມກໍເວົ້າຕໍ່ເຂົາວ່າ, "ນີ້ເປັນຄຳເຫັນຂອງອາຮີໂທເຟນທີ່ສເນີຕໍ່ພວກເຮົາ ພວກເຮົາຈະ
ເຫັນດີກັບຄຳສເນີນີ້ບໍ ຖ້າວ່າບໍ່ເຫັນດີ ຂໍໃຫ້ເຈົ້າບອກກັບພວກເຮົາແດ່ ວ່າຈະເຮັດຢ່າງໃດ"
7 ຮູຊັຍຈຶ່ງຕອບວ່າ, "ຄຳແນະນຳທີ່ອາຮີໂທເຟນເວົ້າກັບພຣະອົງໃນເວລານີ້ບໍ່ຖືກຕ້ອງ
8 ພຣະອົງກໍຊົງຮູ້ຢູ່ແລ້ວວ່າ ກະສັດດາວິດສະເດັດພໍ່ຂອງພຣະອົງກັບພວກຂອງພຣະອົງນັ້ນເປັນນັກຮົບທີ່ເກັ່ງກ້າ ແລະ
ໂຫດຮ້າຍເຫມືອນຫມີຢູ່ໃນປ່າທີ່ຖືກຄົນລັກເອົາລູກຂອງມັນໄປ ສະເດັດພໍ່ຂອງພຣະອົງເປັນນັກຮົບທີ່ມີຄວາມຊຳນິຊຳ
ນານ ເວລາກາງຄືນ ພຣະອົງຄົງຈະບໍ່ນອນຢູ່ບ່ອນດຽວກັບພວກທະຫານຂອງພຣະອົງດອກ
9 ເຊື່ອແນ່ວ່າ ດຽວນີ້ກະສັດດາວິດຄົງຈະໄປລີ້ຢູ່ໃນຖ້ຳຫລືວ່າຢູ່ບ່ອນອື່ນແລ້ວ ຖ້າຫາກວ່າກະສັດດາວິດມາຕໍ່ສູ້ໄດ້ມີຄົນ
ຝ່າຍພຣະອົງລົ້ມຕາຍໃນສະຫນາມຮົບ ຜູ້ໃດໄດ້ຍິນເຣື່ອງນີ້ກໍຈະເວົ້າວ່າ "ທະຫານຂອງເຈົ້າອັບຊາໂລມເສັຽໄຊ"
10 ແລ້ວຕໍ່ໄປເຖິງແມ່ນວ່າພວກທະຫານທີ່ເກັ່ງກ້າເຫມືອນດັ່ງສິງກໍຈະຍ້ານກົວ ເພາະທຸກຄົນໃນອິສຣາເອນຮູ້ແລ້ວວ່າ ສະ
ເດັດພໍ່ຂອງ ພຣະອົງເປັນທະຫານທີ່ຍິ່ງໃຫຍ່ແລະພວກທະຫານຂອງພຣະອົງກໍເປັນນັກຮົບທີ່ເກັ່ງກ້າ
11 ຕາມຄຳເຫັນຂອງຂ້ານ້ອຍຢາກໃຫ້ພຣະອົງນຳເອົາພວກອິສຣາເອນທຸກຄົນທົ່ວທັງປະເທດ ເຂົ້າມາໂຮມກັນໃຫ້ຫລາຍ
ເຫມືອນເມັດດິນຊາຍແຄມທະເລ ແລ້ວໃຫ້ພຣະອົງເປັນຜູ້ນຳພວກເຂົາອອກສູ່ສນາມຮົບ
12 ຖ້າເຮັດດັ່ງນີ້ ພວກເຮົາກໍຈະພົບກະສັດດາວິດໄດ້ ບໍ່ວ່າທ່ານຈະຢູ່ບ່ອນໃດ ແລະເຂົ້າໂຈມຕີກ່ອນທີ່ພຣະອົງຈະຮູ້ຕົວ
ກະສັດດາວິດກັບພວກຂອງພຣະອົງຈະບໍ່ມີໃຜລອດຊີວິດຢູ່ໄດ້

13 ຖ້າວ່າກະສັດດາວິດຖອຍເຂົ້າມາໃນເມືອງໃດ ທະຫານຂອງພວກເຮົາກໍຈະໃຊ້ເຊືອກທຳລາຍເມືອງນັ້ນລົງ ໂດຍບໍ່ໃຫ້
ເຫລືອແມ່ນແຕ່ຫີນກ້ອນດຽວ”
14 ອັບຊາໂລມ ແລະພວກອິສຣາເອນທຸກຄົນຈຶ່ງເຫັນວ່າ, “ຄຳເຫັນຂອງຮູຊັຍຄົນອາຣ໌ຄີ ນີ້ດີກວ່າຄຳເຫັນຂອງອາຣີໂທ
ເຟນ” ພຣະຜູ້ເປັນເຈົ້າໄດ້ຊົງເຮັດໃຫ້ຄຳເຫັນຂອງອາຣີໂທເຟນເປັນໂມຄະ ເພື່ອວ່າໂຊກຮ້າຍຈະຕົກຖືກອັບຊາໂລມ

**ດາວິດໄດ້ຮັບຄຳເຕືອນແລະຫນີໄປ**

Hushai Warns David to Escape

15 ຕໍ່ມາ ຮູຊັຍໄດ້ນຳເອົາຄຳເຫັນທີ່ຕົນສເນີອັບຊາໂລມ ແລະພວກຜູ້ນຳອິສຣາເອນ ພ້ອມທັງຄຳເຫັນຂອງອາຣີໂທເຟນ
ມາຣາຍງານຕໍ່ປະໂຣຫິດຊາໂດກກັບອາບີອາທາ
16 ຮູຊັຍໄດ້ບອກຕື່ມອີກວ່າ, “ໃຫ້ສົ່ງຂ່າວໄປບອກກະສັດດາວິດໄວໆ ວ່າຢ່າໃຫ້ພຣະອົງພັກຄ້າງຄືນຢູ່ຖິ່ນກັນດານນັ້ນ
ແຕ່ໃຫ້ພຣະອົງຂ້າມແມ່ນໍ້າຈໍແດນໄປໂລດ ເພື່ອວ່າພຣະອົງແລະພວກຂອງພຣະອົງທຸກຄົນຈະບໍ່ຖືກຈັບແລະຖືກຂ້າ
17 ຝ່າຍໂຢນາທານ ແລະອາຣີມາອັສກໍກຳລັງນັ່ງຄອຍຖ້າຢູ່ທີ່ເອນໂຣເກນ ເພາະພວກເຂົາບໍ່ກ້າສ່ຽງເຂົ້າໄປໃນເມືອງ ແຕ່
ໄດ້ມີສາວໃຊ້ຜູ້ນຶ່ງອອກມາຣາຍງານເຫດການທີ່ເກີດຂຶ້ນໃຫ້ແກ່ພວກເຂົາເປັນປະຈຳ ແລ້ວພວກເຂົາກໍນຳເອົາຂ່າວນັ້ນ
ໄປບອກແກ່ກະສັດດາວິດ
18 ແຕ່ໃນຄັ້ງນີ້ມີເດັກນ້ອຍຜູ້ນຶ່ງໄດ້ເຫັນພວກເຂົາ ແລະໄປບອກໃຫ້ອັບຊາໂລມ ດັ່ງນັ້ນໂຢນາທານ ແລະອາຣີມາອັສ ຈຶ່ງ
ຟ້າວໄປເຮືອນຊາຍຜູ້ນຶ່ງທີ່ບ້ານບາຮູຣິມ ເຮືອນຂອງເຂົາຢູ່ໃກ້ນໍ້າສ້າງພວກເຂົາທັງສອງຈຶ່ງລົງໄປໃນນໍ້າສ້າງນັ້ນ
19 ເມັຽເຈົ້າຂອງເຮືອນໄດ້ເອົາຜ້າມາປູອັດປາກສ້າງໄວ້ ແລະເອົາເມັດເຂົ້າຢາຍກະຈັດກະຈາຍໄວ້ເທິງນັ້ນ ເພື່ອບໍ່ໃຫ້ໃຜ
ຈັບພິລຸດໄດ້
20 ພວກຂ້າຣາຊການຂອງອັບຊາໂລມ ໄດ້ມາຖາມຍິງໃນເຮືອນນັ້ນວ່າ, “ອາຣີມາອັສແລະໂຢນາທານຢູ່ໃສ” ນາງຈຶ່ງ
ຕອບວ່າ, “ພວກເຂົາຂ້າມແມ່ນໍ້າໄປແລ້ວ” ເມື່ອພວກເຫລົ່ານີ້ຊອກຫາເຂົາທັງສອງບໍ່ພົບກໍພາກັນກັບຄືນເມືອກຸງເຢຣູ
ຊາເລັມ
21 ຫລັງຈາກທີ່ພວກເຂົາກັບຄືນເມືອແລ້ວ ອາຣີມາອັສ ແລະໂຢນາທານກໍຂຶ້ນມາຈາກສ້າງ ແລະໄປຣາຍງານຕົວຕໍ່ກະ
ສັດດາວິດ ພວກເຂົາໄດ້ຣາຍງານແຜນການທຸກຢ່າງທີ່ອາຣີໂທເຟນຈະຕໍ່ສູ້ພຣະອົງ ແລະໄດ້ບອກວ່າ, “ຂໍໃຫ້ຟ້າວ
ຂ້າມແມ່ນໍ້າໄປ”
22 ດັ່ງນັ້ນ ດາວິດແລະພວກຂອງພຣະອົງຈຶ່ງພາກັນຂ້າມແມ່ນໍ້າຈໍແດນ ພໍເຖິງມື້ເຊົ້າມາ ທຸກຄົນກໍຂ້າມໄປຫມົດ
23 ເມື່ອອາຣີໂທເຟນເຫັນວ່າ ຄຳສເນີຂອງຕົນບໍ່ເປັນຜົນສຳເຣັດ ເຂົາກໍຂຶ້ນຂີ່ລໍກັບຄືນເມືອບ້ານເມືອງຂອງຕົນ ເມື່ອຈັດ
ແຈງຫນັງສືພີນັຍກຳໄວ້ຮຽບຮ້ອຍແລ້ວ ເຂົາກໍຜູກຄໍຕາຍ ສົບຂອງເຂົາໄດ້ເອົາໄປໄວ້ໃນອຸບໂມງປະຈຳຄອບຄົວ
24 ພໍເມື່ອອັບຊາໂລມແລະທະຫານຂອງທ່ານຂ້າມແມ່ນໍ້າຈໍແດນມາ ດາວິດກໍໄປຮອດເມືອງມາຮານາອິມແລ້ວ
25 ອັບຊາໂລມໄດ້ໃຫ້ອາມາຊາເປັນຜູ້ບັນຊາການທະຫານແທນໂຢອາບ ອາມາຊາເປັນບຸດຂອງອິທຣາ ຊາວອິຊມາເອນ
ແມ່ຂອງເຂົາຊື່ ອາບີກາຍ ລູກສາວຂອງນາຮັສ ແລະເປັນເອື້ອຍຂອງນາງເຊຣູຢາແມ່ຂອງໂຢອາບ
26 ອັບຊາໂລມແລະພວກອິສຣາອນໄດ້ຕັ້ງຄ້າຍພັກຢູ່ໃນແຂວງກີເລອາດ
27 ເມື່ອດາວິດມາຮອດເມືອງມາຮານາອິມ ພຣະອົງກໍພົບກັບໂຊບີ ບຸດຊາຍຂອງນາຮັສ ທີ່ມາຈາກເມືອງຣັບບາເຂດອັມ
ໂມນ ແລະໄດ້ພົບກັບມາກີບຸດຂອງອັມມີເອນທີ່ມາຈາກໂລເດບາ ທັງໄດ້ພົບກັບບາຊິນລັຍທີ່ມາຈາກໂຣເກລີມເຂດກີ
ເລອາດ
28 ພວກເຂົາເຫລົ່ານີ້ໄດ້ຖືເອົາບ່ອນນອນ ອ່າງນໍ້າແລະເຄື່ອງພາຊນະດິນ ເຂົ້າສາລີ ເຂົ້າບເລ ແລະແປ້ງ ເຂົ້າຂົ້ວ ຖົ່ວ
ຍາວ ແລະຖົ່ວແດງ
29 ນໍ້າເຜິ້ງ ເນີຍ ແກະ ແລະເນີຍແຂງທີ່ໄດ້ມາຈາກຝູງສັດຖວາຍແກ່ດາວິດ ແລະໃຫ້ພວກພົນທີ່ຢູ່ກັບພຣະອົງຮັບປະທານ
ເພາະເຂົາທັງຫລາຍກ່າວວ່າ, “ດາວິດແລະພວກຂອງພຣະອົງຈະຕ້ອງຫິວເຂົ້າຫິວນໍ້າ ແລະອິດເມື່ອຍໃນຖິ່ນກັນດານ”

## 18 ອັບຊາໂລມເສັຽໄຊ ແລະຖືກຂ້າ

The Defeat and death of Absalom

1 ຢູ່ຕໍ່ມາ ກະສັດດາວິດໄດ້ທ້ອນໂຮມເອົາທະຫານທັງຫມົດຂອງພຣະອົງ ແລະໄດ້ມີຜູ້ບັງຄັບບັນຊາກອງພັນແລະກອງຮ້ອຍ

2 ແລ້ວພຣະອົງກໍສົ່ງພວກເຂົາອອກໄປສາມກອງພົນ ຊຶ່ງແມ່ນໂຢອາບ ອາບີຊັຍອ້າຍຂອງໂຢອາບ ແລະອິທຕັຍທີ່ມາຈາກເມືອງກາດເປັນຜູ້ບັງຄັບບັນຊາ ແລະເຈົ້າຊີວິດໄດ້ເວົ້າກັບທະຫານຂອງພຣະອົງວ່າ, "ເຮົາເອງກໍຈະໄປກັບພວກເຈົ້າ"

3 ພວກເຂົາຈຶ່ງຕອບວ່າ, "ຂໍພຣະອົງຢ່າໄປກັບພວກຂ້ານ້ອຍເລີຍ ຖ້າວ່າພວກຂ້ານ້ອຍທຸກຄົນຖອຍຫນີຫລືວ່າຖືກຂ້າເສັຽເຄິ່ງນຶ່ງ ມັນກໍບໍ່ສຳຄັນເທົ່າກັບເສັຽພຣະອົງ ເພາະພຣະອົງມີຄ່າເຫນືອກວ່າພວກຂ້ານ້ອຍຕັ້ງສິບພັນຄົນ ສະນັ້ນ ຂໍພຣະອົງຈົ່ງປະທັບຢູ່ໃນເມືອງນີ້ ເພື່ອສົ່ງກອງຫນຸນອອກໄປຊ່ວຍພວກຂ້ານ້ອຍ"

4 ເຈົ້າຊີວິດຈຶ່ງຕອບວ່າ, "ເຮົາຈະເຮັດທຸກສິ່ງທີ່ເຈົ້າຄິດວ່າດີ" ໃນຂນະທີ່ພວກທະຫານຂອງພຣະອົງຍ່າງອອກໄປເປັນຫມວດລະພັນ ຫມວດລະຮ້ອຍຄົນນັ້ນ ກະສັດດາວິດກໍໄປຢືນຢູ່ຂ້າງປະຕູກຳແພງເມືອງ

5 ພຣະອົງໄດ້ຮ້ອງບອກໂຢອາບ ອາບີຊັຍແລະອິທຕັຍວ່າ, "ເພື່ອເຫັນແກ່ເຮົາ ຂໍຢ່າທຳຮ້າຍຊາຍຫນຸ່ມອັບຊາໂລມເດີ" ກະສັດດາວິດໄດ້ໃຫ້ຄຳສັ່ງນີ້ແກ່ນາຍທະຫານທຸກຄົນ ພວກທະຫານທຸກກົມກອງກໍໄດ້ຍິນຫມົດ

6 ກອງທັບດາວິດໄດ້ອອກໄປໂຈມຕີພວກອິສຣາເອນ ທີ່ນອກເມືອງແລະໄດ້ຕໍ່ສູ້ພວກເຂົາຢູ່ໃນປ່າເອຟຣາອິມ

7 ຝ່າຍພວກອິສຣາເອນກໍເສັຽໄຊໃຫ້ແກ່ພວກທະຫານຂອງດາວິດ ມີທະຫານຊາວພັນຖືກຂ້າໃນມື້ນັ້ນ ມັນເປັນການຜ່າຍແພ້ທີ່ເຈັບແສບທີ່ສຸດ

8 ການສູ້ຮົບໄດ້ກະຈາຍໄປທົ່ວທຸກບ່ອນມີທະຫານຕາຍຢູ່ໃນກາງປ່າຫລາຍກວ່າຖືກຂ້າຢູ່ໃນສນາມຮົບ

9 ອັບຊາໂລມ ໄດ້ພົບກັບທະຫານບາງຄົນຂອງດາວິດໂດຍບັງເອີນ ເມື່ອອັບຊາໂລມຂີ່ລໍຢູ່ ລໍໄດ້ແລ່ນເຂົ້າໄປໃນໃຕ້ຕົ້ນກໍ່ໃຫຍ່ ຫົວຂອງອັບຊາໂລມໄດ້ຄາຢູ່ໃນງ່າໄມ້ ສ່ວນລໍກໍແລ່ນຫນີໄປ ອັບຊາໂລມຈຶ່ງແຂວນຢູ່ຕົ້ນໄມ້

10 ທະຫານຄົນນຶ່ງຂອງດາວິດໄດ້ມາເຫັນພຣະອົງ ຈຶ່ງໄດ້ໄປຣາຍງານຕໍ່ໂຢອາບວ່າ, "ທ່ານຂ້ານ້ອຍ ໄດ້ເຫັນອັບຊາໂລມກຳລັງຄາຢູ່ຕົ້ນກໍ່"

11 ໂຢອາບຕອບວ່າ, "ເຈົ້າໄດ້ເຫັນເຂົາແທ້ບໍ ເປັນຫຍັງເຈົ້າຈຶ່ງບໍ່ຂ້າເຂົາຢູ່ໃນບ່ອນນັ້ນໂລດ ແລ້ວຂ້ອຍເອງຈະເອົາເງິນສິບຫລຽນ ແລະສາຍແອວໃຫ້ເຈົ້າ"

12 ແຕ່ທະຫານຜູ້ນັ້ນຕອບວ່າ, "ເຖິງແມ່ນວ່າທ່ານຈະເອົາເງິນໃຫ້ຂ້ານ້ອຍພັນຫລຽນ ຂ້ານ້ອຍກໍບໍ່ຍອມຍົກນິ້ວມືໄປຖືກຕົວພຣະຣາຊກຸມມານເລີຍ ພວກຂ້ານ້ອຍທຸກຄົນໄດ້ຍິນເຈົ້າຊີວິດສັ່ງທ່ານ ສັ່ງອາບີຊັຍ ແລະອິທຕັຍ ວ່າ

13 "ເພື່ອເຫັນແກ່ເຮົາ ຂໍຢ່າທຳຮ້າຍຊາຍຫນຸ່ມອັບຊາໂລມເດີ" ແຕ່ວ່າຖ້າຂ້ານ້ອຍບໍ່ຟັງຄວາມແລະຂ້າອັບຊາໂລມແນ່ນອນທີ່ສຸດທີ່ເຈົ້າຊີວິດຕ້ອງຮູ້ ເພາະວ່າພຣະອົງຊົງຮູ້ທຸກຢ່າງ ແລ້ວທ່ານຈະບໍ່ອາດປ້ອງກັນຂ້ານ້ອຍໄວ້ໄດ້"

14 ໂຢອາບເວົ້າຂຶ້ນວ່າ, "ຂ້ອຍຈະບໍ່ຍອມເສັຽເວລາເວົ້າກັບເຈົ້າດອກ" ໃນຂນະທີ່ອັບຊາໂລມຍັງມີຊີວິດ ແລະແຂວນຢູ່ຕົ້ນກໍ່ນັ້ນ ໂຢອາບກໍຖອດຫອກຂອງຕົນສາມດວງແທງຫນ້າເອິກຂອງທ່ານ

15 ແລະທະຫານຂອງໂຢອາບສິບຄົນກໍເຂົ້າໄປຂ້າອັບຊາໂລມ

16 ຕໍ່ມາ ໂຢອາບກໍເປົ່າແກໃຫ້ຢຸດຮົບ ຝ່າຍກອງທັບທີ່ໄລ່ຕິດຕາມພວກອິສຣາເອນໄດ້ກັບຄືນມາ

17 ພວກເຂົາໄດ້ຫາມເອົາສົບອັບຊາໂລມໂຍນຖິ້ມລົງຂຸມເລິກຢູ່ໃນປ່າ ແລະກອງກ້ອນຫີນອັດທັບປາກຂຸມໄວ້ເປັນກອງໃຫຍ່ໆ ພວກອິສຣາເອນທັງຫມົດຕ່າງຄົນກໍຫນີເມືອເຮືອນຂອງຕົນ

18 ໃນເວລາທີ່ອັບຊາໂລມຍັງມີຊີວິດຢູ່ນັ້ນ ທ່ານໄດ້ສ້າງອະນຸສາວະລີສ່ວນຕົວໄວ້ທີ່ຮ່ອມພູພຣະຣາຊາ ເພາະທ່ານບໍ່ມີ
ບຸດຊາຍສືບໜໍ່ແທນແນວ ດັ່ງນັ້ນ ອັບຊາໂລມຈຶ່ງເອີ້ນຊື່ອະນຸສາວະລີນັ້ນຕາມຊື່ຂອງຕົນວ່າ “ອະນຸສາວະລີອັບຊາ
ໂລມ” ສືບຕໍ່ກັນມາຈົນເທົ່າທຸກມື້ນີ້

**ດາວິດຍິນຂ່າວການຕາຍຂອງອັບຊາໂລມ**

David Hears of Absalom’s Death

19 ຢູ່ຕໍ່ມາ ອາຮີມາອັສ ບຸດຊາຍຂອງຊາໂດກໄດ້ເວົ້າກັບໂຢອາບວ່າ, “ຂໍອະນຸຍາດໃຫ້ຂ້ານ້ອຍນຳຂ່າວດີນີ້ໄປທູນຕໍ່ເຈົ້າຊີ
ວິດເດີ ເພາະພຣະຜູ້ເປັນເຈົ້າຊ່ວຍໃຫ້ພຣະອົງພົ້ນຈາກສັດຕຣູຂອງພຣະອົງແລ້ວ”
20 ໂຢອາບຕອບວ່າ, “ບໍ່ໄດ້ດອກ ໃນມື້ນີ້ເຈົ້າບໍ່ຕ້ອງນຳຂ່າວດີໃດໆໄປບອກພຣະອົງ ມື້ໃໝ່ຈຶ່ງຄ່ອຍໄປ ສຳລັບມື້ນີ້ບໍ່
ຕ້ອງໄປດອກ ເພາະເປັນມື້ທີ່ຣາຊກຸມມານໄດ້ສິ້ນພຣະຊົນ”
21 ແລະໂຢອາບໄດ້ເວົ້າກັບຄົນກູຊຜູ້ເປັນທາດຂອງຕົນວ່າ, “ຈົ່ງໄປກາບທູນພຣະຣາຊາຕາມທີ່ເຈົ້າໄດ້ເຫັນ” ທາດຄົນນັ້ນ
ກໍກາບລົງຄຳນັບແລ້ວແລ່ນໄປ
22 ສ່ວນອາຮີມາອັສກໍຢືນຢັນຢູ່ຢ່າງເກົ່າວ່າ, “ຂ້ານ້ອຍບໍ່ຢ້ານດອກ ຂໍອະນຸຍາດໃຫ້ຂ້ານ້ອຍນຳຂ່າວນີ້ໄປກາບທູນ
ເໝືອນກັນເທີ້ນ” ໂຢອາບຈຶ່ງຖາມຂຶ້ນວ່າ, “ລູກເອີຍ ເປັນຫຍັງຈຶ່ງຢາກໄປ ເພາະເຈົ້າຈະບໍ່ໄດ້ຮັບຣາງວັນຫຍັງໝົດ
ໃນການໄປນີ້”
23 ອາຮີມາອັສເວົ້າຂຶ້ນວ່າ, “ມັນຈະເປັນຫຍັງກໍຢ່າ ຂ້ານ້ອຍຢາກໄປ” ໂຢອາບກໍເວົ້າວ່າ, “ຈົ່ງໄປສາ” ແລ້ວອາຮີມາອັສກໍ
ແລ່ນໄປ ທາງຮ່ອມພູຈໍແດນ ແລະຜ່ານກາຍຄົນກູຊ
24 ສ່ວນດາວິດກໍນັ່ງຢູ່ລະຫວ່າງປະຕູທັງສອງຂອງກຳແພງເມືອງ ເມື່ອທະຫານຍາມຫລຽວອອກໄປເຫັນຊາຍຄົນນຶ່ງກຳ
ລັງແລ່ນມາ ເຂົາກໍເອີ້ນລົງມາບອກເຈົ້າຊີວິດ
25 ພຣະອົງກໍຊົງກ່າວວ່າ, “ຖ້າແມ່ນເຂົາມາຄົນດຽວ ແມ່ນເຂົາກຳລັງນຳຂ່າວດີມາໃຫ້” ຊາຍຜູ້ແລ່ນມານັ້ນກໍໃກ້ເຂົ້າມາ
ທຸກລະຍະ
26 ແລ້ວຄົນຍາມຜູ້ນັ້ນໄດ້ເຫັນຊາຍຄົນນຶ່ງອີກ ກຳລັງແລ່ນມາຜູ້ດຽວ ເຂົາຈຶ່ງເອີ້ນລົງໄປໃສ່ຄົນເຝົ້າປະຕູວ່າ, “ເບິ່ງແມ່ຫັ້ນ
ມີຄົນອື່ນກຳລັງແລ່ນມາອີກ” ເຈົ້າຊີວິດຕອບຂຶ້ນວ່າ, “ຜູ້ນີ້ກໍນຳຂ່າວດີມາໃຫ້ຄືກັນ”
27 ຄົນຍາມເວົ້າຂຶ້ນວ່າ ເຂົາເປັນຄົນດີ ເຂົາກຳລັງນຳຂ່າວດີມາໃຫ້ເຮົາ
28 ອາຮີມາອັສຮ້ອງກາບທູນເຈົ້າຊີວິດ ພ້ອມທັງກົ້ມຂາບລົງຕໍ່ໜ້າພຣະອົງແລະເວົ້າວ່າ, “ຂໍສັຣເສີນພຣະຜູ້ເປັນເຈົ້າຂອງ
ພຣະອົງ ຜູ້ຊົງໂຜດໃຫ້ພຣະອົງຊະນະພວກກະບົດ”
29 ເຈົ້າຊີວິດຈຶ່ງຖາມວ່າ, “ຊາຍໜຸ່ມອັບຊາໂລມສະບາຍດີບໍ” ອາຮີມາອັສທູນຕອບວ່າ, “ຂ້າແດ່ພຣະອົງ ເມື່ອໂຢອາບ
ນາຍທະຫານຂອງພຣະອົງສົ່ງຂ້ານ້ອຍອອກໄປ ຂ້ານ້ອຍໄດ້ເຫັນການແຕກຕື່ນຕົກໃຈຢ່າງຍິ່ງໃຫຍ່ ແຕ່ວ່າຂ້ານ້ອຍບໍ່
ສາມາດ
ບອກສາເຫດນີ້ໄດ້”
30 ເຈົ້າຊີວິດບອກເຂົາວ່າ, “ຫຍັບໄປຢືນຢູ່ຫັ້ນ” ເຂົາກໍຍ່າງກ້າວອອກໄປຢືນຢູ່ບ່ອນນັ້ນ
31 ຕໍ່ມາ ຄົນກູຊກໍມາຮອດແລະທູນຕໍ່ເຈົ້າຊີວິດວ່າ, “ຂ້ານ້ອຍມີຂ່າວດີມາກາບທູນພຣະອົງ ມື້ນີ້ ພຣະຜູ້ເປັນເຈົ້າຊົງໃຫ້ພ
ຣະອົງພົ້ນຈາກພວກກະບົດທັງຫລາຍ”
32 ເຈົ້າຊີວິດຖາມຂຶ້ນວ່າ, “ຊາຍໜຸ່ມອັບຊາໂລມສະບາຍດີບໍ” ຄົນກູຊກໍທູນຕອບວ່າ, “ຂ້າແດ່ພຣະອົງ ຂໍໃຫ້ເຫດການທີ່
ເກີດຂຶ້ນກັບອັບຊາໂລມ ຈົ່ງເກີດຂຶ້ນກັບສັດຕຣູທຸກຄົນຂອງພຣະອົງ ແລະກັບທຸກໆຄົນທີ່ກະບົດຕໍ່ສູ້ພຣະອົງເທີ້ນ”

**ດາວິດໂສກເສົ້າໃຫ້ແກ່ອັບຊາໂລມ**

David Mourns for Absalom

33 ເມື່ອໄດ້ຍິນດັ່ງນັ້ນ ເຈົ້າຊີວິດກໍໂສກເສົ້າເສັຽໃຈ ພຣະອົງຂຶ້ນໄປຮ້ອງໄຫ້ຢູ່ຫ້ອງເທິງປະຕູກຳແພງເມືອງ ໃນເວລາຍ່າງ
ຂຶ້ນໄປນັ້ນ  ພຣະອົງກໍຮ້ອງໄຫ້ຈົ່ມວ່າ, "ໂທ ອັບຊາໂລມລູກຊາຍຂອງພໍ່ ຖ້າເປັນໄປໄດ້ພໍ່ຢາກຕາຍແທນລູກ ອັບຊາ
ໂລມລູກຊາຍຂອງພໍ່ເອີຍ"

## 19 ໂຢອາບຕິຕຽນດາວິດ

Joab Repremands David

1 ມີຄົນມາບອກໂຢອາບວ່າ, "ກະສັດດາວິດກຳລັງຮ້ອງໄຫ້ແລະໄວ້ທຸກນຳອັບຊາໂລມ"
2 ເມື່ອພວກທະຫານໄດ້ຍິນວ່າເຈົ້າຊີວິດໄວ້ທຸກນຳບຸດຊາຍຂອງພຣະອົງ ໄຊຊະນະໃນມື້ນັ້ນກໍກາຍເປັນຄວາມທຸກ
ຂອງກອງທັບກະສັດດາວິດທັງຫມົດ
3 ພວກເຂົາຈຶ່ງພາກັນກັບຄືນເມືອເມືອງດ້ວຍຄວາມງຽບເຫງົາເຫມືອນພວກທະຫານທີ່ເສັຽໄຊຫນີເສິກມາ
4 ສ່ວນເຈົ້າຊີວິດກໍເອົາຜ້າປົກຫນ້າຮ້ອງໄຫ້ສຽງດັງວ່າ, "ໂທ ລູກຊາຍຂອງພໍ່ເອີຍ ອັບຊາໂລມ ລູກຊາຍຂອງພໍ່"
5 ໂຢອາບໄດ້ເຂົ້າໄປໃນພຣະຣາຊວັງ ແລະທູນຕໍ່ເຈົ້າຊີວິດວ່າ, "ພວກທະຫານໄດ້ຊ່ອຍຊີວິດພຣະອົງ ພ້ອມທັງລູກເມັຽ
ຂອງພຣະອົງໃຫ້ພົ້ນພັຍ ແຕ່ມື້ນີ້ ພຣະອົງໄດ້ເຮັດໃຫ້ພວກເຂົາໄດ້ຮັບຄວາມລະອາຍໃຈ
6 ພຣະອົງຊັງຜູ້ທີ່ຮັກພຣະອົງ ແລະຮັກຜູ້ທີ່ກຽດຊັງພຣະອົງ ພຣະອົງເຮັດຢ່າງນີ້ເປັນການປະຈັກແຈ້ງວ່າ ພວກນາຍ ແລະ
ພົນທະຫານຂອງພຣະອົງບໍ່ມີຄວາມສຳຄັນຢ່າງໃດຫມົດຕໍ່ພຣະອົງ ຂ້ານ້ອຍຮູ້ວ່າໃນມື້ນີ້ ຖ້າອັບຊາໂລມຍັງມີຊີວິດຢູ່
ແລະພວກຂ້ານ້ອຍທຸກຄົນຕາຍໄປ ພຣະອົງຄົງຈະດີໃຈບໍ່ຫນ້ອຍ
7 ດຽວນີ້ ຂໍເຊີນພຣະອົງສະເດັດໄປໃຫ້ຄວາມອົບອຸ່ນແກ່ທະຫານຂອງພຣະອົງເທີນ ຖ້າວ່າພຣະອົງບໍ່ໄປ ຂ້ານ້ອຍຂໍສາ
ບານໃນພຣະນາມພຣະຜູ້ເປັນເຈົ້າວ່າ ໃນມື້ອື່ນເຊົ້າຈະບໍ່ມີທະຫານຈັກຄົນຢູ່ນຳພຣະອົງ ມັນຈະເປັນໄຊກຮ້າຍທີ່ສຸດ
ໃນຊົ່ວຊີວິດທີ່ພຣະອົງເຄີຍປະສົບມາ ແລ້ວເຈົ້າຊີວິດກໍໄປນັ່ງຢູ່ໃກ້ປະຕູເມືອງ
8 ເມື່ອທະຫານຂອງພຣະອົງຮູ້ວ່າ ພຣະອົງຊົງປະທັບຢູ່ບ່ອນນັ້ນ ພວກເຂົາກໍພາກັນມາຫຸ້ມຮອບພຣະອົງ

**ດາວິດກັບຄືນເມືອນະຄອນເຢຣູຊາເລັມ**

David recalled to Jerusalem

ໃນລະຫວ່າງນັ້ນ ພວກອິສຣາເອນໄດ້ແຕກຫນີກັບເມືອເຮືອນຂອງຕົນ
9 ທຸກໆຕະກູນໃນອິສຣາເອນໄດ້ຜິດຖຽງກັນ ແລະເວົ້າໃສ່ກັນແລະກັນວ່າ, "ກະສັດດາວິດໄດ້ຊ່ອຍພວກເຮົາໃຫ້ພົ້ນຈາກ
ສັດຕຣູ ແລະພົ້ນຈາກພວກຟີລິສຕິນ ແຕ່ດຽວນີ້ ພຣະອົງຊົງປົບຫນີອອກຈາກປະເທດຍ້ອນອັບຊາໂລມ
10 ພວກເຮົາໄດ້ເອົານ້ຳມັນຊະໂລມຫົດສົງອັບຊາໂລມໃຫ້ເປັນກະສັດ ແຕ່ດຽວນີ້ອັບຊາໂລມກໍຖືກຂ້າໃນສະຫນາມຣົບ
ແລ້ວ ດັ່ງນັ້ນ ບໍ່ມີໃຜກ້າລອງໄປກາບທູນເຊີນເອົາກະສັດດາວິດກັບຄືນມາບໍ"
11 ຕໍ່ມາເຣື່ອງທີ່ພວກອິສຣາເອນໄດ້ເວົ້າກັນນັ້ນກໍເຖິງຫູດາວິດ ພຣະອົງຈຶ່ງສັ່ງໃຫ້ປະໂຣຫິດຊາໂດກ ກັບອາບີອາທາໄປ
ຖາມພວກຜູ້ນຳຊາວຢູດາວ່າ, "ດ້ວຍເຫດໃດພວກທ່ານຈຶ່ງມານຳເອົາເຈົ້າຊີວິດກັບເມືອນຳຫລັງຫມູ່
12 ພວກທ່ານເປັນຍາດພີ່ນ້ອງຂອງເຮົາ ເປັນເນື້ອຫນັງແລະສາຍເລືອດຂອງເຮົາ ສະນັ້ນເປັນຫຍັງພວກທ່ານຈຶ່ງມານຳ
ເອົາເຈົ້າຊີວິດກັບເມືອນຳຫລັງຫມູ່"
13 ດາວິດຍັງສັ່ງຄົນໄປບອກອາມາຊາຄືກັນວ່າ, "ເຈົ້າເປັນຍາດພີ່ນ້ອງຂອງເຮົາ ນັບແຕ່ນີ້ຕໍ່ໄປ ເຮົາຈະແຕ່ງຕັ້ງເຈົ້າເປັນຜູ້
ບັງຄັບບັນຊາກອງທັບແທນໂຢອາບ ຖ້າວ່າເຮົາບໍ່ປະຕິບັດຕາມຄຳເວົ້າ ຂໍພຣະເຈົ້າລົງໂທດເຮົາເຖິງຕາຍໂລດ"
14 ຄຳເວົ້າຂອງດາວິດໄດ້ຊະນະຈິດໃຈຊາວຢູດາທັງຫມົດ ພວກເຂົາກໍສົ່ງຄົນໄປທູນເຈົ້າຊີວິດວ່າ, "ຂໍພຣະອົງຊົງສະເດັດ
ກັບຄືນພ້ອມກັບບັນດາຂ້າຣາຊການຂອງພຣະອົງເທີນ"

15 ຕາມເສັ້ນທາງທີ່ດາວິດກັບຄືນເມືອນັ້ນ ພຣະອົງໄດ້ພົບທະຫານຊາວຢູດາທີ່ແມ່ນ້ຳຈໍແດນ ພວກທະຫານນີ້ໄດ້ມາ
ເມືອງກິນການ ເພື່ອຊ່ອຍເຫລືອເວລາພຣະອົງຂ້າມແມ່ນ້ຳ
16 ໃນເວລາດຽວກັນນັ້ນ ຊີເມອີຄົນເບັນຢາມິນລູກຊາຍຂອງເກຣາທີ່ມາຈາກບາຮູຣິມ ກໍຟ້າວເຂົ້າມາພົບກະສັດດາວິດທີ່
ແມ່ນ້ຳຈໍແດນມີທະຫານພັນຄົນຈາກຕະກູນເບັນຢາມິນມານຳເຂົາ
17 ຊີບາຄົນໃຊ້ຊັ້ນຈຳຂອງຊາອູນພ້ອມທັງລູກຊາຍສິບຫ້າຄົນ ແລະຄົນໃຊ້ຂອງຊາອູນອີກຊາວຄົນກໍໄດ້ມາເຫມືອນກັນ
ພວກເຫລົ່ານີ້ມາຮອດແມ່ນ້ຳຈໍແດນກ່ອນກະສັດດາວິດ
18 ພວກເຂົາໄດ້ຂ້າມແມ່ນ້ຳໄປຝັ່ງນັ້ນກ່ອນ ເພື່ອລໍຮັບຊ່ອຍຄອບຄົວທັງຫມົດຂອງກະສັດຂ້າມແມ່ນ້ຳ ແລະເຮັດທຸກສິ່ງ
ຕາມຄຳປະສົງຂອງພຣະອົງ

**ຄວາມເມດຕາຂອງດາວິດຕໍ່ຊີເມອີ**

David’s Mercy to Shimei

ເມື່ອເຈົ້າຊີວິດກຳລັງຂ້າມແມ່ນ້ຳໄປ ຊີເມອີ ບຸດເກຣາກໍຂາບລົງຕໍ່ຫນ້າພຣະອົງ
19 ແລະເວົ້າວ່າ, “ຂ້າແດ່ພຣະອົງ ຂໍຊົງລືມຄວາມຜິດທີ່ຂ້ານ້ອຍໄດ້ເຮັດໃນມື້ທີ່ພຣະອົງອອກຈາກນະຄອນເຢຣູຊາເລັມ
ຂໍຢ່າໄດ້ຖືເອົາເຣື່ອງນັ້ນຕໍ່ສູ້ຂ້ານ້ອຍ ແລະຢ່າໄດ້ຄິດກ່ຽວກັບເຣື່ອງນັ້ນອີກເລີຍ
20 ຂ້າແດ່ພຣະອົງ ຂ້ານ້ອຍຮູ້ດີວ່າຂ້ານ້ອຍເປັນຄົນຜິດ ດ້ວຍຢ່າງນີ້ແຫລະ ຂ້ານ້ອຍຈຶ່ງເປັນຄົນແຣກຈາກຕະກູນໂຢ
ເຊັບມາຮັບສະເດັດໃນມື້ນີ້”
21 ອາບີຊັຍ ບຸດຊາຍຂອງເຊຣູຢາກໍເວົ້າຂຶ້ນວ່າ, “ຊີເມອີສົມຄວນຕາຍ ເພາະວ່າເຂົາໄດ້ດ່າຜູ້ທີ່ພຣະຜູ້ເປັນເຈົ້າຊົງເລືອກ
ໄວ້ໃຫ້ເປັນເຈົ້າຊີວິດ”
22 ແຕ່ດາວິດໄດ້ເວົ້າກັບອາບີຊັຍ ແລະໂຢອາບອ້າຍຂອງອາບີຊັຍວ່າ, “ແມ່ນໃຜຖາມຄວາມຄິດຄວາມເຫັນຈາກພວກ
ເຈົ້າ ເຈົ້າກຳລັງຈະເຮັດໃຫ້ຂ້ອຍຫຍຸ້ງຍາກອີກບໍ ດຽວນີ້ ເຮົາເປັນເຈົ້າຊີວິດໃນຣາຊອານາຈັກອິສຣາເອນ ແລະມື້ນີ້ຈະບໍ່
ມີຄົນອິສຣາເອນຜູ້ໃດຖືກຂ້າ”
23 ແລ້ວດາວິດກໍເວົ້າກັບຊີເມອີວ່າ, “ເຮົາຂໍສັນຍາກັບເຈົ້າວ່າ ເຈົ້າຈະບໍ່ຖືກຂ້າ”

**ດາວິດແລະເມຟີໂບເຊທພົບກັນ**

David and Mephibosheth Meet

24 ຕໍ່ມາ ເມຟີໂບເຊທ ຫລານຊາຍຊາອູນກໍລົງມາຈາກນະຄອນເຢຣູຊາເລັມເພື່ອມາຮັບເຈົ້າຊີວິດນັບຕັ້ງແຕ່ເຈົ້າຊີວິດຫນີ
ອອກຈາກນະຄອນເຢຣູຊາເລັມ ເມຟີໂບເຊທບໍ່ໄດ້ລ້າງຕີນ ບໍ່ໄດ້ແຖຫນວດ ບໍ່ໄດ້ຊັກເຄື່ອງນຸ່ງ ຈົນເຖິງມື້ພຣະອົງກັບ
ຄືນມາເຢຣູຊາເລັມດ້ວຍຄວາມມີໄຊ
25 ເຈົ້າຊີວິດ ຈຶ່ງຖາມເຂົາວ່າ, “ເມຟີໂບເຊທ ເປັນຫຍັງເຈົ້າຈຶ່ງບໍ່ໄປກັບເຮົາ?”
26 ເຂົາຈຶ່ງທູນຕອບວ່າ, “ຂ້າແດ່ພຣະອົງ ຂ້ານ້ອຍເປັນຄົນພິການ ຂ້ານ້ອຍໄດ້ບອກຄົນໃຊ້ໃສ່ອານລໍໃຫ້ ເພື່ອວ່າຂ້ານ້ອຍ
ຈະໄດ້ຂີ່ໄປກັບພຣະອົງ ແຕ່ຄົນໃຊ້ທໍຣະຍົດຕໍ່ຂ້ານ້ອຍ
27 ມັນນຳເອົາເຣື່ອງຂອງຂ້ານ້ອຍທີ່ບໍ່ມີມູນຄວາມຈິງມາກາບທູນພຣະອົງ ແຕ່ພຣະອົງເປັນເຫມືອນທູດຂອງພຣະເຈົ້າ
ສະນັ້ນ ຈົ່ງເຮັດຕາມທີ່ພຣະອົງເຫັນວ່າຖືກຕ້ອງເທີ້ນ
28 ທຸກຄົນໃນຄອບຄົວພໍ່ຂອງຂ້ານ້ອຍ ສົມຄວນແລ້ວທີ່ພຣະອົງຈະຂ້າຖິ້ມຫມົດ ແຕ່ພຣະອົງພັດຊົງອະນຸຍາດໃຫ້ຂ້ານ້ອຍ
ກິນເຂົ້າຮ່ວມໂຕະກັບພຣະອົງ ຂ້ານ້ອຍບໍ່ມີສິດທີ່ຈະຂໍຄວາມກະຣຸນາຢ່າງໃດຈາກພຣະອົງເລີຍ”
29 ເຈົ້າຊີວິດຈຶ່ງຕອບວ່າ, “ເຈົ້າບໍ່ຕ້ອງເວົ້າຫຍັງອີກເລີຍ ເຮົາໄດ້ຕັດສິນໃຈໃຫ້ເຈົ້າກັບຊີບາແບ່ງມໍຣະດົກຂອງຊາອູນປັນ
ກັນ”
30 ເມຟີໂບເຊທທູນຕອບວ່າ, “ຂໍໃຫ້ຕົກເປັນຂອງຊີບາຫມົດສາ ການທີ່ພຣະອົງກັບຄືນມາຢ່າງປອດພັຍ ກໍພຽງພໍແລ້ວສຳ
ລັບຂ້ານ້ອຍ”

David’s Kindness to Barzillai

31 ບາຊິນລັຍ ຄົນກິເລອາດ ກໍໄດ້ເດີນທາງມາຈາກໂຣເກລີມເພື່ອສົ່ງເຈົ້າຊີວິດຂ້າມແມ່ນໍ້າຈໍແດນເໝືອນກັນ
32 ບາຣ໌ຊິນລັຍເປັນຄົນເຖົ້າຫລາຍ ອາຍຸໄດ້ແປດສິບປີ ລາວເປັນຄົນຮັ່ງມີ ເມື່ອຄາວພຣະອົງພັກຢູ່ ມາຮານາອິມ ລາວກໍ
ເປັນຜູ້ສົ່ງສະບຽງອາຫານໃຫ້ເຈົ້າຊີວິດ
33 ເຈົ້າຊີວິດໄດ້ບອກກັບທ່ານວ່າ, “ເຈົ້າຈົ່ງມາຢູ່ນະຄອນເຢຣູຊາເລັມກັບເຮົາ ເຮົາຈະລ້ຽງດູເຈົ້າ”
34 ແຕ່ບາຊິນລັຍທູນຕອບວ່າ, “ຂ້ານ້ອຍຈະມີຊີວິດຢູ່ຕໍ່ໄປອີກຈັກປີ ຂ້ານ້ອຍຈະໄປນະຄອນເຢຣູຊາເລັມກັບພຣະອົງໄດ້
ຢ່າງໃດ
35 ອາຍຸຂອງຂ້ານ້ອຍກໍແປດສິບປີແລ້ວ ຄົງບໍ່ມີສິ່ງໃດຈະເຮັດໃຫ້ຂ້ານ້ອຍມີຄວາມສຸກໄດ້ອີກດອກ ເວລາຂ້ານ້ອຍກິນ
ເຂົ້າຫລືດື່ມນໍ້າ ຂ້ານ້ອຍກໍບໍ່ຮູ້ຈັກຣົດຊາດຂອງມັນຊໍ້າ ຂ້ານ້ອຍຟັງສຽງຄົນຮ້ອງເພງກໍບໍ່ໄດ້ຍິນ ພຣະອົງຈະລໍາບາກ
ຍ້ອນຂ້ານ້ອຍລ້າໆ ຂ້ານ້ອຍບໍ່ສົມຄວນຮັບຮາງວັນອັນຍິ່ງໃຫຍ່ນີ້
36 ສະນັ້ນ ຂ້ານ້ອຍຈະໄປກັບພຣະອົງຮອດແຕ່ຟາກພຸ້ນເທົ່ານັ້ນ
37 ຂໍໃຫ້ຂ້ານ້ອຍກັບເມືອຕາຍໃກ້ອຸບໂມງຄອບຄົວຂ້ານ້ອຍພຸ້ນເທີນ ຜູ້ນີ້ຄື ກິມຮາມຂ້າໃຊ້ຂອງພຣະອົງ ຂໍພຣະອົງຮັບ
ເອົາລາວໄປນໍາ ແລະໃຊ້ລາວຕາມທີ່ພຣະອົງຊົງເຫັນດີ”
38 ເຈົ້າຊີວິດຕອບວ່າ, “ເຮົາຈະເອົາເຂົາໄປນໍາ ແລະປະຕິບັດຕໍ່ເຂົາຕາມຄວາມຕ້ອງການຂອງເຈົ້າ ເຮົາຈະປະຕິບັດທຸກ
ສິ່ງຕາມທີ່ເຈົ້າຮ້ອງຂໍມາ”
39 ແລ້ວດາວິດພ້ອມທັງພວກຂອງພຣະອົງທຸກຄົນກໍຂ້າມແມ່ນໍ້າຈໍແດນໄປ ພຣະອົງໄດ້ຈູບບາຊິນລັຍ ທັງອວຍພອນໃຫ້
ເຂົາ ແລ້ວ ບາຊິນລັຍກໍກັບຄືນເມືອ
40 ຫລັງຈາກດາວິດຂ້າມແມ່ນໍ້າແລ້ວ ພຣະອົງກໍໄປເມືອງກິນການ ຊຶ່ງມີທະຫານຢູດາທຸກຄົນ ແລະທະຫານອິສຣາເອນ
ເຄິ່ງນຶ່ງຕິດຕາມພຣະອົງໄປ ສ່ວນຄິມຮາມກໍໄປກັບພຣະອົງດ້ວຍ
41 ຕໍ່ມາ ທະຫານອິສຣາເອນທຸກຄົນໄດ້ເຂົ້າກາບທູນເຈົ້າຊີວິດວ່າ, “ຂ້າແດ່ພຣະອົງ ເປັນຫຍັງພີ່ນ້ອງຊາວຢູດາຈຶ່ງອອກ
ມາຮັບເອົາ   ພຣະອົງ ຄອບຄົວຂອງພຣະອົງ ແລະທະຫານຂອງພຣະອົງຂ້າມແມ່ນໍ້າຈໍແດນມາກ່ອນ”
42 ທະຫານຢູດາຈຶ່ງຕອບວ່າ, “ພວກເຮົາທໍາຢ່າງນີ້ ເພາະວ່າພຣະອົງເປັນຕະກູນດຽວກັບເຮົາ ເປັນຫຍັງພວກເຈົ້າຈຶ່ງບໍ່ດີ
ໃຈ ຫລືພວກເຈົ້າເຂົ້າໃຈວ່າ ພຣະອົງໄດ້ຈ່າຍຄ່າອາຫານການກິນ ແລະເອົາສິ່ງນຶ່ງສິ່ງໃດໃຫ້ພວກເຮົາຊັ້ນບໍ?
43 ພວກອິສຣາເອນເວົ້າອີກວ່າ, “ເຖິງແມ່ນວ່າ ກະສັດດາວິດເປັນຄົນຕະກູນດຽວກັນກັບພວກເຈົ້າ ພວກເຮົາກໍມີສ່ວນໃນ
ພຣະອົງຫລາຍກວ່າພວກເຈົ້າເຖິງສິບເທົ່າ ເປັນຫຍັງພວກເຈົ້າຈຶ່ງດູຖູກພວກເຮົາ ແມ່ນພວກເຮົາເປັນພວກທໍາອິດ
ທີ່ອອກປາກຢາກເອົາເຈົ້າຊີວິດກັບຄືນມາ” ຄໍາເວົ້າຂອງພວກຢູດາຮຸນແຮງກວ່າຄໍາເວົ້າຂອງພວກອິສຣາເອນ

## 20 ເຊບາກະບົດ

The Rebellion of Sheba

1 ບັງເອີນທີ່ນັ້ນມີຄົນອັນທະພານຢູ່ຄົນນຶ່ງຊື່ ເຊບາ ບຸດຂອງບິກຣີ ຄົນເບັນຢາມິນ ເຂົາໄດ້ເປົ່າເຂົາສັດຂຶ້ນກ່າວວ່າ, “ເຮົາ
ບໍ່ມີສ່ວນໃດດາວິດ ເຮົາບໍ່ມີມໍຣະດົກໃນບຸດຂອງເຈສຊີ ໂອ ອິສຣາເອນເອີຍ ໃຫ້ຕ່າງຄົນຕ່າງກັບໄປເຮືອນຂອງຕົນ
ເຖີດ”
2 ດັ່ງນັ້ນພວກຄົນອິສຣາເອນທັງຫມົດຈຶ່ງຖອຍຕົວຈາກດາວິດ ແລະໄປຕາມເຊບາ ບຸດບິກຣີ ແຕ່ພວກຄົນຢູດາໄດ້ຕິດ
ຕາມເຈົ້າຊີວິດຂອງເຂົາຢ່າງຫມັ້ນຄົງຈາກແມ່ນໍ້າຈໍແດນໄປເຖິງນະຄອນເຢຣູຊາເລັມ
3 ດາວິດສະເດັດກັບພຣະຣາຊວັງທີ່ນະຄອນເຢຣູຊາເລັມ ເຈົ້າຊີວິດກໍຮັບສັ່ງໃຫ້ນໍານາງສນົມທັງສິບຄົນທີ່ພຣະອົງຊົງ
ປະໄວ້ໃຫ້ເຝົ້າ ພຣະຣາຊວັງນັ້ນໄປຮວມກັນຢູ່ໃນບ້ານຫລັງນຶ່ງ ຊົງລ້ຽງດູໄວ້ແຕ່ບໍ່ໄດ້ຊົງສົມສູ່ຢູ່ດ້ວຍ ນາງເຫລົ່ານັ້ນກໍ
ຕ້ອງຖືກກັກໃຫ້ມີຊີວິດຢູ່ຢ່າງແມ່ຫມ້າຍຈົນເຖິງວັນຕາຍ

4 ເຈົ້າຊີວິດໄດ້ສັ່ງອາມາຊາວ່າ, “ຈົ່ງຮວບຮວມພົນຢູດາໃຫ້ມາພ້ອມກັນທີ່ນີ້ພາຍໃນສາມວັນ ຕົວທ່ານຈົ່ງມາດ້ວຍ”
5 ອາມາຊາກໍອອກໄປຮວບຮວມຄົນຢູດາ ແຕ່ເຂົາກໍທຳງານຊ້າເກີນກຳນົດທີ່ພຣະອົງຊົງສັ່ງໄວ້
6 ດາວິດເວົ້າກັບອາບີຊັຍວ່າ, “ບັດນີ້ເຊບາ ບຸດຂອງບີກຣີຄົງທຳອັນຕະລາຍກ່ເຮົາຍິ່ງກວ່າອັບຊາໂລມ ຈົ່ງນຳຂ້າຣາຊ
ການທະຫານຂອງເຈົ້ານາຍຂອງທ່ານໄປຕິດຕາມ ຢ້ານວ່າເຂົາຈະຫາເມືອງທີ່ມີປ້ອມໄດ້ ແລະຫນີພົ້ນສາຍຕາຂອງ
ເຮົາ”
7 ມີຄົນຂອງໂຢອາບຕາມເຂົາໄປ ແລະຄົນເຄເຣທ ກັບຄົນເປເລທ ກັບທະຫານທີ່ແຂງແຮງທັງຫມົດ ແລະເຂົາທັງຫລາຍ
ຍົກອອກໄປຈາກກຸງເຢຣູຊາເລັມເພື່ອໄລ່ຕາມເຊບາ ບຸດບີກຣີ
8 ເມື່ອເຂົາທັງຫລາຍມາເຖິງສີລາໃຫຍ່ທີ່ຢູ່ໃນເມືອງກິເບໂອນ ອາມາຊາກໍມາພົບກັບເຂົາທັງຫລາຍ ຝ່າຍໂຢອາບສວມ
ເຄື່ອງແຕ່ງກາຍທະຫານມີເຂັມຂັດຕິດດາບທີ່ຢູ່ໃນຝັກຄາດຢູ່ທີ່ບັ້ນແອວ ເມື່ອທ່ານເດີນໄປດາບກໍຕົກລົງ
9 ໂຢອາບຈຶ່ງຖາມອາມາຊາວ່າ, “ອ້າຍເອີຍ ສະບາຍດີຫລື?” ແລະໂຢອາບກໍເອົາມືຂວາຈັບຫນວດອາມາຊາຈະຈູບເຂົາ
10 ແຕ່ອາມາຊາບໍ່ໄດ້ສັງເກດເຫັນດາບຊຶ່ງຢູ່ໃນມືຂອງໂຢອາບ ໂຢອາບຈຶ່ງເອົາດາບແທງທ້ອງອາມາຊາໃສ້ທະລຸເຖິງດິນ
ບໍ່ຕ້ອງແທງຄັ້ງທີສອງ ເຂົາກໍຕາຍເສັຽແລ້ວ ແລ້ວໂຢອາບກັບອາບີຊັຍນ້ອງຊາຍກໍໄລ່ຕິດຕາມເຊບາ ບຸດບີກຣີໄປ
11 ທະຫານຫນຸ່ມຄົນນຶ່ງຂອງໂຢອາບມາຢືນຢູ່ໃກ້ອາມາຊາເວົ້າວ່າ, “ຜູ້ໃດເຫັນຊອບຝ່າຍໂຢອາບ ແລະຜູ້ໃດຢູ່ຝ່າຍດາ
ວິດໃຫ້ຜູ້ນັ້ນຕິດຕາມໂຢອາບໄປ”
12 ອາມາຊາກໍນອນເກືອກໂລຫິດຂອງຕົນຢູ່ທີ່ໃນທາງຫລວງ ເມື່ອຊາຍຄົນນັ້ນເຫັນປະຊາຊົນທັງສິ້ນມາຢຸດຢູ່ ເຂົາກໍນຳ
ສົບອາມາຊາໄປຖິ້ມໃນທົ່ງນາ ແລະເອົາເສື້ອຜ້າປົກໄວ້ ເພາະເມື່ອໃຜມາກໍເຂົ້າໄປເບິ່ງແລະຢຸດຢູ່
13 ເມື່ອເອົາສົບອາມາຊາອອກຈາກທາງຫລວງແລ້ວ ປະຊາຊົນທັງປວງກໍຕາມໂຢອາບເພື່ອຕິດຕາມເຊບາບຸດບີກຣີ
14 ເຊບາກໍຜ່ານຄົນອິສຣາເອນທຸກເຜົ່າໄປຈົນເຖິງອາເບນ ແລະເມືອງເບັດມາອາກາ ແລະຄົນຕະກູນບີກຣີຄົນເຫລົ່ານັ້ນ
ກໍມາຮວມກັນແລະຕິດຕາມເຂົາໄປ
15 ປະຊາຊົນທີ່ຢູ່ກັບໂຢອາບກໍມາເຖິງ ແລະລ້ອມເຂົາໄວ້ໃນອາເບນແຂວງເມືອງເບັດມາອາກາ ເຂົາເຮັດຍອດເຊີງຂຶ້ນທີ່
ຮີມກຳແພງເມືອງ ເຂົາຫລຸກຳແພງເພື່ອຈະໃຫ້ພັງ
16 ມີຍິງສລາດຄົນນຶ່ງຮ້ອງອອກມາຈາກໃນເມືອງວ່າ, “ຈົ່ງຟັງເດີ ຈົ່ງຟັງເດີ ຂໍບອກໂຢອາບໃຫ້ມາທີ່ນີ້ ຂ້ອຍຢາກຈະເວົ້າ
ນຳ”
17 ໂຢອາບກໍເຂົ້າມາໃກ້ຍິງນັ້ນ ນາງນັ້ນກໍເວົ້າວ່າ, “ທ່ານຄືໂຢອາບຫລື?” ເຂົາຕອບວ່າ, “ແມ່ນແລ້ວ” ນາງຈຶ່ງເອີ້ນທ່ານ
ວ່າ, “ຂໍທ່ານຟັງຖ້ອຍຄຳຂອງສາວໃຊ້ຂອງທ່ານແດ່” ທ່ານກໍຕອບວ່າ, “ຂ້ອຍກຳລັງຟັງຢູ່ແລ້ວ”
18 ນາງກໍເວົ້າວ່າ, “ໃນສມັຍບູຮານເຂົາເວົ້າກັນວ່າ “ໃຫ້ເຂົາຂໍຄຳປຶກສາທີ່ອາເບນເຖີດ” ແລ້ວເຂົາກໍຕົກລົງກັນໄດ້
19 ຂ້ອຍເປັນຄົນນຶ່ງທີ່ຮັກສງົບ ແລະສັດຊື່ໃນອິສຣາເອນ ທ່ານຫາຊ່ອງທີ່ຈະທຳລາຍເມືອງອັນເປັນເມືອງແມ່ໃນອິສຣາ
ເອນ ເປັນຫຍັງທ່ານຈຶ່ງຈະກືນມໍຣະດົກຂອງພຣະເຈົ້າເສັຽ”
20 ໂຢອາບຈຶ່ງຕອບວ່າ, “ຊຶ່ງຂ້ອຍຈະກືນຫລືທຳລາຍນັ້ນ ຂໍໃຫ້ຫ່າງໄກຈາກຂ້ອຍ
21 ເຣື່ອງນີ້ບໍ່ເປັນຄວາມຈິງ ແຕ່ມີຊາຍຄົນນຶ່ງຈາກແດນພູເອຟຣາອິມຊື່ ເຊບາບຸດບີກຣີ ໄດ້ຍົກມືຂອງເຂົາຂຶ້ນຕໍ່ສູ້ກະສັດ
ຄືຕໍ່ສູ້ດາວິດ ຈົ່ງມອບເຂົາມາແຕ່ຄົນດຽວ ຂ້ອຍຈະຖອຍທັບກັບຈາກເມືອງນີ້” ຍິງນັ້ນຈຶ່ງຕອບໂຢອາບວ່າ, “ເບິ່ງແມ່,
ເຮົາຈະ
ໂຍນຫົວຂອງເຂົາຂ້າມກຳແພງມາໃຫ້ທ່ານ”
22 ແລ້ວຍິງນັ້ນກໍໄປຫາປະຊາຊົນດ້ວຍປັນຍາຂອງນາງ ເຂົາທັງຫລາຍໄດ້ຕັດຫົວຂອງເຊບາບຸດບີກຣີໂຍນອອກມາໃຫ້
ໂຢອາບ ໂຢອາບກໍເປົ່າເຂົາສັຕ ຕ່າງກໍແຍກກັນໄປຈາກເມືອງນັ້ນກັບໄປຍັງບ້ານເຮືອນຂອງຕົນ ໂຢອາບກໍກັບໄປເຝົ້າ
ພຣະຣາຊາທີ່ກຸງເຢຣູຊາເລັມ

### ເຈົ້າໜ້າທີ່ຂອງດາວິດ

23 ໂຢອາບເປັນຜູ້ບັງຄັບບັນຊາກອງທັບທັງໝົດໃນອິສຣາເອນ ແລະເບນັຍຢາບຸດເຢໂຮີອາດາເປັນຜູ້ບັງຄັບບັນຊາກອງ
ຄົນເຄເຣທ ແລະຄົນເປເລທ
24 ແລະອາໂດຣາມດູແລຄົນງານໂຍທາ ເຢໂຮຊາຟັດບຸດອາຮີລຸດດູແລດ້ານເອກກະສານຕ່າງໆ
25 ເຊວາເປັນຣາຊເລຂາ ຊາໂດກ ແລະອາບີອາທາເປັນປະໂຣຫິດຂອງດາວິດຄືກັນ

## 21 ການແກ້ແຄ້ນໃຫ້ແກ່ຄົນກີເບໂອນ

David Avenges the Gibeonites

1 ໃນສະໄໝຂອງດາວິດມີການອຶດຢາກອາຫານຢູ່ສາມປີຕໍ່ໄປ ແລະດາວິດກໍເຂົ້າເຝົ້າຕໍ່ພຣະພັກພຣະຜູ້ເປັນເຈົ້າ ພ
ຣະຜູ້ເປັນເຈົ້າກ່າວວ່າ, “ເພາະເຂົາຂ້າຄົນກີເບໂອນ ຄວາມຜິດທີ່ເຂົາທັງຫລາຍຕ້ອງຕາຍຈຶ່ງຕົກຢູ່ກັບຊາອູນ ແລະ
ເຊື້ອສາຍຂອງເຂົາ”
2 ເຈົ້າຊີວິດຈຶ່ງຊົງເອີ້ນຄົນກີເບໂອນມາເວົ້າກັບເຂົາວ່າ (ຝ່າຍຄົນກີເບໂອນນັ້ນບໍ່ແມ່ນປະຊາຊົນອິສຣາເອນ ແຕ່ເປັນຄົນ
ອາໂມຣິດທີ່ຍັງເຫລືອຢູ່ ເຖິງແມ່ນວ່າປະຊາຊົນອິສຣາເອນຈະໄດ້ປະຕິຍານໄວ້ວ່າຈະໄວ້ຊີວິດເຂົາທັງຫລາຍ ແຕ່ຊາ
ອູນກໍຊົງຫາຊ່ອງທາງທີ່ຈະຂ້າເຂົາທັງຫລາຍເສັຽ ເພາະຄວາມຮ້ອນໃຈທີ່ເຫັນແກ່ຄົນອິສຣາເອນແລະຄົນຢູດາ)
3 ດາວິດໄດ້ຖາມຄົນກີເບໂອນວ່າ, “ເຮົາຈະເຮັດຫຍັງໃຫ້ແກ່ພວກທ່ານໄດ້ ເຮົາຈະທຳຢ່າງໃດຈຶ່ງຈະລົບມົນທິນບາບເສັຽ
ໄດ້ ເພື່ອພວກທ່ານຈະໄດ້ອວຍພອນແກ່ມໍຣະດົກຂອງພຣະເຈົ້າໄດ້”
4 ຄົນກີເບໂອນທູນຕອບພຣະອົງວ່າ, “ລະຫວ່າງພວກຂ້ານ້ອຍກັບຊາອູນ ແລະເຊື້ອສາຍຂອງທ່ານນັ້ນບໍ່ແມ່ນເຣື່ອງເງິນ
ຫລືທອງຄຳ ທັງບໍ່ແມ່ນເຣື່ອງຂອງຂ້ານ້ອຍທີ່ຈະປະຫານຊີວິດອິສຣາເອນຄົນນຶ່ງຄົນໃດ” ພຣະອົງຈຶ່ງເວົ້າວ່າ, “ແລ້ວ
ພວກທ່ານຈະໃຫ້ເຮົາເຮັດແນວໃດແກ່ທ່ານ”
5 ເຂົາກາບທູນເຈົ້າຊີວິດວ່າ, “ຊາຍຜູ້ທີ່ເຜົາຜານພວກຂ້ານ້ອຍ ແລະວາງແຜນການທຳລາຍພວກຂ້ານ້ອຍ ເພື່ອບໍ່ໃຫ້
ພວກຂ້ານ້ອຍມີທີ່ຢູ່ໃນເຂດແດນອິສຣາເອນ
6 ຂໍຊົງມອບບຸດເຈັດຄົນຂອງເຂົາໃຫ້ແກ່ພວກຂ້ານ້ອຍ ເພື່ອພວກຂ້ານ້ອຍຈະໄດ້ແຂວນເຂົາເສັຽຕໍ່ພຣະພັກພຣະຜູ້ເປັນ
ເຈົ້າທີ່ກີເບໂອນແຫ່ງຊາອູນຜູ້ຖືກເລືອກຂອງພຣະຜູ້ເປັນເຈົ້າ” ແລະເຈົ້າຊີວິດເວົ້າວ່າ, “ເຮົາຈະຈັດເຂົາມາໃຫ້”
7 ແຕ່ເຈົ້າຊີວິດຊົງໄວ້ຊີວິດເມຟີໂບເຊທ ບຸດຂອງໂຢນາທານບຸດຊາຍຂອງຊາອູນ ດ້ວຍເຫດຄຳປະຕິຍານລະຫວ່າງທັງ
ສອງທີ່ກະທຳໃນພຣະນາມພຣະຜູ້ເປັນເຈົ້າ ຄືລະຫວ່າງດາວິດກັບໂຢນາທານຣາຊໂອຣົດຂອງຊາອູນ
8 ແຕ່ເຈົ້າຊີວິດນຳເອົາບຸດສອງຄົນຂອງນາງຣິສປາບຸດຕຣີຂອງອັຍຢາຊຶ່ງບັງເກີດກັບຊາອູນ ຊື່ອາຣ໌ໂມນີ ແລະເມຟີໂບ
ເຊທ ກັບບຸດຫ້າຄົນຂອງມີຄານຣາຊທິດາຂອງຊາອູນ ຊຶ່ງພຣະນາງມີກັບອາດຣີເອນບຸດບາຣ໌ຊິນລັຍ ຊາວເມໂຮຣາ
9 ພຣະອົງຊົງມອບຄົນເຫລົ່ານີ້ໄວ້ໃນມືຂອງຄົນກີເບໂອນ ເຂົາທັງຫລາຍຈຶ່ງແຂວນຄົນທັງເຈັດໄວ້ເທິງພູເຂົາຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ ແລະທັງເຈັດຄົນກໍພິນາດໄປນຳກັນ ເຂົາຖືກຂ້າຕາຍໃນແຣກຂອງຣະດູກ່ຽວເຂົ້າໃນວັນຕົ້ນການກ່ຽວ
ເຂົ້າບາຣ໌ລີ
10 ແລ້ວນາງຣິສປາບຸດຕຣີຂອງອັຍຢາກໍເອົາຜ້າກະສອບປູໄວ້ເທິງກ້ອນຫີນສຳລັບຕົນເອງ ຕັ້ງແຕ່ຕົ້ນຣະດູກ່ຽວຈົນຝົນ
ຈາກທ້ອງຟ້າຕົກເທິງເຂົາທັງຫລາຍ ກາງເວັນນາງກໍບໍ່ຍອມໃຫ້ນົກມາເກາະ ຫລືກາງຄືນບໍ່ໃຫ້ສັດປ່າເຂົ້າມາໃກ້
11 ເມື່ອເຂົາກາບທູນດາວິດວ່ານາງຣິສປາບຸດຕຣີຂອງອັຍຢານາງສນົມຂອງຊາອູນໄດ້ເຮັດດັ່ງນັ້ນ
12 ດາວິດສະເດັດໄປນຳກະດູກຂອງຊາອູນແລະຂອງໂຢນາທານຣາຊໂອຣົດຂຶ້ນມາຈາກເມືອງຢາເບັດກີເລອາດ ຜູ້ທີ່ລັກ
ລອບເອົາໄປຈາກລານເມືອງເບັດຊານທີ່ຄົນຟີລິສຕິນປະຫານຊາອູນເທິງພູກິນໂບອາ
13 ພຣະອົງຊົງນຳເອົາກະດູກຂອງຊາອູນທີ່ນັ້ນ ແລະຮວບຮວມກະດູກຂອງຜູ້ທີ່ຖືກແຂວນໄວ້ໃຫ້ຕາຍນັ້ນ

14 ແລະເຂົາກໍຝັງກະດູກຂອງຊາອູນແລະຂອງໂຢນາທານຣາຊໂອຣົດໄວ້ໃນແຜ່ນດິນຂອງເບັນຢາມິນໃນເມືອງເຊລາໃນ
ອຸບໂມງຂອງຄົນຄີສບິດາຂອງພຣະອົງ ເຂົາທັງຫລາຍກໍກະທຳຕາມທຸກຢ່າງທີ່ພຣະຣາຊາຊົງສັ່ງໄວ້ ຄັນຕໍ່ມາພຣະຜູ້
ເປັນເຈົ້າກໍຊົງສະດັບຟັງຄຳອະທິຖານເພື່ອແຜ່ນດິນນັ້ນ

**ອາບີຊັຍຊ່ອຍດາວິດໃຫ້ພົ້ນຈາກຄົນຍັກ**

Exploits of David’s Men

(1 ຂຄວ 20:4-8)

15 ຄົນຟີລິສຕິນໄດ້ທຳສົງຄາມກັບຄົນອິສຣາເອນອີກ ດາວິດກໍລົງໄປພ້ອມກັບບັນດາຂ້າຣາຊການຂອງພຣະອົງແລະໄດ້
ສູ້ຮົບກັບຄົນຟີລິສຕິນ ແລະດາວິດກໍຊົງອ່ອນເພັຽ
16 ອິສບີເບໂນບ ຄົນນຶ່ງໃນເຊື້ອສາຍຂອງຄົນຍັກຖືຫອກທອງສຳຣິດໜັກສາມຮ້ອຍເຊເກລ ມີດາບໃໝ່ຄາດແອວ ຄິດ
ຈະສັງຫານດາວິດເສັຽ
17 ແຕ່ອາບີຊັຍບຸດນາງເຊຣູຢາເຂົ້າມາຊ່ອຍພຣະອົງໄວ້ ແລະສູ້ຮົບກັບຄົນຟີລິສຕິນຄົນນັ້ນຂ້າເຂົາເສັຽ ແລ້ວບັນດາປະ
ຊາຊົນຂອງດາວິດກໍທູນວິງວອນພຣະອົງດ້ວຍການສາບານວ່າ, “ຂໍພຣະອົງຢ່າສະເດັດໄປທຳເສິກພ້ອມກັບພວກຂ້າ
ນ້ອຍທັງຫລາຍອີກຕໍ່ໄປເລີຍ ຢ້ານວ່າພຣະອົງຈະດັບຄວາມຫວັງຂອງອິສຣາເອນເສັຽ”

**ບັນດາຄົນຍັກທີ່ຖືກຄົນຂອງດາວິດຂ້າ**

18 ຢູ່ມາພາຍຫລັງນີ້ ມີການຮົບກັບຄົນຟີລິສຕິນທີ່ເມືອງໂກບ ຄາວນັ້ນຊິບເບກັຍຕະກູນຮູຊາໄດ້ຂ້າຄົນຊື່ຊັຟໃນເຊື້ອສາຍ
ຂອງຄົນຍັກ
19 ແລະມີການຮົບກັບຄົນຟີລິສຕິນທີ່ເມືອງໂກບອີກ ເອນຮານານບຸດຢາອາເຣໂອເຣກິມ ຊາວເບັດເລເຮັມໄດ້ຂ້າໂກລີອາ
ດ ຊາວກິດຕີ ຜູ້ມີຫອກທີ່ມີດ້າມໃຫຍ່ເທົ່າກັບໄມ້ກຳພັ່ນຫູກ
20 ມີການຮົບກັນອີກທີ່ເມືອງກາດ ອັນເປັນເມືອງທີ່ມີຊາຍຄົນນຶ່ງຮູບຮ່າງໃຫຍ່ ມີນິ້ວມືຂ້າງລະຫົກນິ້ວ ແລະນິ້ວຕີນຂ້າງ
ລະຫົກນິ້ວ ຮວມກັນຊາວສີ່ນິ້ວ ເຂົາກໍສືບເນື່ອງມາຈາກພວກຄົນຍັກເໝືອນກັນ
21 ເມື່ອເຂົາທ້າທາຍອິສຣາເອນ ໂຢນາທານບຸດຂອງຊີເມອີຫລານຊາຍຂອງດາວິດ ກໍສັງຫານເຂົາເສັຽ
22 ຄົນທັງສີ່ນີ້ສືບເນື່ອງມາຈາກຄົນຍັກໃນເມືອງກາດ ເຂົາທັງຫລາຍລົ້ມຕາຍດ້ວຍພຣະຫັດຂອງດາວິດ ແລະດ້ວຍມືຂອງ
ຂ້າຣາຊການຂອງພຣະອົງ

## 22 ເພງຊັຍຊະນະຂອງດາວິດ

David’s Song of Thanksgiving

(ພສສ 18:1-50)

1 ຕໍ່ໄປນີ້ ແມ່ນບົດເພງທີ່ດາວິດໄດ້ຮ້ອງສັຣເສີນພຣະຜູ້ເປັນເຈົ້າ ຄາວເມື່ອພຣະອົງຊົງຊ່ອຍດາວິດໃຫ້ພົ້ນຈາກເງື້ອມມື
ຂອງຊາອູນ ແລະສັດຕຣູຄົນອື່ນໆຂອງພຣະອົງ
2 ພຣະຜູ້ເປັນເຈົ້າຊົງເປັນພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້າພຣະອົງ ພຣະອົງຊົງເປັນປ້ອມປ້ອງກັນອັນແໜ້ນ ໜາຂອງຂ້າພ
ຣະອົງ
3 ພຣະເຈົ້າຂອງຂ້າພຣະອົງຊົງເປັນຜູ້ຄຸ້ມຄອງຂອງຂ້າພຣະອົງ ແລະຂ້າພຣະອົງກໍຢູ່ນຳພຣະອົງຢ່າງປອດພັຍ ພຣະອົງ
ຊົງເປັນເໝືອນແຜ່ນເຫລັກຕ້ານທານປ້ອງກັນຂ້າພຣະອົງໄວ້ ພຣະອົງປ້ອງກັນຂ້າພຣະອົງໃຫ້ປອດພັຍ ພຣະອົງຊົງ
ເປັນພຣະຜູ້ຊ່ອຍຂອງຂ້າພຣະອົງ ພຣະອົງຊົງປ້ອງກັນແລະຊ່ອຍຂ້າພຣະອົງໃຫ້ພົ້ນຈາກການທຳລາຍອັນຮ້າຍແຮງ
4 ຂ້າພຣະອົງຮ້ອງຫາພຣະຜູ້ເປັນເຈົ້າ ແລະພຣະອົງກໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກສັດຕຣູ ຈົ່ງສັຣເສີນພຣະຜູ້ເປັນ
ເຈົ້າ
5 ຄື້ນແຫ່ງຄວາມຕາຍໄດ້ອ້ອມຮອບຂ້າພຣະອົງຢູ່ ຄື້ນແຫ່ງການທຳລາຍໄດ້ໄຫລຖ້ວມຂ້າພຣະອົງ

6 ເຊືອກແຫ່ງຄວາມຕາຍໄດ້ມັດອ້ອມຂ້າພຣະອົງໄວ້ ຄວາມຕາຍຫ້າງແຮ້ວໃສ່ຂ້າພຣະອົງ
7 ເມື່ອຢູ່ໃນຄວາມທຸກຍາກລຳບາກ ຂ້າພຣະອົງຮ້ອງຫາພຣະຜູ້ເປັນເຈົ້າ ຂ້າພຣະອົງໄດ້ຮ້ອງຂໍຄວາມຊ່ອຍເຫລືອຈາກພຣະເຈົ້າຂອງຂ້າພຣະອົງ ພຣະອົງຊົງໄດ້ຍິນສຽງຂ້າພຣະອົງຢູ່ໃນພຣະວິຫານຂອງພຣະເຈົ້າ ພຣະອົງຊົງຟັງສຽງຮ້ອງຂໍຄວາມຊ່ອຍເຫລືອຈາກຂ້າພຣະອົງ
8 ແລະໂລກທັງໂລກກໍສັ່ນສະທ້ານຫວັ່ນໄຫວ ຮາກເຫງົ້າທ້ອງຟ້າສັ່ນຄອນແລະສະທ້ານສະເທືອນ ເພາະວ່າພຣະເຈົ້າຊົງພຣະພິໂຣດ
9 ຄວັນໄຟໄດ້ພຸ່ງອອກຈາກຮູດັງພຣະອົງ ແປວໄຟອັນຮ້ອນແຮງໄດ້ອອກມາຈາກປາກພຣະອົງເຫມືອນຖ່ານໄຟ
10 ພຣະອົງຊົງທຳໃຫ້ທ້ອງຟ້າຕ່ຳລົງ ແລະສະເດັດລົງມາພ້ອມດ້ວຍກ້ອນເມກອັນຫນາຕຶບຢູ່ໃຕ້ພຣະບາດຂອງພຣະອົງ
11 ພຣະອົງສະເດັດລົງມາເທິງຫລັງເຊຣູບິມ ພຣະອົງສະເດັດລົງມາຕາມລົມຢ່າງວ່ອງໄວ
12 ພຣະອົງຫຸ້ມຫໍ່ພຣະອົງເອງດ້ວຍຄວາມມືດ ກ້ອນເມກອັນຫນາຕຶບທີ່ເຕັມດ້ວຍນ້ຳໄດ້ອ້ອມຮອບພຣະອົງ
13 ແສງຖ່ານໄຟເຫມືອນຟ້າແມບເຫລື້ອມຕໍ່ພຣະພັກພຣະອົງ
14 ແລ້ວພຣະຜູ້ເປັນເຈົ້າຊົງຮ້ອງສຽງດັງຈາກທ້ອງຟ້າ ແລະສຽງຂອງພຣະເຈົ້າອົງສູງສຸດກໍໄດ້ຍິນທົ່ວໄປ
15 ພຣະອົງຊົງຍິງທະນູແລະຂັບໄລ່ສັດຕຣູທັງຫລາຍຂອງພຣະອົງແຕກກະຈັດກະຈາຍໄປ ພຣະອົງຊົງສັ່ງຟ້າແມບເຫລື້ອມໄລ່ໃຫ້ເຂົາປົບຫນີ ເມື່ອພຣະຜູ້ເປັນເຈົ້າຊົງນາບຂູ່ພວກສັດຕຣູຂອງພຣະອົງແລະຮ້ອງໃສ່ເຂົາດ້ວຍຄວາມຄຽດຮ້າຍ
16 ພື້ນມະຫາສມຸດກໍປາກົດອອກມາ ຮາກຖານຂອງໂລກກໍບໍ່ມີຫຍັງຫຸ້ມຫໍ່
17 ພຣະຜູ້ເປັນເຈົ້າຊົງຢື້ລົງມາຈາກສວັນແລະຊົງອູ້ມຊູຂ້າພຣະອົງ ພຣະອົງຊົງເອົາຂ້າພຣະອົງຂຶ້ນມາຈາກນ້ຳເລິກ
18 ພຣະອົງຊົງຊ່ອຍຊີວິດຂ້າພຣະອົງໃຫ້ພົ້ນຈາກຜູ້ທີ່ກຽດຊັງຂ້າພຣະອົງ ແລະໃຫ້ພົ້ນຈາກສັດຕຣູຂອງຂ້າພຣະອົງທີ່ມີອຳນາດເຫນືອຂ້າພຣະອົງ
19 ເວລາຂ້າພຣະອົງຢູ່ໃນຄວາມທຸກລຳບາກ ສັດຕຣູໄດ້ມາຕໍ່ສູ້ຂ້າພຣະອົງ ແຕ່ພຣະຜູ້ເປັນເຈົ້າຊົງປ້ອງກັນຂ້າພຣະອົງໄວ້
20 ພຣະອົງຊົງຊ່ອຍເຫລືອຂ້າພຣະອົງໃຫ້ພົ້ນຈາກອັນຕະຣາຍ ພຣອົງຊົງຊ່ອຍຂ້າພຣະອົງໃຫ້ພົ້ນ ເພາະພຣະອົງຊົງພໍພຣະທັຍຂ້າພຣະອົງ
21 ພຣະຜູ້ເປັນເຈົ້າຊົງໃຫ້ຣາງວັນແກ່ຂ້າພຣະອົງ ເພາະວ່າຂ້າພຣະອົງເປັນຄົນຊອບທັມ ພຣະອົງຊົງອວຍພອນຂ້າພຣະອົງ ເພາະວ່າມືຂອງຂ້າພຣະອົງສະອາດບໍຣິສຸດ
22 ຂ້າພຣະອົງໄດ້ເດີນຕາມເສັ້ນທາງຂອງພຣະອົງ ແລະຂ້າພຣະອົງບໍ່ໄດ້ເຫີນຫ່າງຈາກພຣະອົງເລີຍ
23 ຂ້າພຣະອົງໄດ້ທຳຕາມກົດຂໍ້ບັນຍັດທຸກຢ່າງຂອງພຣະອົງ ຂ້າພຣະອົງບໍ່ໄດ້ລະເມີດຂໍ້ຄຳສັ່ງຂອງພຣະອົງ
24 ພຣະອົງຊົງຮູ້ວ່າ ຂ້າພຣະອົງເປັນຄົນບໍ່ມີຄວາມຜິດ ແລະຮູ້ວ່າຂ້າພຣະອົງໄດ້ລະວັງຕົວບໍ່ເຮັດການຊົ່ວຮ້າຍ
25 ແລະພຣະອົງຊົງໃຫ້ຣາງວັນຂ້າພຣະອົງ ເພາະວ່າຂ້າພຣະອົງເປັນຄົນຊອບທັມ ເພາະພຣະອົງຮູ້ວ່າຂ້າພຣະອົງເປັນຄົນບໍຣິສຸດ
26 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງສະແດງຄວາມຮັກອັນຫມັ້ນຄົງຕໍ່ຜູ້ທີ່ສັດຊື່
27 ພຣະອົງຊົງບໍຣິສຸດໃຈຕໍ່ຜູ້ທີ່ບໍຣິສຸດໃຈ ແຕ່ວ່າພຣະອົງຊົງເປັນສັດຕຣູກັບພວກຄົນຊົ່ວຮ້າຍ
28 ພຣະອົງຊົງຊ່ອຍພວກທີ່ຖ່ອມຕົວໃຫ້ພົ້ນພັຍ ແຕ່ວ່າພຣະອົງຊົງໃຫ້ຄົນຈອງຫອງຖ່ອມຕົວລົງ
29 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນແສງສວ່າງຂອງຂ້າພຣະອົງ ພຣະອົງຊົງທຳໃຫ້ຄວາມມືດມົວຂອງຂ້າພຣະອົງສູນສລາຍໄປ
30 ພຣະອົງຊົງປະທານກຳລັງໃຫ້ຂ້າພຣະອົງຕໍ່ສູ້ພວກສັດຕຣູ ແລະຊົງປະທານເຫື່ອແຮງໃຫ້ຂ້າພຣະອົງໂດດຂ້າມກຳແພງປ້ອງກັນຂອງພວກເຂົາ

31 ສ່ວນການກະທຳຂອງພຣະເຈົ້າຖືກຕ້ອງສົມບູນທີ່ສຸດ ຄຳເວົ້າຂອງພຣະອົງຊົງເປັນທີ່ໄວ້ວາງໃຈໄດ້ຢ່າງຍິ່ງ ພຣະອົງຊົງ
ເຫມືອນແຜ່ນເຫລັກຕ້ານທານ ສຳລັບທຸກຄົນທີ່ຊອກຫາຄວາມປ້ອງກັນຈາກພຣະອົງ
32 ພຣະຜູ້ເປັນເຈົ້າເທົ່ານັ້ນທີ່ຊົງເປັນພຣະເຈົ້າ ບໍ່ມີໃຜເປັນຜູ້ປົກປ້ອງຮັກສາພວກຂ້າພຣະອົງໄດ້ນອກຈາກພຣະອົງ
33 ພຣະເຈົ້າເປັນເຫມືອນປ້ອມຍາມແຂງແຮງຂອງຂ້າພຣະອົງ ພຣະອົງຊົງໃຫ້ຫົນທາງຂອງຂ້າພຣະອົງປອດພັຍ
34 ພຣະອົງຊົງໃຫ້ຂ້າພຣະອົງຍ່າງທ່ຽວເຫມືອນກວາງ ພຣະອົງຊົງຮັກສາຂ້າພຣະອົງໃຫ້ປອດພັຍຢູ່ເທິງພູ
35 ພຣະອົງຊົງຝຶກແອບຂ້າພຣະອົງ ເພື່ອຕຽມເຂົ້າສນາມຮົບ ເພື່ອວ່າຂ້າພຣະອົງຈະກົ່ງທະນູອັນແຂງໄດ້
36 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງປ້ອງກັນຂ້າພຣະອົງ ແລະຊ່ອຍຂ້າພຣະອົງໃຫ້ພົ້ນພັຍ ການຊ່ອຍເຫລືອຂອງພຣະ
ອົງທຳໃຫ້ຂ້າພຣະອົງມີອຳນາດ
37 ພຣະອົງຊົງຊ່ອຍໃຫ້ຂ້າພຣະອົງໄປໃນທາງກວ້າງ ແລະບໍ່ໃຫ້ຂ້າພຣະອົງເຕະສະດຸດຈັກເທື່ອເລີຍ
38 ຂ້າພຣະອົງໄດ້ໄລ່ສັດຕຣູທັງຫລາຍຂອງຂ້າພຣະອົງ ແລະໄດ້ທຳລາຍພວກມັນ ຂ້າພຣະອົງບໍ່ຍອມຢຸດຈົນກວ່າໄດ້ຊະ
ນະມັນ
39 ຂ້າພຣະອົງຕີພວກມັນລົ້ມລົງ ຈົນພວກມັນລຸກຂຶ້ນບໍ່ໄດ້ ພວກມັນເສັຽຊັຍລົ້ມລົງໃຕ້ຕີນຂ້າພຣະອົງ
40 ພຣະອົງຊົງປະທານໃຫ້ຂ້າພຣະອົງມີກຳລັງແຂງແຮງອອກໄປສູ່ສນາມຮົບ ແລະຊົງປະທານໃຫ້ຂ້າພຣະອົງຊະນະສັດ
ຕຣູທັງຫລາຍ
41 ພຣະອົງຊົງທຳໃຫ້ສັດຕຣູຂອງຂ້າພຣະອົງປົບຫນີ ຂ້າພຣະອົງໄດ້ທຳລາຍພວກທີ່ກຽດຊັງຂ້າພຣະອົງ
42 ພວກເຂົາຊອກຫາຄວາມຊ່ອຍເຫລືອ ແຕ່ບໍ່ມີໃຜຊ່ອຍເຂົາໃຫ້ພົ້ນໄດ້ ພວກເຂົາຮ້ອງຫາພຣະຜູ້ເປັນເຈົ້າ ແຕ່ວ່າພຣະ
ອົງບໍ່ຊົງຕອບເຂົາ
43 ຂ້າພຣະອົງໄດ້ທຳລາຍເຂົາໃຫ້ຫມຸ່ນ ເຫມືອນຂີ້ຝຸ່ນດິນ ຂ້າພຣະອົງໄດ້ຢຽບເຂົາເຫມືອນຢຽບຂີ້ຕົມໃນຫົນທາງ
44 ພຣະອົງຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກປະຊາຊົນຂອງຂ້າພຣະອົງຜູ້ເປັນກະບົດ ແລະຊົງໂຜດໃຫ້ຂ້າພຣະອົງໄດ້ເປັນ
ຜູ້ປົກຄອງຊົນຊາດທັງຫລາຍ ຊົນຊາດທີ່ຂ້າພຣະອົງບໍ່ເຄີຍຮູ້ຈັກກໍຮັບໃຊ້ຂ້າພຣະອົງ
45 ຄົນຕ່າງປະເທດໄດ້ກົ້ມຂາບລົງຕໍ່ຫນ້າຂ້າພຣະອົງ ເມື່ອພວກເຂົາໄດ້ຍິນສຽງຂ້າພຣະອົງ ພວກເຂົາກໍເຊື່ອຟັງ
46 ພວກເຂົາສູນເສັຽຄວາມກ້າຫານ ແລະຕົວສັ່ນສາຍອອກມາຈາກປ້ອມປ້ອງກັນຂອງພວກເຂົາ
47 ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ ຂ້າພຣະອົງສັຣເສີນຜູ້ປົກຄອງຮັກສາຂອງຂ້າພຣະອົງ ພຣະເຈົ້າຊົງເປັນພຣະຜູ້ຊ່ອຍທີ່
ແຂງແຮງຂອງຂ້າພຣະອົງ ຈົ່ງປະກາດຄວາມຍິ່ງໃຫຍ່ຂອງພຣະອົງ
48 ພຣະອົງຊົງໂຜດໃຫ້ຂ້າພຣະອົງຊະນະສັດຕຣູທັງຫລາຍຂອງຂ້າພຣະອົງ ພຣະອົງຊົງປາບປາມຊົນຊາດຕ່າງໆໃຫ້ຢູ່ໃຕ້
ອຳນາດຂອງຂ້າພຣະອົງ
49 ແລະພຣະອົງຊົງຊ່ອຍຊີວິດຂ້າພຣະອົງໃຫ້ພົ້ນຈາກສັດຕຣູຂອງຂ້າພຣະອົງ ພຣະອົງຊົງຍົກຍໍຂ້າພຣະອົງໃຫ້ຢູ່
ເຫນືອກວ່າສັດຕຣູ ແລະປ້ອງກັນຂ້າພຣະອົງໃຫ້ພົ້ນຈາກຄົນໂຫດຮ້າຍທາລຸນ
50 ດັ່ງນີ້ແຫລະ ຂ້າພຣະອົງຈະສັຣເສີນພຣະອົງຖ້າມກາງຊົນຊາດຕ່າງໆ ຂ້າພຣະອົງຈະຮ້ອງເພງສັຣເສີນແດ່ພຣະອົງ
51 ພຣະເຈົ້າຊົງປະທານໄຊຊະນະອັນຍິ່ງໃຫຍ່ແກ່ກະສັດທີ່ພຣະອົງຊົງເລືອກ ພຣະອົງຊົງສະແດງຄວາມຮັກຫມັ້ນຄົງແກ່
ຜູ້ທີ່ພຣະອົງຊົງເລືອກໄວ້ແລ້ວຄື ແກ່ດາວິດ ແລະເຊື້ອສາຍຂອງດາວິດຕລອດໄປ

## 23 ຄຳເວົ້າສຸດທ້າຍຂອງດາວິດ

The Last Words of David

1 ຕໍ່ໄປນີ້ ເປັນຄຳເວົ້າເທື່ອສຸດທ້າຍຂອງດາວິດ ດາວິດເປັນບຸດຊາຍຂອງເຈສຊີ ເປັນຜູ້ທີ່ພຣະເຈົ້າຊົງສ້າງໃຫ້ເປັນຜູ້ຍິ່ງ
ໃຫຍ່ ຜູ້ທີ່ພຣະເຈົ້າຂອງຢາໂຄບຊົງເລືອກເອົາເປັນເຈົ້າຊີວິດ ແລະເປັນຜູ້ທີ່ແຕ່ງບົດເພງຂອງຊາວອິສຣາເອນ ດາວິດ
ໄດ້ເວົ້າວ່າ,

2 “ພຣະວິນຍານຂອງພຣະຜູ້ເປັນເຈົ້າຊົງກ່າວຜ່ານຂ້າພະເຈົ້າ ຖ້ອຍຄຳຂອງພຣະອົງຊົງຢູ່ໃນສົບປາກຂອງຂ້າພະເຈົ້າ
3 ພຣະເຈົ້າຂອງຊາວອິສຣາເອນໄດ້ຊົງກ່າວໄວ້ ຜູ້ຄຸ້ມຄອງຊາວອິສຣາເອນໄດ້ເວົ້າຕໍ່ຂ້າພະເຈົ້າວ່າ “ເຈົ້າຊີວິດທີ່ປົກຄອງ
ໂດຍຊອບທັມ ແລະດ້ວຍຄວາມຢຳເກງພຣະຜູ້ເປັນເຈົ້າ
4 ເປັນເຫມືອນຕາເວັນສ່ອງແສງໃນເວລາເຊົ້າທີ່ບໍ່ມີເມກ ຕາເວັນນັ້ນທຳໃຫ້ຫຍ້າປົ່ງຮາກຂຶ້ນມາພາຍຫລັງຝົນຕົກ
5 ພຣະເຈົ້າຈະຊົງອວຍພອນແກ່ເຊື້ອສາຍຂອງຂ້າພະເຈົ້າ ດັ່ງນີ້ແຫລະ ເພາະວ່າພຣະເຈົ້າໄດ້ຊົງໃຫ້ຄຳຫມັ້ນສັນຍາໄວ້
ຕລອດໄປກັບຂ້າພະເຈົ້າ ທຸກສິ່ງກໍໄດ້ຈັດໄວ້ຢ່າງແນ່ນອນ ທຸກສິ່ງເຫລົ່ານີ້ແຫລະເປັນສິ່ງທີ່ຂ້າພະເຈົ້າຕ້ອງການແລະ
ຈະເປັນຄວາມພົ້ນຂອງຂ້າພະເຈົ້າຊຶ່ງພຣະເຈົ້າເປັນຜູ້ຊົງກະທຳ
6 ມະນຸດທີ່ອະທັມປຽບເຫມືອນຫນາມທີ່ເຂົາຕັດຖິ້ມ ຈະບໍ່ມີໃຜເດ່ມືອອກໄປຫຍິບເອົາມັນໄດ້
7 ນອກຈາກເຄື່ອງມືທີ່ທຳດ້ວຍເຫລັກຫລືດ້າມຫອກ ແລະພວກມັນຈະຖືກເຜົາເສັຽໃຫ້ຫມົດສິ້ນ

**ວິຣະບຸຣຸດຂອງດາວິດ**

David’s Mighty Men

(1 ຂຄວ 11:10-47)

8 ຕໍ່ໄປນີ້ເປັນຊື່ວິຣະບຸຣຸດທີ່ດາວິດຊົງມີຢູ່ ຄື ໂຢເຊັບບັສເຊເບທ ຕະກູນຕາເຄໂມນ ເປັນຈອມໃນຄົນທັງສາມນັ້ນ ເຂົາ
ແກວ່ງຫອກເຂົ້າແທງຄົນແປດຮ້ອຍຄົນ ຊຶ່ງເຂົາໄດ້ວຂ້າເສັຽໃນຄັ້ງດຽວ
9 ໃນຈຳນວນວິຣະບຸຣຸດສາມຄົນ ຄົນທີ່ຮອງຄົນນັ້ນມາ ຄື ເອເລອາຊາ ບຸດໂດໂດ ຜູ້ເປັນບຸດຂອງອາໂຮຮີ ທ່ານຢູ່ກັບດາ
ວິດຕັ້ງແຕ່ຄັ້ງທີ່ເຂົາທັງຫລາຍໄດ້ເວົ້າຫຍາມຄົນຟີລິສຕິນຊຶ່ງຊຸມນຸມກັນທີ່ນັ້ນເພື່ອສູ້ຮົບ ແລະຄົນອິສຣາເອນກໍຖອຍ
ທັບ
10 ທ່ານໄດ້ລຸກຂຶ້ນຂ້າຟັນພວກຟີລິສຕິນຈົນມືຂອງທ່ານເປັນມິນແຂງຕິດດາບ ໃນວັນນັ້ນພຣະຜູ້ເປັນເຈົ້າຊົງກະທຳໃຫ້ໄດ້
ໄຊຊະນະຢ່າງໃຫຍ່ຫລວງ ທະຫານກໍກັບຕາມທ່ານມາ ເພື່ອປົດເຂົ້າຂອງຈາກຜູ້ທີ່ຖືກຂ້າຕາຍເທົ່ານັ້ນ
11 ຮອງເຂົາມາ ຄື ຊັມມາ ບຸດ ອາເກ ຊາວຮາຣາ ຄົນຟີລິສຕິນມາຊຸມນຸມກັນຢູ່ທີ່ເລຮີ ເປັນບ່ອນທີ່ມີພື້ນດິນຜືນນຶ່ງມີ
ຫມາກຖົ່ວແດງເຕັມໄປຫມົດ ພວກພົນກໍຫນີພວກຟີລິສຕິນໄປ
12 ແຕ່ທ່ານຍືນຫມັ້ນຢູ່ຖ້າມກາງພື້ນດິນຜືນນັ້ນ ແລະປ້ອງກັນທີ່ດິນນັ້ນໄວ້ ແລະຂ້າຟັນຄົນຟີລິສຕິນ ແລະພຣະຜູ້ເປັນ
ເຈົ້າໄດ້ຊົງປະທານໄຊຊະນະຢ່າງໃຫຍ່ຫລວງ
13 ໃນພວກທະຫານເອກສາມສິບຄົນນັ້ນ ມີສາມຄົນທີ່ລົງມາ ແລະໄດ້ມາຫາດາວິດທີ່ຖ້ຳອາດຸນລາມໃນຣະດູກ່ຽວເຂົ້າ ມີ
ຄົນຟີລິສຕິນກອງນຶ່ງຕັ້ງຄ້າຍຢູ່ໃນຮ່ອມພູເຂົາເຣຟາອິມ
14 ຄາວນັ້ນດາວິດປະທັບໃນທີ່ກຳບັງເຂັ້ມແຂງ ແລະທະຫານປະຈຳປ້ອມຂອງຟີລິສຕິນກໍຢູ່ທີ່ເບັດເລເຮັມ
15 ດາວິດເວົ້າດ້ວຍຄວາມອາລັຍວ່າ, “ໃຜຫນໍຈະສິ່ງນ້ຳຈາກບໍ່ທີ່ເບັດເລເຮັມຊຶ່ງຢູ່ຂ້າງປະຕູເມືອງມາໃຫ້ເຮົາດື່ມໄດ້”
16 ທະຫານເອກທະຫານສາມຄົນນັ້ນກໍແຫກຄ້າຍຄົນຟີລິສຕິນເຂົ້າໄປ ຕັກນ້ຳທີ່ບໍ່ເບັດເລເຮັມຊຶ່ງຢູ່ຂ້າງປະເມືອງ ນຳມາ
ຖວາຍແກ່ດາວິດ ແຕ່ດາວິດບໍ່ໄດ້ຊົງດື່ມນ້ຳນັ້ນເລີຍ ພຣະອົງຊົງເທອອກຖວາຍແດ່ພຣະຜູ້ເປັນເຈົ້າ
17 ແລະກ່າວວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຊຶ່ງຂ້າພຣະອົງຈະດື່ມໂລຫິດຂອງຜູ້ທີ່ຕັກມາດ້ວຍການສ່ຽງຊີວິດຂອງເຂົາຫລື”
ເພາະສະນັ້ນພຣະອົງຈຶ່ງບໍ່ໄດ້ດື່ມ ທະຫານເອກທະຫານທັງສາມໄດ້ກະທຳສິ່ງເຫລົ່ານີ້
18 ຝ່າຍອາບີຊັຍນ້ອງຊາຍຂອງໂຢອາບບຸດນາງເຊຣູຢາ ເປັນຫົວຫນ້າຂອງທັງສາມສິບຄົນນັ້ນ ທ່ານໄດ້ຍົກຫອກຕໍ່ສູ້ທະ
ຫານສາມຮ້ອຍຄົນ ແລະຂ້າຕາຍສິ້ນ ແລະໄດ້ຮັບຊື່ສຽງດັງວິຣະບຸຣຸດທັງສາມຄົນນັ້ນ
19 ທ່ານຜູ້ທີ່ມີຊື່ສຽງໂດ່ງດັງທີ່ສຸດໃນສາມສິບຄົນນັ້ນ ສະນັ້ນໄດ້ເປັນຜູ້ບັງຄັບບັນຊາຂອງເຂົາ ແຕ່ທ່ານບໍ່ມີຍົດເທົ່າກັບ
ສາມຄົນນັ້ນ
20 ເບນັຍຢາບຸດເຢຮົວອາດາເປັນຄົນແຂງແຮງແຫ່ງເມືອງຄັບເຊເອນ ເປັນຄົນປະກອບດ້ວຍວິຣະກຳ ທ່ານໄດ້ຂ້າບຸດອາ
ຣີເອນຂອງໂມອາບສອງຄົນ ທ່ານໄດ້ລົງໄປຂ້າສິງທີ່ໃນບໍ່ນ້ຳໃນວັນທີ່ຫິມມະຕົກ

21 ທ່ານໄດ້ຂ້າຄົນເອຢິບຄົນນຶ່ງເປັນຊາຍຮູບຮ່າງງາມ ຄົນເອຢິບນັ້ນຖືຫອກຢູ່ ແຕ່ເບນັຍຢາຖືໄມ້ເທົ້າລົງໄປຫາເຂົາແລະ
ຍາດເອົາຫອກມາຈາກມືຂອງຄົນເອຢິບຄົນນັ້ນ ແລະຂ້າເຂົາຕາຍດ້ວຍຫອກຂອງເຂົາເອງ
22 ເບນັຍຢາບຸດເຢຮົວອາດາໄດ້ກະທຳກິດເຫລົ່ານີ້ແລະໄດ້ຊື່ສຽງດັ່ງວິຣະບຸຣຸດສາມຄົນນັ້ນ
23 ທ່ານມີຊື່ສຽງໂດ່ງດັງກວ່າສາມສິບຄົນນັ້ນ ແຕ່ທ່ານບໍ່ມີຍົດເທົ່າກັບສາມຄົນນັ້ນ ແລະດາວິດກໍຊົງແຕ່ງທ່ານໃຫ້ເປັນຜູ້
ບັງຄັບບັນຊາທະຫານຮັກສາພຣະອົງ
24 ອາຊາເຮນນ້ອງຊາຍຂອງໂຢອາບ ເປັນຄົນນຶ່ງໃນສາມສິບຄົນນັ້ນ ເອນຮານານບຸດຊາຍຂອງໂດໂດຊາວເບັດເລເຮັມ
25 ຊຳມາຊາວເມືອງຮາໂຣດ ເອລີກາຊາວເມືອງຮາໂຣດ
26 ເຮເລສ ຕະກູນປັນຕີ ອີຣາບຸດອີກເກສຊາວເມືອງເຕໂກອາ
27 ອາບີເອເຊີ ຊາເມືອງອານາໂທດ ເມບຸນນັຍ ຊາວຮູຊາ
28 ຊັນໂມນ ຊາເມືອງອາໂຮ ມາຮາຣັຍ ຊາວເນໂທຟາ
29 ເຮເລບ ບຸດບາອານາ ຊາວເນໂທຟາ ອິທຕັຍບຸດຣີບັຍ ຊາວກິເບອາ ແຫ່ງຄົນເບັນຢາມິນ
30 ເບນັຍຢາ ຊາວປີຣາໂທນ ຮິດດັຍຊາວລຳທານກາອັສ
31 ອາບີອັນໂບນ ຕະກູນອາຣ໌ບັທ ອັສມາເວທຊາວບາຮູຣິມ
32 ເອລີຢາບາຊາວຊາອັນໂບນ ບັນພະບຸຣຸດຂອງຢາເຊນ ໂຢນາທານ
33 ຊຳມາຊາວຮາຣາ ອາຮີອາມບຸດຊາຣາຣ໌ ຄົນຮາຣາ
34 ເອລີເຟເລທບຸດອາຮັສບັຍ ຊາວມາອາກາ ເອລີອາມບຸດອາຮີໂທເຟນ ຊາວກີໂລນ
35 ເຮສໂຣ ຊາວກາຣ໌ເມນ ປາອາຣັຍ ຊາວອາຣ໌ບິທ
36 ອີການບຸດນາທານ ຊາວໂຊບາ ບານີຄົນເຜົ່າກາດ
37 ເຊເລກຄົນອັມໂມນ ນາຮາຣັຍຊາວເບເອໂຣທ ຄົນຖືເຄື່ອງອາວຸດຂອງໂຢອາບ ບຸດນາງເຊຣູຢາຊາວອາຣໂມຣ໌
38 ອີຣາ ຊາວຮິດຕີ ກາເຣັບ ຊາວອິທຣີ
39 ອູຣີຢາຄົນຮິດຕີ ຮວບຮວມສາມສິບເຈັດຄົນດ້ວຍກັນ

## 24 ດາວິດນັບຈຳນວນປະຊາຊົນ

David’s Census of Israel and Judah

(1 ຂຄວ 21:1-6)

1 ຢູ່ມາ ພຣະຜູ້ເປັນເຈົ້າຊົງພຣະພິໂຣດຊາວອິສຣາເອນ ພຣະອົງໄດ້ຊົງບັນດານໃຫ້ດາວິດນຳເອົາຄວາມຍາກລຳບາກ
ມາໃຫ້ພວກເຂົາ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ດາວິດວ່າ, “ໄປນັບຄົນອິສຣເອນ ແລະຄົນຢູດາເບິ່ງດູ”
2 ດັ່ງນັ້ນ ດາວິດຈຶ່ງເວົ້າຕໍ່ໂຢອາບຜູ້ບັງຄັບບັນຊາທະຫານຂອງພຣະອົງວ່າ, “ທ່ານເອງກັບນາຍທະຫານຂອງທ່ານ ຈົ່ງ
ພາກັນອອກໄປໃນທົ່ວທຸກຕະກູນທົ່ວທັງປະເທດ ແລ້ວນັບເບິ່ງປະຊາຊົນ ເພາະເຮົາຢາກຮູ້ວ່າພວກເຂົາມີຫລາຍເທົ່າ
ໃດ”
3 ແຕ່ໂຢອາບກາບທູນເຈົ້າຊີວິດວ່າ, “ຂ້າແດ່ພຣະອົງ ຂໍໃຫ້ພຣະຜູ້ເປັນເຈົ້າຂອງພຣະອົງທຳໃຫ້ປະຊາຊົນອິສຣາເອນ
ເພີ້ມຫລາຍຂຶ້ນກວ່າດຽວນີ້ຮ້ອຍເທົ່າ ແລະຂໍໃຫ້ພຣະຣາຊາຊົງພຣະຈະເຣີນຢູ່ຈົນໄດ້ເຫັນສິ່ງທີ່ພຣະຜູ້ເປັນເຈົ້າຈະຊົງ
ກະທຳນີ້ ແຕ່ວ່າເປັນຫຍັງ ພຣະອົງຈຶ່ງຢາກຮູ້ເຣື່ອງນີ້”
4 ແຕ່ເຈົ້າຊີວິດໄດ້ບັງຄັບໃຫ້ໂຢອາບແລະພວກນາຍທະຫານປະຕິບັດຕາມຄຳສັ່ງຂອງພຣະອົງ ພວກເຂົາຈຶ່ງພາກັນກາບ
ທູນລາພຣະອົງໄປ ເພື່ອໄປນັບເບິ່ງປະຊາຊົນອິສຣາເອນ
5 ພວກເຂົາຂ້າມແມ່ນ້ຳຈໍແດນໄປຕັ້ງຄ້າຍພັກຢູ່ທາງທິດໃຕ້ເມືອງອາໂຣເອີ ຊຶ່ງເປັນເມືອງນຶ່ງຢູ່ໃນຮ່ອມພູໃນເຂດເມືອງ
ກາດ ແລ້ວພວກເຂົາກໍອອກຈາກທີ່ນັ້ນໄປທາງທິດເໜືອຈົນເຖິງເມືອງຢາເຊີ

6 ແລ້ວກໍອອກໄປຍັງເມືອງກິເລອາດ ເມືອງກາເດສ ເຂດຊາວຮິດຕີ ຕໍ່ມາພວກເຂົາກໍພາກັນໄປເມືອງດານ ເມື່ອອອກ
ຈາກເມືອງດານກໍອ້ອມໄປທາງທິດຕາເວັນຕົກເຖິງເມືອງຊີໂດນ
7 ແລ້ວພວກເຂົາໄດ້ໄປທາງທິດໃຕ້ຈົນເຖິງເມືອງຕີເຣທີ່ມີປ້ອມຍາມອັນແຫນ້ນຫນາ ແລະທົ່ວທຸກເມືອງຂອງຊາວຮີວີ
ຊາວການາອານ ແລະໃນທີ່ສຸດກໍເຖິງເມືອງເບເອີເຊບາ ທາງພາກໃຕ້ຂອງຢູດາ
8 ຫລັງຈາກໄດ້ເດີນທາງຜ່ານໄປທົ່ວທຸກຫົວເມືອງເປັນເວລາເກົ້າເດືອນກັບຊາວມື້ແລ້ວ ພວກເຂົາກໍກັບຄືນນະຄອນເຢຣູ
ຊາເລັມ
9 ພວກເຂົາໄດ້ຣາຍງານຈຳນວນປະຊາຊົນຕໍ່ເຈົ້າຊີວິດວ່າ ໃນອິສຣາເອນມີທະຫານທີ່ເກັ່ງກ້າ ແປດແສນຄົນ ແລະຢູ່ໃນ
ຢູດາມີຫ້າ ແສນຄົນ

**ຊົງຕັດສິນຄວາມຜິດບາບຂອງດາວິດ**

Judgment on David's Sin

(1 ຂຄວ 21:7-17)

10 ແຕ່ວ່າ ພາຍຫລັງດາວິດສຳຣວດສຳມະໂນຄົວປະຊາຊົນແລ້ວ ພຣະອົງກໍທຸກພຣະທັຍຈຶ່ງທູນຕໍ່ພຣະຜູ້ເປັນເຈົ້າວ່າ,
"ຂ້າພຣະອົງໄດ້ທຳຜິດຢ່າງຮ້າຍແຮງໃນການນີ້ ຂໍພຣະອົງຊົງອະພັຍໂທດໃຫ້ຂ້າພຣະອົງດ້ວຍ ເພາະຂ້າພຣະອົງໄດ້
ເຮັດເສື່ອມເສັຽທີ່ສຸດ"
11 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ ກາດ ຜູ້ປະກາດພຣະທັມ ຊຶ່ງເປັນຜູ້ທຳນວາຍປະຈຳດາວິດວ່າ,
12 "ຈົ່ງໄປບອກດາວິດວ່າ ເຮົາຈະສເນີໃຫ້ເຂົາເລືອກເອົາຢ່າງນຶ່ງໃນສາມຢາງ ຖ້າເຂົາເລືອກເອົາສິ່ງໃດແມ່ນສິ່ງນັ້ນທີ່ເຮົາ
ຈະກະທຳ"
13 ກາດຈຶ່ງເຂົ້າເຝົ້າດາວິດແລະກາບທູນພຣະອົງວ່າ, "ຈະໃຫ້ມີການອຶດອາຫານເກີດຂຶ້ນໃນແຜ່ນດິນຂອງພຣະອົງເປັນເວ
ລາສາມປີບໍ ຫລືຈະໃຫ້ພຣະອົງປົບຫນີສັດຕຣູຂອງພຣະອົງເປັນເວລາສາມເດືອນບໍ ຫລືຈະໃຫ້ໂຣກລະບາດເກີດຂຶ້ນ
ໃນປະເທດຂອງພຣະອົງເປັນເວລາສາມມື້ບໍ ບັດນີ້ຂໍໃຫ້ພຣະອົງຄຶດເບິ່ງ ແລ້ວໃຫ້ຕອບແກ່ຂ້ານ້ອຍ ເພື່ອຈະໄດ້ກັບຄືນ
ໄປທູນພຣະຜູ້ເປັນເຈົ້າ"
14 ດາວິດໄດ້ຕອບວ່າ, "ເຮົາຍາກໃຈທີ່ສຸດ ແຕ່ເຮົາກໍບໍ່ຕ້ອງການໃຫ້ມະນຸດລົງໂທດ ຂໍໃຫ້ພຣະຜູ້ເປັນເຈົ້າຊົງລົງໂທດ
ພວກເຮົາເທີນ ເພາະພຣະອົງຊົງພຣະມີກະຣຸນາ"
15 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງທຳໃຫ້ໂຣກລະບາດເກີດຂຶ້ນໃນອິສຣາເອນ ຕັ້ງແຕ່ເຊົ້າຈົນເຖິງເວລາຕາມທີ່ພຣະອົງຊົງ
ກຳນົດໄວ້ ຊາວອິສຣາເອນທົ່ວປະເທດໄດ້ຕາຍເຈັດຫມື່ນຄົນ
16 ໃນຂນະທີ່ທູດຂອງພຣະຜູ້ເປັນເຈົ້າກຳລັງທຳລາຍນະຄອນເຢຣູຊາເລັມຢູ່ນັ້ນ ພຣະຜູ້ເປັນເຈົ້າກໍຊົງປ່ຽນພຣະທັຍ ບໍ່ລົງ
ໂທດປະຊາຊົນ ພຣະອົງຈຶ່ງຊົງສັ່ງແກ່ທູດສວັນທີ່ກຳລັງຂ້າພວກເຂົາຢູ່ນັ້ນວ່າ "ພໍແລ້ວ ເຊົາສາ" ທູດສວັນໄດ້ຢູ່ໃກ້ບ່ອນ
ລານຟາດເຂົ້າຂອງອາຣູນນາ (Araunah) ຄົນເຢບຸສ
17 ເມື່ອດາວິດເຫັນທູດສວັນອົງທີ່ກຳລັງຂ້າປະຊາຊົນຢູ່ນັ້ນ ພຣະອົງກໍທູນຕໍ່ພຣະຜູ້ເປັນເຈົ້າວ່າ, "ຂ້າພຣະອົງເປັນຄົນອະ
ທັມ ແມ່ນຂ້າພຣະອົງເອງເປັນຄົນຜິດ ຄົນທຸກຈົນເຫລົ່ານີ້ບໍ່ໄດ້ເຮັດຜິດຫຍັງຫມົດ ຂໍພຣະອົງຊົງລົງໂທດຂ້າພຣະອົງ
ແລະຄອບຄົວຂອງຂ້າພຣະອົງເທີນ"

**ດາວິດໄດ້ສ້າງແທ່ນບູຊາ**

David's Altar on the Threshing Floor

(1 ຂຄວ 21:18-27)

18 ໃນວັນດຽວກັນນັ້ນ ກາດໄດ້ໄປຫາດາວິດ ແລະທູນຕໍ່ພຣະອົງວ່າ, "ຂໍພຣະອົງຂຶ້ນໄປລານຟາດເຂົ້າຂອງອາຣູນນາ
ແລ້ວສ້າງແທ່ນບູຊາຖວາຍແດ່ພຣະຜູ້ເປັນເຈົ້າທີ່ນັ້ນ"
19 ດາວິດກໍເຊື່ອຟັງຄຳສັ່ງພຣະຜູ້ເປັນເຈົ້າ ພຣະອົງຈຶ່ງເດີນທາງໄປຕາມທີ່ກາດໄດ້ທູນ

20 ເມື່ອອາຣູນນາຫລຽວລົງມາເຫັນເຈົ້າຊີວິດ ແລະພວກຂ້າຣາຊການຂອງພຣະອົງຂຶ້ນມາຫາເຂົາ ເຂົາກໍກົ້ມຂາບລົງຕໍ່
ຫນ້າກະສັດດາວິດ
21 ແລະທູນຖາມວ່າ, "ຂ້າແດ່ພຣະອົງ ເປັນຫຍັງພຣະອົງຈຶ່ງມາຢູ່ນີ້" ດາວິດຕອບວ່າ, "ເຮົາມາຂໍຊື້ລານຟາດເຂົ້າຂອງເຈົ້າ
ສ້າງແທ່ນບູຊາຖວາຍໃຫ້ແກ່ພຣະຜູ້ເປັນເຈົ້າ ເພື່ອໃຫ້ໂຣກລະບາດນີ້ຫມົດສິ້ນໄປ
22 ອາຣູນນາຈຶ່ງທູນວ່າ, "ຂ້າແດ່ພຣະອົງ ເຊີນພຣະອົງເອົາໂລດ ແລະຖວາຍໃຫ້ແກ່ພຣະຜູ້ເປັນເຈົ້າຕາມທີ່ພຣະອົງຊົງ
ຕ້ອງການ ນີ້ເດ ງົວສຳລັບເຜົາຖວາຍບູຊາເທິງແທ່ນບູຊາ ແລະນີ້ແມ່ນແອກ ແລະໄມ້ຟາດເຂົ້າສຳລັບໃຊ້ເຮັດຟືນ"
23 ອາຣູນນາໄດ້ມອບສິ່ງທັງຫມົດນີ້ໃຫ້ແກ່ກະສັດດາວິດ ແລະເວົ້າຕໍ່ພຣະອົງວ່າ, "ຂໍໃຫ້ພຣະຜູ້ເປັນເຈົ້າຂອງພຣະອົງຊົງ
ຮັບເອົາເຄື່ອງຖວາຍຂອງພຣະອົງນີ້"
24 ແຕ່ເຈົ້າຊີວິດກ່າວຕອບວ່າ, "ບໍ່ ເຮົາຈະຈ່າຍເງິນໃຫ້ເຈົ້າ ເຮົາຈະເອົາສິ່ງທີ່ບໍ່ໄດ້ຊື້ມາຖວາຍບູຊາແກ່ພຣະຜູ້ເປັນເຈົ້າ
ຂອງເຮົາບໍ່ໄດ້ ແລ້ວດາວິດກໍຊື້ລານຟາດເຂົ້າແລະງົວເຖິກເປັນເງິນຢູ່ຫ້າສິບເຊເກລ
25 ພຣະອົງໄດ້ສ້າງແທ່ນບູຊາຖວາຍແດ່ພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ ແລະໄດ້ຖວາຍເຄື່ອງເຜົາບູຊາ ແລະການບູຊາເພື່ອ
ຄວາມສາມັກຄີແກ່ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າກໍຊົງຕອບຄຳອ້ອນວອນຂອງດາວິດ ໂຣກລະບາດໃນຣາຊອານາ
ຈັກອິສຣາເອນຈຶ່ງຫມົດສິ້ນໄປ

---------------------------------